ກໍ່ສ້າງພັກ

ວາລະສານເຜີຍແຜ່, ແນະນຳວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ
ຂອງຄະນະຈັດຕັ້ງສູນກາງພັກ

ຊົມເຊີຍ ວັນສ້າງຕັ້ງຄະນະຈັດຕັ້ງສູນກາງພັກ ຄົບຮອບ 70 ປີ ຢ່າງສຸດໃຈ (25 ມີນາ 1955-25 ມີນາ 2025)

ສຳນັກງານ ຄະນະຈັດຕັ້ງສູນກາງພັກ ປະຈຸບັນ

ສະບັບ: 268

ປະຈຳປີ 2025/1

korsangphakmagazine@gmail.com

ໃນວັນທີ 13 ມັງກອນ 2025 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີປະກາດການແຕ່ງຕັ້ງຮັກສາການຫົວໜ້າກົມກໍ່ສ້າງພະນັກງານ ຂຶ້ນເປັນຫົວໜ້າກົມໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ນ. ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີບັນດາຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກົມ, ສູນ ແລະ ພະນັກງານພາຍໃນກົມກໍ່ສ້າງພະນັກງານເຂົ້າຮ່ວມ.

ໃນວັນທີ 03 ມັງກອນ 2025 ສະຫະພັນແມ່ຍິງ ຄະນະຈັດຕັ້ງສູນກາງພັກ ໄດ້ຈັດກອງປະຊຸມຜ່ານຮ່າງເນື້ອໃນ ແລະ ທາບທາມບຸກຄະລາກອນ ຮອບທີ I ເພື່ອກະກຽມກອງປະຊຸມໃຫຍ່ສະມາຊິກສະຫະພັນແມ່ຍິງ ຄະນະຈັດຕັ້ງສູນກາງພັກ ຄັ້ງທີ XII ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ນ. ບຸດສະດີ ທະນະເມືອງ ກຳມະການສູນກາງພັກ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີສະຫາຍ ນ. ສີບານ ສີສະອາດ ກຳມະການຄະນະພັກ ຜູ້ຊ່ວຍຊີ້ນຳວຽກແມ່ຍິງ, ມີປະທານ-ຮອງປະທານຄະນະບໍລິຫານງານສະຫະພັນແມ່ຍິງ ແລະ ສະມາຊິກສະຫະພັນແມ່ຍິງ ຄຈສພ ເຂົ້າຮ່ວມຢ່າງພ້ອມພຽງ.



ຕາງໜ້າຄະນະຈັດຕັ້ງສູນກາງພັກ ນຳພາໂດຍ ສະຫາຍ ປອ ວິສຸກ ພິມພິທັກ ກຳມະການຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະ ເຂົ້າອວຍພອນການນຳກະຊວງປ້ອງກັນປະເທດ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 76 ປີ (20/01/1949-20/01/2025) ແລະ ຕ້ອນຮັບໂດຍ ສະຫາຍ ພົ.ວ ກົງທອງ ສຸຂະວົງ ຮອງຫົວໜ້າກົມໃຫຍ່ເສນາທິການກອງທັບ ພ້ອມດ້ວຍຄະນະ (ວັນທີ 17 ມັງກອນ 2025).

ໃນວັນທີ 14 ມັງກອນ 2025 ສະຫາຍ ປອ ວິສຸກ ພິມພິທັກ ກຳມະການຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ສະຫາຍ ອາຕຸຊິ ການາຕະ ທີ່ປຶກສາອາວຸໂສພັນທະມິດຄູ່ຮ່ວມທາງທຸລະກິດລະດັບໂລກ ພ້ອມດ້ວຍຄະນະຮັບຜິດຊອບໂຄງການຈາກປະເທດຍີ່ປຸ່ນ ເນື່ອງໃນໂອກາດທີ່ສະຫາຍເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ.

ໃນເດືອນມັງກອນ 2025 ໄດ້ມີພິທີ ມອບ-ຮັບລົດຈຳນວນ 2 ຄັນ ຊຶ່ງມອບໂດຍຕາງໜ້າຈາກກະຊວງປ້ອງກັນປະເທດ ແລະ ກະຊວງກະສິກຳ-ປ່າໄມ້ ພາກສ່ວນລະ 01 ຄັນ ເປັນກຽດຮັບໂດຍ ສະຫາຍ ວຽນທອງ ສິງຄຳພັນ ກຳມະການຄະນະພັກ, ຫົວໜ້າຫ້ອງການ ຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະ. ເພື່ອປະກອບສ່ວນຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຕ່າງໆຂອງຄະນະຈັດຕັ້ງສູນກາງພັກ.

ຊາວໜຸ່ມຄະນະຈັດຕັ້ງສູນກາງພັກ ໄດ້ຈັດກອງປະຊຸມທາບທາມບຸກຄະລາກອນ ທີ່ຈະສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານຊາວໜຸ່ມຄະນະຈັດຕັ້ງສູນກາງພັກ ສະໄໝທີ X ຮອບທີ I ໂດຍການເປັນປະທານຂອງສະຫາຍ ສຸລິຍາ ພົມມີສິດ ເລຂາຄະນະບໍລິຫານງານຊາວໜຸ່ມ ຄຈສພ ແລະ ໃຫ້ກຽດເຂົ້າຮ່ວມຂອງສະຫາຍ ຄຳສອນ ສຸເທບມະນີ ຮອງຫົວໜ້າກົມຈັດຕັ້ງ-ພະນັກງານ ແລະ ມີສະມາຊິກຊາວໜຸ່ມພາຍໃນຄະນະຈັດຕັ້ງສູນກາງພັກເຂົ້າຮ່ວມຢ່າງພ້ອມພຽງ (ວັນທີ 23 ມັງກອນ 2025).

ບາງບົດຮຽນ ກ່ຽວກັບວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານຂອງພັກປະຊາຊົນ ປະຕິວັດລາວ ຕະຫຼອດ 70 ປີຜ່ານມາ

ໂດຍ: ພິດສະໄໝ ວິໄລຮັກ

ຄືດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ ວຽກງານຈັດຕັ້ງ ໄດ້ກຳເນີດເກີດຂຶ້ນໃນໄລຍະການປະຕິວັດຊາດປະຊາທິປະໄຕ ຕໍ່ສູ້ຕ້ານການຮຸກຮານຂອງພວກຈັກກະພັດຕ່າງດ້າວ ທັງແບບເກົ່າ-ແບບໃໝ່ ແລະ ລະບອບສັກດີນາ ໂດຍພາຍໃຕ້ການຊີ້ນຳໂດຍກົງຂອງ ສະຫາຍໄກສອນ ພົມວິຫານ ເລຂາທິການໃຫຍ່ຂອງພັກ (ໃນເວລານັ້ນ) ໄດ້ເປັນເຈົ້າການຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ ເປັນແນວທາງການຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ; ໃນໂຄງການ ການເມືອງຂອງພັກ ໄດ້ຊີ້ບອກໜ້າທີ່ພື້ນຖານທີ່ມີຄວາມໝາຍຕັດສິນກວ່າໝູ່ ແມ່ນເພີ່ມທະວີການກໍ່ສ້າງພັກໃຫ້ແໜ້ນແກ່ນ-ເຂັ້ມແຂງໃນທຸກດ້ານ ເພື່ອຈັດຕັ້ງຜັນຂະຫຍາຍຈິດໃຈຊີ້ນຳຂອງພັກດັ່ງກ່າວ, ຄະນະຈັດຕັ້ງສູນກາງພັກ ໄດ້ເປັນເສນາທິການປະກອບສ່ວນເຂົ້າໃນວຽກງານກໍ່ສ້າງພັກໃຫ້ໜັກແໜ້ນ, ເຂັ້ມແຂງ ໃນທຸກດ້ານ ເພື່ອເຮັດສຳເລັດໜ້າທີ່ການປະຕິວັດຊາດ ປະຊາທິປະໄຕ ໃນທົ່ວປະເທດ.

ເມື່ອຫວນຄືນມູນເຊື້ອການກຳເນີດ ແລະ ການເຕີບໃຫຍ່ຂອງຄະນະຈັດຕັ້ງສູນກາງພັກ ຄົບຮອບ 70 ປີ (25 ມີນາ 1955-25 ມີນາ 2025) ແມ່ນຕິດແໜ້ນກັບປະຫວັດມູນເຊື້ອການກຳເນີດ ແລະ ເຕີບໃຫຍ່ຂອງພັກ, ແມ່ນຄວາມຮຽກຮ້ອງຕ້ອງການອັນຈຳເປັນຂອງປະຫວັດສາດ ໃນພາລະກິດແຫ່ງການເຄື່ອນໄຫວປະຕິວັດປະເທດເຮົາ, ພັກເຮົາຍາມໃດກໍ່ເອົາໃຈໃສ່ ຕໍ່ວຽກງານກໍ່ສ້າງພັກ, ກໍ່ສ້າງພະນັກງານ ແລະ ວຽກງານປັບປຸງກົງຈັກການຈັດຕັ້ງ, ຖືວຽກນີ້ເປັນຂອດສຳຄັນໃນການນຳພາ ແລະ ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ທີ່ກຳນົດອອກໃນແຕ່ລະໄລຍະໃຫ້ປະກົດຜົນເປັນຈິງ. ເມື່ອຫວນຄືນມູນເຊື້ອອັນສຳຄັນດັ່ງກ່າວ ໄລຍະແຫ່ງການຕໍ່ສູ້ປະຕິວັດ ຖັນແຖວພະນັກງານຈັດຕັ້ງ ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງເຂົ້າໃນພາລະກິດປະຕິວັດ ແລະ ຍາດໄດ້ໄຊຊະນະດັ່ງນີ້:

1. ຍຶດໝັ້ນລັກສະນະຊົນຊັ້ນກຳມະກອນ, ເດັດດ່ຽວຕໍ່ສູ້ເພື່ອອຸດົມຄະຕິອັນສູງສົ່ງຂອງພັກ ຄືນຳເອົາຄວາມສະເໝີພາບ ແລະ ຄວາມຢູ່ດີກິນດີມາສູ່ປະຊາຊົນບັນດາເຜົ່າ ເຮັດໃຫ້ປະເທດຊາດມີຄວາມເປັນເອກະລາດ ແລະ ວັດທະນະຖາວອນ ຢ່າງແທ້ຈິງ

ຈາກພຶດຕິກຳຕົວຈິງແຫ່ງການກໍ່ສ້າງພັກຕະຫຼອດ 70 ປີຜ່ານມາ ເຫັນໄດ້ຢ່າງຈະແຈ້ງວ່າ ພັກເຮົາໄດ້ເອົາໃຈໃສ່ກໍ່ສ້າງພັກທັງ 4 ດ້ານໄປພ້ອມກັນ ເພື່ອແນໃສ່ເຮັດໃຫ້ພັກມີຄວາມເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ແບບແຜນນຳພາ; ພ້ອມກັນນັ້ນ, ກໍ່ໄດ້ເສີມຂະຫຍາຍລັກສະນະຊົນຊັ້ນ, ລັກສະນະນຳໜ້າ ແລະ ຄວາມສາມາດນຳພາຮອບດ້ານຂອງພັກ, ໃນນັ້ນໄດ້ເອົາໃຈໃສ່ກໍ່ສ້າງຖັນແຖວສະມາຊິກພັກ

ໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີອຸດົມການ ແລະ ຈິດໃຈປະຕິວັດ; ວຽກງານຂະຫຍາຍພັກ ໄດ້ເອົາໃຈໃສ່ດ້ານຄຸນນະພາບເປັນຫຼັກ, ກໍ່ສ້າງ ແລະ ເລືອກເຟັ້ນມະຫາຊົນຜູ້ທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນ, ປະຕິບັດຖືກຕ້ອງຕາມຂັ້ນຕອນ ທີ່ກຳນົດໄວ້ໃນກົດລະບຽບຂອງພັກ.

ຢຶດໝັ້ນທັດສະນະຊົນຊັ້ນ ແລະ ເປັນຕົວແທນທີ່ຈິງຮັກພັກດີ ຕໍ່ຜົນປະໂຫຍດຂອງຊົນຊັ້ນກຳມະກອນຊາວຜູ້ອອກແຮງງານທີ່ຮັກຊາດ ແລະ ຂອງຊາດລາວທັງໝົດ ເພື່ອບັນລຸວັດຖຸປະສົງນຳພາປວງຊົນລາວທັງຊາດ ດຳເນີນພາລະກິດປ່ຽນແປງໃໝ່, ແນໃສ່ສ້າງປະເທດລາວ ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ ຕາມຈຸດໝາຍສັງຄົມນິຍົມ.

ຢຶດໝັ້ນຫຼັກການລວມສູນປະຊາທິປະໄຕ, ສົ່ງເສີມລະບອບການຕຳນິຕິຊົມຕົນເອງ ແລະ ຕິຊົມກັນພາຍໃນພັກ, ປົກປັກຮັກສາຄວາມສາມັກຄີເປັນເອກະພາບພາຍໃນພັກເວົ້າລວມ ໂດຍສະເພາະແມ່ນພາຍໃນອົງການນຳຂອງພັກຕະຫຼອດມາ ອັນໄດ້ກາຍເປັນມູນເຊື້ອອັນປະເສີດຂອງພັກ; ປ້ອງກັນ ແລະ ສະກັດກັ້ນການກໍ່ພັກແຍກພວກ, ພະຍາດອາຍາສິດ, ຜະເດັດການອ້າຍດຽວ, ລະເລີຍຕໍ່ລະບຽບວິໄນ ແລະ ຂາດປະຊາທິປະໄຕ.

ໃນເງື່ອນໄຂໃໝ່ ພັກເຮົາໄດ້ມີແນວທາງເປີດກວ້າງການຮ່ວມມືກັບຕ່າງປະເທດ ແລະ ການເຊື່ອມໂຍງການປະຕິບັດກົນໄກເສດຖະກິດຕະຫຼາດ ທີ່ມີການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ ເພື່ອເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ແລະ ຫັນປະເທດເປັນອຸດສາຫະກຳ ແລະ ຫັນເປັນທັນສະໄໝ, ຢູ່ໃນເງື່ອນໄຂສະພາບແວດລ້ອມຢູ່ພາຍໃນປະເທດ ຍັງມີສິ່ງທ້າທາຍທົດສອບທີ່ສະລັບສັບຊ້ອນ, ເວລາດຽວກັນນັ້ນ ພວກຈັກກະພັດ ແລະ ອິດທິກຳລັງປໍລະປັກ ຍັງສືບຕໍ່ກົນອຸບາຍເລ່ຫຼ່ຽມທີ່ຫວັງທຳລາຍພັກເຮົາ, ບັນຫາການປົກປັກຮັກສາທາດແທ້ຊົນຊັ້ນກຳມະກອນ ຂອງພັກ ແລະ ລັກສະນະນຳໜ້າຕໍ່ສູ້ຂອງພັກ ມັນແມ່ນຄວາມຈຳເປັນພາວະວິໄສຂອງວຽກງານກໍ່ສ້າງພັກໃນໄລຍະໃໝ່.

2. ການດຳເນີນວຽກງານກໍ່ສ້າງພັກ ຕ້ອງຕິດແໜ້ນກັບຂະບວນການປະຕິວັດ ຂອງມະຫາຊົນ, ຮັບປະກັນການປະຕິບັດສິດເປັນເຈົ້າລວມໝູ່ ຂອງປະຊາຊົນ

ພັກເຮົາ ໄດ້ຮັບຮູ້ແຈ້ງວ່າ ການກໍ່ສ້າງພັກ ພັນທະພາບກຳມະກອນ-ຊາວນານັ້ນ. ກ່ອນອື່ນໝົດ ພັກຂອງຊົນຊັ້ນກຳມະກອນ ຕ້ອງມີແນວທາງການເມືອງທີ່ຖືກຕ້ອງ ເພື່ອປຸກລະດົມຊາວນາເຮັດການປະຕິວັດ, ຊາວນາເປັນກຳລັງປະຕິວັດອັນໃຫຍ່ຫຼວງກຳລັງໜຶ່ງ, ແຕ່ຊາວນາບໍ່ເປັນຕົວແທນໃຫ້ແກ່ແບບວິທີການຜະລິດອັນໜຶ່ງຕ່າງຫາກ. ຍ້ອນແນວນັ້ນ, ຊາວນາຈຶ່ງບໍ່ມີແນວທາງການເມືອງ ທີ່ເປັນເອກະລາດ ເພື່ອປົດປ່ອຍຕົນເອງໄດ້, ມີແຕ່ພັກຂອງຊົນຊັ້ນກຳມະກອນ ເຊິ່ງມີກອງນຳໜ້າທີ່ມີການຈັດຕັ້ງທີ່ມີຫຼັກໝັ້ນການເມືອງ, ມີອຸດົມການປະຕິວັດອັນໜຽວແໜ້ນສຸດກົກສຸດປາຍ, ມີທິດສະດີປະຕິວັດ ທີ່ມີວິທະຍາສາດຂອງລັດທິມາກ-ເລນິນ, ຮູ້ສົມທົບລະຫວ່າງຜົນປະໂຫຍດອັນພື້ນຖານຂອງຊົນຊັ້ນກຳມະກອນ ກັບຜົນປະໂຫຍດພື້ນຖານຂອງຊາວຜູ້ອອກແຮງງານ ແລະ ຂອງໝົດທັງຊາດ; ບົນພື້ນຖານດັ່ງກ່າວພັກ ຈຶ່ງວາງຈຸດໝາຍ ແລະ ວິທີຕໍ່ສູ້ປະຕິວັດອອກຢ່າງຖືກຕ້ອງ ແລະ ນຳພາຂະບວນການປະຕິວັດ ສາມາດປົດປ່ອຍປະເທດຊາດໄດ້ຢ່າງສົມບູນ ແລະ ປົດປ່ອຍຊາວນາໄດ້ຢ່າງເຖິງຖອງ. ປະທານໄກສອນ ພົມວິຫານ ໄດ້ຢືນຢັນວ່າ: "ພັກເຮົາໄດ້ກາຍເປັນພັກກຳອຳນາດ, ພັກມີຄວາມຮັບຜິດຊອບຕໍ່ທົ່ວ

ສັງຄົມ ແຕ່ພັກຈະປະຕິບັດພາລະກຳປະຫວັດສາດຂອງຕົນໄດ້ສຳເລັດ ຫຼື ບໍ່ ກໍ່ຕໍ່ເມື່ອພັກສາມາດປຸກລະດົມ, ເຕົ້າໂຮມຄວາມສາມັກຄີມະຫາຊົນ ເພື່ອປະຕິບັດແນວທາງທີ່ພັກໄດ້ວາງອອກນັ້ນໄດ້ ຫຼື ບໍ່ ". ເພາະສະນັ້ນ, ຍາມໃດກໍ່ໃກ້ຊິດຕິດແທດມະຫາຊົນ ເປັນຫ່ວງເປັນໃຍຕໍ່ຄວາມສຸກທຸກຂອງປະຊາຊົນ ເຮັດໃຫ້ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການປົວແປງໃຫ້ດີຂຶ້ນເລື້ອຍໆ.

ໃນຕົວຈິງແລ້ວ ວຽກງານກໍ່ສ້າງພັກ ຕ້ອງຕິດພັນກັບວຽກງານ ກໍ່ສ້າງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໂດຍສະເພາະແມ່ນການສຶກສາອົບຮົມອຸດົມຄະຕິປະຕິວັດໃຫ້ກຳລັງໄວໜຸ່ມ; ພ້ອມນັ້ນ ກໍ່ສ້າງກຳລັງໜຸ່ມທີ່ໄວ້ໃຈຂອງພັກ ເປັນແຫຼ່ງສະໜອງກຳລັງໜຸ່ມໃຫ້ແກ່ພັກ ແລະ ເປັນຜູ້ສືບທອດພາລະກິດປະຕິວັດຂອງພັກ ແລະ ຂອງຊາດ; ພັກເຮົາໄດ້ໃຫ້ຂໍ້ສະຫຼຸບວ່າ: ມະຫາຊົນເປັນບໍ່ເກີດ, ເປັນບ່ອນອີງ, ເປັນກຳລັງແຮງຂອງພັກ, ການປະຕິວັດແມ່ນພາລະກິດຂອງມະຫາຊົນ, ພັກເຮົາ ແມ່ນພັກທີ່ເກີດຂຶ້ນ, ເຕີບໃຫຍ່ໃນຂະບວນການຕໍ່ສູ້ຂອງປະຊາຊົນ; ຈາກປະຊາຊົນ, ເພື່ອປະຊາຊົນ ແລະ ເດີນຕາມແນວທາງຂອງມະຫາຊົນ; ພັກບໍ່ມີຈຸດປະສົງອື່ນໃດ ນອກຈາກການນຳເອົາຜົນປະໂຫຍດມາສູ່ປະຊາຊົນ, ດ້ວຍເຫດນັ້ນ ພັກເຮົາຈຶ່ງບໍ່ອາດຈະຕັດແຍກ ຫຼື ຫ່າງເຫີນຈາກມະຫາຊົນໄດ້ເປັນອັນຂາດ; ພັກຍາມໃດ ກໍ່ຕ້ອງໃກ້ຊິດຕິດແທດກັບມະຫາຊົນ, ສຶກສາອົບຮົມມະຫາຊົນ ປຸກລຸກຂົນຂວາຍມະຫາຊົນ, ຊ່ວຍເຫຼືອ ແລະ ນຳເອົາຜົນປະໂຫຍດຕົວຈິງມາໃຫ້ແກ່ມະຫາຊົນເທົ່ານັ້ນ ພັກເຮົາຈຶ່ງຈະເຊີດຊູບົດບາດການນຳພາ, ອິດທິພົນຂອງພັກ, ມະຫາຊົນຈຶ່ງເຊື່ອໝັ້ນ, ໄວ້ວາງໃຈ ແລະ ເດີນຕາມພັກ.

3. ວຽກງານຈັດຕັ້ງຂອງພັກ ຕ້ອງເລີ່ມຈາກໜ້າທີ່ການເມືອງຂອງພັກໃນແຕ່ລະໄລຍະ

ວຽກງານຈັດຕັ້ງຂອງພັກ ແມ່ນແນໃສ່ປະຕິບັດແນວທາງແຜນນະໂຍບາຍຂອງພັກໃຫ້ປະກົດຜົນເປັນຈິງ ແລະ ການກໍ່ສ້າງພັກທາງດ້ານແນວຄິດ ຕ້ອງບົນພື້ນຖານແນວທາງການເມືອງຂອງພັກ. ເນື່ອງຈາກວຽກງານກໍ່ສ້າງພັກທາງດ້ານການຈັດຕັ້ງ ແລະ ກໍ່ສ້າງພັກທາງແນວຄິດ ລ້ວນແຕ່ຮັບໃຊ້ແນວທາງການເມືອງຂອງພັກ, ມີການຈັດຕັ້ງທີ່ໜັກແໜ້ນເຂັ້ມແຂງ, ມີແນວຄິດທີ່ຖືກຕ້ອງໂປ່ງໃສ, ສາມາດເຮັດໃຫ້ຈິດໃຈເອກະລາດ, ເປັນເຈົ້າຕົນເອງ ແລະ ປະດິດສ້າງໃນການວາງແນວທາງການເມືອງ ເຂົ້າໃສ່ສະພາບຕົວຈິງຂອງການປະຕິວັດໃນແຕ່ລະໄລຍະ; ສິ່ງດັ່ງກ່າວ ໄດ້ພິສູດຈາກພຶດຕິກຳຕົວຈິງຂອງຂະບວນການປະຕິວັດ ເຊິ່ງໄດ້ກາຍເປັນປັດໄຈທີ່ສຳຄັນ ທັງແມ່ນປັດໄຈຕັດສິນ ໃນການກຳນົດແນວທາງການເມືອງ ອອກຢ່າງຖືກຕ້ອງ, ທັງມີຄວາມສະດຸ້ງໄວ ແລະ ມີໄຫວພິບໃນການປັບປຸງບູລະນະແນວທາງການເມືອງ ໃຫ້ແທດກັບການຜັນແປຂອງສະຖານະການຢູ່ພາຍໃນ ແລະ ການຜັນແປສະພາບການສາກົນ. ໃນການວາງແນວທາງການເມືອງນັ້ນ ພັກເຮົາຍັງໄດ້ເຄົາລົບກົດເກນແຫ່ງການຂະຫຍາຍຕົວຂອງສັງຄົມ, ໝູນໃຊ້ລັດທິມາກ-ເລນິນ ໂດຍມີການປະສານສົມທົບແໜ້ນ ກັບມູນເຊື້ອອັນດີງາມຂອງພັກ ແລະ ຂອງຊາດໄດ້ຢ່າງກົມກຽວ, ສາມາດປ້ອງກັນ ແລະ ສະກັດກັ້ນໄດ້ລັດທິຄຳພີ, ກົນຈັກ, ລອກແບບ, ບິດຮຽນນິຍົມ, ທັງນີ້ ກໍ່ເພື່ອປ້ອງກັນບໍ່ໃຫ້ແນວທາງການເມືອງ ຜິກອອກຈາກເສັ້ນທາງກ້າວໄປສູ່ຈຸດໝາຍສັງຄົມນິຍົມ ເຊິ່ງແມ່ນຈຸດໝາຍ, ອຸດົມການທີ່ພັກ ແລະ ປະຊາຊົນໄດ້ເລືອກເອົານັ້ນ. ສະນັ້ນ, ຈຶ່ງເວົ້າໄດ້ວ່າວຽກງານກໍ່ສ້າງພັກ ດ້ານການຈັດຕັ້ງ ແມ່ນຄວາມຈຳເປັນຢ່າງພາວະວິໄສ ແລະ ຕ້ອງເລີ່ມຈາກແນວທາງການເມືອງຂອງພັກ ເພາະວ່າການກໍ່ສ້າງພັກດ້ານການຈັດ

ຕັ້ງ ແລະ ແນວຄິດນັ້ນ ເນື້ອແທ້ແມ່ນກໍ່ສ້າງຖັນແຖວສະມາຊິກ-ພະນັກງານ. ໃນເມື່ອພັກກໍານົດແນວທາງການເມືອງທີ່ຖືກຕ້ອງ ຈະສ້າງຄວາມເຊື່ອໝັ້ນ, ສ້າງອຸດົມຄະຕິ ແລະ ຄຸນທາດທາງດ້ານຊົນຊັ້ນ ເຮັດໃຫ້ຖັນແຖວສະມາຊິກພັກ-ພະນັກງານ ມີຄວາມເຊື່ອໝັ້ນໄວ້ວາງໃຈ, ຢຶດໝັ້ນ ແລະ ເດີນຕາມແນວທາງການເມືອງຂອງພັກ ຢ່າງສະເໝີຕົ້ນສະເໝີປາຍ.

ສະນັ້ນ, ຄະນະພັກ ແລະ ການຈັດຕັ້ງພັກແຕ່ລະຂັ້ນ ຕ້ອງອີງໃສ່ແນວທາງການ ເມືອງຂອງພັກໃນແຕ່ລະໄລຍະ ເພື່ອປັບປຸງບູລະນະກົງຈັກການຈັດຕັ້ງຂອງຕົນໃຫ້ມີຄວາມປອດໄສ, ເຂັ້ມແຂງ ແລະ ໜັກແໜ້ນຍົກສູງຄວາມສາມາດຂອງຕົນເອງ.

4. ຢຶດໝັ້ນໃນຫຼັກການລວມສູນປະຊາທິປະໄຕ, ເອົາການຕໍານິຕິຊົມຕົນເອງ ແລະ ຕິຊົມກັນ ເປັນກົດເກນແຫ່ງການຂະຫຍາຍຕົວຂອງພັກ, ເປັນການປັບປຸງຄວາມສາມັກຄີເປັນເອກະພາບພາຍໃນພັກ

ພັກເຮົາໄດ້ຖືເອົາຫຼັກການລວມສູນປະຊາທິປະໄຕເປັນຫຼັກການ, ເປັນເຂັມຊີ້ທິດແຫ່ງການຈັດຕັ້ງ ແລະ ເຄື່ອນໄຫວຂອງພັກ; ໃນກົດລະບຽບຂອງພັກສະໄໝທີ I ກໍ່ໄດ້ເນັ້ນໜັກວ່າ: ພັກຈັດຕັ້ງຕາມຫຼັກການລວມສູນປະຊາທິປະໄຕ ເພື່ອຮັກສາໃຫ້ແໜ້ນ, ຄວາມສາມັກຄີເປັນເອກະພາບໃນດ້ານແນວຄິດ ແລະການກະທໍາພາຍໃນພັກ ແລະ ໃຊ້ວິທີຕິຊົມຕົນເອງ ແລະຕິຊົມກັນ ເປັນກົດເກນແຫ່ງການຂະຫຍາຍຕົວຂອງພັກເພື່ອດັດແປງຈຸດອ່ອນຂໍ້ບົກຜ່ອງ ແລະ ສົ່ງເສີມອັນດີ.

ຫຼັກການລວມສູນປະຊາທິປະໄຕ ເຊິ່ງເປັນຫຼັກການພື້ນຖານ ຂອງລັດທິມາກ-ເລນິນ ມີລັກສະນະປະຕິວັດ ແລະ ລັກສະນະວິທະຍາສາດຂອງຊົນຊັ້ນກໍາມະກອນ, ຕະຫຼອດໄລຍະ 70 ປີຜ່ານມາ ພັກໄດ້ຢືນຢັນໃນຫຼັກການດັ່ງກ່າວ, ທັງສຶກສາອົບຮົມໃຫ້ຖັນແຖວສະມາຊິກພັກ ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເຖິງສາຍພົວພັນແບບສັດຈະວິພາກ ລະຫວ່າງລວມສູນກັບປະຊາທິປະໄຕ, ໃນນີ້ໄດ້ເອົາໃຈໃສ່ເສີມຂະຫຍາຍປະຊາທິປະໄຕພາຍໃນພັກ ກໍ່ເພື່ອຮັບປະກັນການນໍາພາແບບລວມສູນຢ່າງຖືກຕ້ອງ, ກົງກັນຂ້າມ ຕ້ອງມີການນໍາພາແບບລວມສູນທີ່ຖືກຕ້ອງກໍ່ເປັນສິ່ງທີ່ຄໍ້າປະກັນໃຫ້ແກ່ການເສີມຂະຫຍາຍປະຊາທິປະໄຕ ໃຫ້ຖືກຕາມລະບຽບຫຼັກການ, ເພາະສະນັ້ນໃນກົດລະບຽບພັກ ສະໄໝທີ XI ຂອງພັກຈຶ່ງໄດ້ຂຽນວ່າ: **"ພັກປະຊາຊົນປະຕິວັດລາວ ຈັດຕັ້ງຕາມຫຼັກການລວມສູນປະຊາທິປະໄຕ, ນໍາພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ; ພັກມີລະບຽບວິໄນເຂັ້ມງວດ, ເຄົາລົບ ແລະ ປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການຂອງລັດ; ສະມາຊິກພັກສະເໝີພາບກັນບົນພື້ນຖານກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ".** ບົດຮຽນນີ້ມັນແມ່ນພຶດຕິກໍາທີ່ຊີ້ບອກວ່າ ບ່ອນໃດການຈັດຕັ້ງພັກ, ສະມາຊິກພັກ ໂດຍສະເພາະແມ່ນຄະນະນໍາຢຶດໝັ້ນ ແລະ ນໍາໃຊ້ໄດ້ດີ ແມ່ນການຈັດຕັ້ງພັກ ກໍ່ຄືສະມາຊິກພັກຢູ່ບ່ອນນັ້ນ ລ້ວນແຕ່ໄດ້ຮັບການປັບປຸງບູລະນະ ແລະ ຂະຫຍາຍຕົວດີ. ຄວາມສາມັກຄີເປັນເອກະພາບ ກໍ່ດີຂຶ້ນ ແລະ ໜັກແໜ້ນ, ກົງກັນຂ້າມຄະນະພັກ, ການຈັດຕັ້ງພັກ ແລະ ສະມາຊິກພັກ ໂດຍສະເພາະແມ່ນພະນັກງານນໍາພາຢູ່ບ່ອນໃດ ບໍ່ເຄົາລົບ ແລະ ປະຕິບັດຢ່າງຖືກຕ້ອງ ແລະ ເຂັ້ມງວດໃນຫຼັກການລວມສູນປະຊາທິປະໄຕ ຢູ່ບ່ອນນັ້ນເກີດພະຍາດອາຍາສິດ, ອ້າຍດຽວ, ລ່ວງອໍານາດ, ລະເມີດຕໍ່ກົດລະບຽບຂອງພັກ, ສ້າງກຸ່ມກ້ອນ, ພັກພວກຢູ່ພາຍໃນບໍ່ມີຄວາມສາມັກຄີເປັນເອກະພາບ ເຮັດໃຫ້ບົດບາດອິດທິພົນ ຂອງພັກຖືກເສື່ອມຖອຍ.

5. ຕ້ອງກໍາແໜ້ນທັດສະນະແນວທາງແຜນນະໂຍບາຍຂອງພັກ ຕໍ່ວຽກງານພະນັກງານຢ່າງຖືກຕ້ອງ

ພັກເຮົາຢືນຢັນຢູ່ສະເໝີວ່າ ວຽກງານພະນັກງານ ແມ່ນໜຶ່ງໃນວຽກງານກໍ່ສ້າງພັກ ແລະ ກໍ່ແມ່ນວຽກງານທີ່ເປັນຂໍກະແຈທີ່ສຳຄັນປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: **"ໃນພາລະກິດປ່ຽນແປງໃໝ່ທັງໝົດຂອງພັກເຮົານັ້ນ ການດັດແປງວຽກງານພະນັກງານເປັນຂອດທີ່ມີບົດບາດສຳຄັນທີ່ສຸດ, ມັນເປັນປັດໄຈໜຶ່ງທີ່ຕັດສິນໄຊຊະນະຂອງພາລະກິດປ່ຽນແປງໃໝ່ຂອງພັກເຮົາ".** ກ່ອນອື່ນໝົດວຽກງານພະນັກງານຕ້ອງຍຶດໝັ້ນທັດສະນະຊົນຊັ້ນຂອງພັກ, ຕ້ອງມີທັດສະນະຊົນຊັ້ນ ທີ່ຈະແຈ້ງກ່ຽວກັບບັນຫາພະນັກງານ ແລະ ວຽກງານພະນັກງານ; ກຳແໜ້ນຫຼັກການນຳພາຂອງພັກ ຕໍ່ວຽກງານພະນັກງານ ແລະ ການຄຸ້ມຄອງຖັນແຖວພະນັກງານ ຢ່າງລວມສູນເປັນເອກະພາບ; ວຽກງານພະນັກງານ ຕ້ອງຕິດພັນກັບແນວທາງ ແລະ ໜ້າທີ່ການເມືອງຂອງພັກ, ຕິດພັນກັບການຈັດຕັ້ງ ແລະ ຂະບວນການຂອງມະຫາຊົນໃນແຕ່ລະໄລຍະ ເພື່ອສ້າງແຜນກຳນົດພະນັກງານ, ວາງແຜນບຳລຸງ-ກໍ່ສ້າງ; ສ້າງແຜນຈັດວາງສັບຊ້ອນພະນັກງານ; ພ້ອມນັ້ນກໍ່ຕ້ອງມີວິໄສທັດເບິ່ງກວ້າງເຫັນໄກ ແລະ ສາມາດຄາດຄະເນສະພາບການລ່ວງໜ້າ ເພື່ອກຳນົດທິດທາງວິທີການໃນການບຳລຸງ, ກໍ່ສ້າງຖັນແຖວພະ ນັກງານໃນໄລຍະຍາວ, ທັງເປັນການປ້ອງກັນບໍ່ໃຫ້ມີຄວາມຜິດພາດໃນວຽກງານພະນັກງານ.

ການບຳລຸງ-ກໍ່ສ້າງພະນັກງານ ຕ້ອງເຮັດຢ່າງເປັນລະບົບຄົບຊຸດຢູ່ໃນແຕ່ລະຂັ້ນ, ແຕ່ລະຂະແໜງການຕ້ອງຈາກແຜນກຳນົດພະນັກງານ, ເປັນຕົ້ນແມ່ນການບຳລຸງ-ກໍ່ສ້າງຖັນແຖວພະນັກງານນຳພາ-ຄຸ້ມຄອງ ແລະ ພະນັກງານສືບທອດປ່ຽນແທນ ໃຫ້ມີຄວາມໜັກແໜ້ນ ທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ເປັນຜູ້ທີ່ຫ້າວຫັນໃນການຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ເປັນແບບຢ່າງນຳໜ້າໃນທຸກວຽກງານ, ຫັນເປັນໜຸ່ມເທື່ອລະກ້າວ ທັງນີ້ກໍເພື່ອຮັບປະກັນລັກສະນະສືບທອດປ່ຽນແທນ, ຕໍ່ເນື່ອງ ໃນສະເພາະໜ້າ ແລະ ຍາວນານ.

ການເລືອກເຟັ້ນ, ສັບຊ້ອນ, ຈັດວາງພະນັກງານ ຕ້ອງຊັດເຈນມີການສົມທົບລະຫວ່າງການທາບທາມຄວາມຄິດເຫັນຂອງມະຫາຊົນ ກັບຄວາມຄິດເຫັນຂອງໝູ່ຄະນະນຳພາ, ຕ້ອງມີຄວາມເໝາະສົມກັບຄົນ, ເໝາະກັບວຽກ, ເໝາະກັບບ່ອນ, ສອດຄ່ອງກັບຄວາມສາມາດ ແລະ ຄຸນສົມບັດຂອງພະນັກງານ. ໂດຍສະເພາະແມ່ນພະນັກງານຫົວຈັກຫຼັກແຫຼ່ງ, ຖ້າຫາກຈັດວາງພະນັກງານຫົວຈັກຫຼັກແຫຼ່ງເໝາະກັບຄົນ, ເໝາະກັບຖານະຕຳແໜ່ງ ແມ່ນຜູ້ເປັນຫົວໜ້າ ກໍ່ຈະເຮັດໃຫ້ມີການຫັນປ່ຽນໃໝ່ ແລະ ມີຄວາມກ້າວໜ້າຢ່າງຊັດເຈນ; ຕ້ອງກ້າເລື່ອນຊັ້ນໃຫ້ພະນັກງານ ທີ່ມີສະຕິບຸກໜ້າບືນຕົວ, ສະແຫວງຫາຄວາມກ້າວໜ້າ ແລະ ສູ້ຊົນເຮັດສຳເລັດໜ້າທີ່, ພ້ອມນັ້ນກໍ່ສືບຕໍ່ສ້າງເຂົາເຈົ້າຢ່າງຕໍ່ເນື່ອງ.

ຄົ້ນຄວ້າກຳນົດນະໂຍບາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ ຕໍ່ພະນັກງານ ບົນພື້ນຖານຄວາມເປັນເອກະພາບ, ຍຸຕິທຳ, ທ່ຽງທຳ, ມີເຫດ, ມີຜົນ, ເພື່ອເປັນການຊຸກຍູ້ສິ່ງເສີມຜູ້ທີ່ມີຄວາມຮູ້-ຄວາມສາມາດ, ສະຕິປັນຍາສະຫຼາດແຫຼມຄົມ ແລະ ມີຄຸນສົມບັດ, ມີຜົນສຳເລັດໃນໜ້າທີ່ວຽກງານ, ພ້ອມນັ້ນກໍ່ຕ້ອງເດັດດ່ຽວແກ້ໄຂຢ່າງທັນການ ຕໍ່ຜູ້ກະທຳຜິດ ຕໍ່ກົດລະບຽບຂອງພັກ, ກົດໝາຍຂອງລັດ, ລະເມີດຕໍ່ແນວທາງແຜນນະໂຍບາຍ ຂອງພັກ ແລະ ລັດ, ທັງຍ້ອງຍໍສັນລະເສີນຕໍ່ຜູ້ທີ່ມີຜົນງານ, ເອົາໃຈໃສ່ຊ່ວຍເຫຼືອກໍ່ສ້າງ ຜູ້ທີ່ມີຈຸດອ່ອນ, ຂໍ້ຂາດຕົກບົກຜ່ອງ ໃຫ້ມີຄວາມຕື່ນຕົວ ແລະ ກ້າວໜ້າ.

ເວລານີ້, ຍິ່ງກວ່າເວລາໃດໝົດ ຢືນຕໍ່ໜ້າຄວາມຮຽກຮ້ອງຕ້ອງການຂອງພາລະກິດປ່ຽນແປງໃໝ່ ເປັນ

ຕົ້ນແມ່ນການຫັນເປັນອຸດສາຫະກໍາ ແລະ ຫັນເປັນທັນສະໄໝ ແລະ ສ້າງລັດແຫ່ງກົດໝາຍເທື່ອລະກ້າວນັ້ນ ຕ້ອງມີຍຸດທະສາດໃນການກໍ່ສ້າງຖັນແຖວພະນັກງານ ເພື່ອຮັບຮອງພາລະກິດທີ່ພັກ ແລະ ປະຊາຊົນເຮົາ ໄດ້ເລືອກເອົານັ້ນ ກ້າວໄປສູ່ຜົນສໍາເລັດອັນຈົບງາມ.

6. ຕ້ອງສືບຕໍ່ປັບປຸງຄະນະຈັດຕັ້ງ ແລະ ຖັນແຖວພະນັກງານທີ່ເຮັດວຽກງານຈັດຕັ້ງຢູ່ໃນທຸກຂັ້ນ, ທຸກຂະແໜງການ ໃຫ້ມີຄວາມປອດໃສ, ໜັກແໜ້ນ, ເຂັ້ມແຂງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງພາລະກິດປ່ຽນແປງໃໝ່ ແລະ ວຽກງານກໍ່ສ້າງພັກໃນໄລຍະໃໝ່

ພັກເຮົາຢືນຢັນວ່າ: ຄະນະຈັດຕັ້ງຂັ້ນຕ່າງໆ ເປັນອົງການເສນາທິການໃຫ້ພັກ ແລະ ລັດໃນວຽກງານຈັດຕັ້ງກໍ່ສ້າງພັກ-ພະນັກງານ. ຕະຫຼອດໄລຍະເວລາແຫ່ງການຕໍ່ສູ້ກູ້ຊາດ ທີ່ຍືດເຍື້ອຍາວນານ ແລະ ທໍລະຫົດອົດທົນນັ້ນ ການຈັດຕັ້ງ ຫຼື ຄະນະຈັດຕັ້ງ ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ເຕີບໃຫຍ່ຂະຫຍາຍຕົວຕາມລໍາດັບມາ. ໄປພ້ອມໆກັນນັ້ນ ຖັນແຖວພະນັກງານທີ່ເຮັດວຽກງານຈັດຕັ້ງ, ກໍ່ສ້າງພັກ ແລະ ວຽກງານພະນັກງານ ກໍ່ໄດ້ເຕີບໃຫຍ່ເຂັ້ມແຂງຂຶ້ນເລື້ອຍໆ ນັບທັງດ້ານຈໍານວນ ແລະ ຄຸນນະພາບ. ບັນດາສະຫາຍທີ່ເຮັດວຽກງານຈັດຕັ້ງ, ກໍ່ສ້າງພັກ ແລະ ວຽກງານພະນັກງານ ໃນແຕ່ລະຣຸ່ນ, ແຕ່ລະສະໄໝ ແລະ ຢູ່ໃນແຕ່ລະຂັ້ນ. ສ່ວນໃຫຍ່ໄດ້ກາຍເປັນພະນັກງານທີ່ດີ ຢຶດໝັ້ນໃນອຸດົມຄະຕິຂອງພັກ, ຊື່ສັດບໍລິສຸດ, ມີຈິດໃຈບຸກບືນຜ່ານຜ່າຄວາມຫຍຸ້ງຍາກນາໆປະການ ເພື່ອເຮັດສໍາເລັດໜ້າທີ່-ທີ່ພັກ ແລະ ລັດມອບໝາຍໃຫ້, ມີຫຼາຍສະຫາຍ ໄດ້ກາຍເປັນແບບຢ່າງອັນໃສແຈ້ງ ໃຫ້ແກ່ພະນັກງານລຸ້ນສືບທອດ.

ໃນພາລະກິດປ່ຽນແປງໃໝ່ ເປັນຕົ້ນແມ່ນການຫັນເປັນອຸດສາຫະກໍາ ແລະ ຫັນເປັນທັນສະໄໝນັ້ນ ພັກເຮົາໄດ້ເນັ້ນໜັກວ່າ ຢາກດັດແປງຖັນແຖວພະນັກງານໄດ້, ກ່ອນອື່ນຕ້ອງດັດແປງພາກສ່ວນທີ່ເຮັດວຽກງານຈັດຕັ້ງ-ພະນັກງານ, ນັບແຕ່ຈິນຕະນາການໄປເຖິງແບບ ແຜນວິທີເຮັດວຽກ. ເພື່ອຮັບປະກັນບົດບາດເປັນເສນາທິການ ຊ່ວຍຄະນະພັກແຕ່ລະຂັ້ນ. ສະນັ້ນ, ພວກເຮົາຕ້ອງຮີບຮ້ອນປັບປຸງ ແລະ ພັດທະນາລະບົບກົງຈັກການຈັດຕັ້ງຂອງຄະນະຈັດຕັ້ງ ເປັນຕົ້ນແມ່ນກໍານົດພາລະບົດບາດຂອງຄະນະຈັດຕັ້ງແຕ່ລະຂັ້ນ, ແຕ່ລະຂະແໜງການໃຫ້ສອດຄ່ອງກັບກົນໄກໃໝ່ ທັງນີ້ກໍ່ເພື່ອເຮັດໃຫ້ຄະນະຈັດຕັ້ງ ກາຍເປັນອົງການເສນາທິການຂອງພັກຢ່າງແທ້ຈິງ ໃນການປັບປຸງກົງຈັກ, ເລືອກເຟັ້ນ, ກໍ່ສ້າງ, ຈັດວາງ ແລະ ນໍາໃຊ້ພະນັກງານຢ່າງມີປະສິດທິພາບສູງ; ພ້ອມນັ້ນ, ຕ້ອງປັບປຸງແບບແຜນວິທີເຮັດວຽກແບບປະຊາທິປະໄຕ, ວິທະຍາສາດແທດຕົວຈິງ, ຕິດແທດຮາກຖານ ແລະ ປະກອບດ້ວຍພະນັກງານທີ່ມີຄຸນສົມບັດ, ມີຄວາມສາມາດ, ມີແບບແຜນວິທີເຮັດວຽກແບບໃໝ່, ທັງນີ້ກໍ່ເພື່ອຕອບສະໜອງກັບການປ່ຽນແປງໃໝ່ວຽກງານຈັດຕັ້ງພະນັກງານ ໃນໄລຍະໃໝ່.

ເວົ້າລວມແລ້ວ ພະນັກງານທີ່ເຮັດວຽກງານຈັດຕັ້ງດ້ານຈໍານວນແມ່ນມີໜ້ອຍ, ຄວາມຮູ້, ຄວາມສາມາດຍັງຈໍາກັດເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການ, ແບບແຜນວິທີເຮັດວຽກ, ຄວາມຮູ້-ຄວາມເຂົ້າໃຈຕໍ່ບົດບາດ, ສິດໜ້າທີ່ຂອງຕົນ ແລະ ການຄົ້ນຄວ້າເຊື່ອມຊຶມບັນດານິຕິກໍາກ່ຽວກັບວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານບໍ່ທັນແໜ້ນ. ແຕ່ເຖິງຢ່າງໃດກໍ່ຕາມ ພະນັກງານຜູ້ທີ່ເຮັດວຽກງານຈັດຕັ້ງຕ້ອງເປັນເຈົ້າການຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງ ໃຫ້ກາຍເປັນພະນັກງານທີ່ດີໄດ້ຮັບຄວາມໄວ້ວາງໃຈຈາກສະມາຊິກພັກ-ພະນັກງານ ເພື່ອເຮັດສໍາເລັດໜ້າທີ່ການເມືອງຂອງພັກໃນໄລຍະໃໝ່...ຯ

ແນວຄິດ ປະທານ ໄກສອນ ພົມວິຫານ ກ່ຽວກັບການປັບປຸງອົງການບໍລິຫານລັດ ຂັ້ນທ້ອງຖິ່ນ

ໂດຍ: ກະຕ່າຍທອງ ຈູມທຸມມາລາ

ຂະບວນການຕໍ່ສູ້ກູ້ຊາດອັນລະອິດລະອ້ຽວຂອງບັນດາຜູ້ນຳ, ປະຊາຊົນລາວບັນດາເຜົ່າຜູ້ຮັກຊາດຕ້ານກັບຈັກກະພັດລ່າເມືອງຂຶ້ນ ທັງແບບເກົ່າ ແລະ ແບບໃໝ່ຫຼາຍທົດສະວັດ ຈົນກ້າວໄປເຖິງການໄດ້ຮັບໄຊຊະນະຢ່າງສະຫງ່າງາມ ແລະ ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 02 ທັນວາ 1975. ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກປະຊາຊົນ ປະຕິວັດລາວ, ບັນດາທ່ານຜູ້ນຳລາວເວົ້າລວມ, ເວົ້າສະເພາະ ປະທານ ໄກສອນ ພົມວິຫານ ໄດ້ສຸມທຸກສະຕິປັນຍາ, ເຫື່ອແຮງ ແລະ ກຳລັງວັງຊາຢ່າງບໍ່ຮູ້ອິດຮູ້ເມື່ອຍ ເຂົ້າໃນພາລະກິດປະຕິວັດ. ພ້ອມກັນນັ້ນ, ກໍ່ໄດ້ເປັນເຈົ້າການຮ່ວມກັບໝູ່ຄະນະການນຳຄົ້ນຄວ້າວາງແນວທາງ ແລະ ບູລະນະແນວທາງ ຂອງພັກເຮົາ ທັງໄລຍະຕໍ່ສູ້ກູ້ຊາດ ກໍ່ຄືໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາ ແມ່ນຖືກຕ້ອງ ໂດຍພື້ນຖານ ແລະ ເປັນປັດໄຈຮັບປະກັນໃຫ້ການປະຕິວັດຢູ່ປະເທດເຮົາໄດ້ຮັບໄຊຊະນະຢ່າງຕໍ່ເນື່ອງ ແລະ ເຕີບໃຫຍ່ຂຶ້ນເລື້ອຍໆ. ທັງໝົດນັ້ນ ລ້ວນແຕ່ແມ່ນການປະກອບສ່ວນອັນໃຫຍ່ຫຼວງ ແລະ ສຳຄັນ ຂອງປະທານ ໄກສອນ ພົມວິຫານ ເຊິ່ງເປັນຜູ້ທີ່ມີຄວາມສາມາດໃນການຄົ້ນຄວ້າທິດສະດີມາກ-ເລນິນ, ບົດຮຽນຂອງພັກອ້າຍ-ນ້ອງ ແລະ ປະເທດເພື່ອນມິດ ລວມທັງວິທະຍາສາດສັງຄົມ ທີ່ກ່ຽວຂ້ອງກັບການນຳພາ ຂອງພັກ. ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ ແມ່ນຜູ້ນຳສູງສຸດຂອງພັກ, ລັດ ແລະ ກຳລັງປະກອບອາວຸດ ເວລາໃດເພິ່ນກໍ່ເອົາໃຈໃສ່ຄົ້ນຄວ້າ ແລະ ໝູນໃຊ້ລັດທິມາກ-ເລນິນທີ່ເປັນທິດສະດີປະຕິວັດ ແລະ ວິທະຍາສາດຢ່າງປະດິດສ້າງ, ກຳນົດແນວທາງ, ແຜນນະໂຍບາຍ ທີ່ຖືກຕ້ອງ ແລະ ສອດຄ່ອງກັບສະພາບການຕົວຈິງຂອງການປະຕິວັດປະເທດເຮົາ ເພື່ອດຳເນີນການຕໍ່ສູ້ປົດປ່ອຍຊາດ ຍາດເອົາອຳນາດມາໃນກຳມືຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານຕາມທິດຊີ້ນຳ "ບົວບໍ່ໃຫ້ຊໍ້ານໍ້າບໍ່ໃຫ້ຂຸ່ນ ແຕ່ຈັບປາໄດ້ທັງໝອງ". ພ້ອມທັງສືບຕໍ່ບູລະນະລະບອບປະຊາທິປະໄຕ ປະຊາຊົນຢ່າງບໍ່ຢຸດຢັ້ງ.

ປະທານ ໄກສອນ ພົມວິຫານ ໄດ້ກ່າວວ່າ: ການແບ່ງງານ, ແບ່ງຂັ້ນນັ້ນມັນບໍ່ແມ່ນການແບ່ງສິດ, ແບ່ງເຂດແຄວ້ນ, ແບ່ງຊັບສົມບັດຂອງຊາດ. ສະນັ້ນ, ການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ແມ່ນແບ່ງຄວາມຮັບຜິດຊອບ ແລະ ຂອບເຂດສິດຂອງລັດຖະບານ ໃຫ້ໜ່ວຍງານຂອງຕົນ ທີ່ໄປເຮັດໜ້າທີ່ຄຸ້ມຄອງບໍລິຫານລັດ ປະຈຳຢູ່ເຂດປົກຄອງລະດັບຕ່າງໆ ຂອງປະເທດ (ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ ແລະ ນະຄອນ) ໂດຍສະເພາະແມ່ນເລີ່ມແຕ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ IV ຂອງພັກ (ປີ 1986) ມາເຖິງປະຈຸບັນ ຍ້ອນມີແນວທາງ

ປ່ຽນແປງໃໝ່ ທີ່ຖືກຕ້ອງ, ຍ້ອນມີຄວາມບາກບັ່ນສູ້ຊົນ ຂອງທົ່ວພັກ, ທົ່ວປວງຊົນ ແລະ ການຊ່ວຍເຫຼືອ ຂອງ ເພື່ອນມິດໃນໂລກ ພວກເຮົາຈຶ່ງຜ່ານຜ່າໄດ້ຄວາມຫຍຸ້ງ ຍາກ ແລະ ອຸປະສັກນາໆປະການ, ການບັນລຸຜົນສໍາເລັດ ອັນໃຫຍ່ຫຼວງ ເປັນພື້ນຖານ ແລະ ມີບາດກ້າວໜັກ ແໜ້ນທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ປ້ອງ ກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະ ເທດ. ເຖິງຢ່າງໃດກໍ່ຕາມ ພວກເຮົາຕ້ອງເຫັນວ່າ: ໃນ ການຕໍ່ສູ້ເພື່ອສ້າງອັນໃໝ່ ແລະ ລຶບລ້າງອັນເກົ່າທີ່ກີດ ໜ່ວງນັ້ນ ມັນຮຽກຮ້ອງໃຫ້ມີຄວາມໜັກແໜ້ນ, ມີ ການຊັ່ງຊາ ຢ່າງຮອບຄອບ ຕ້ອງຮັກສາສະຖຽນລະພາບ ເພື່ອການພັດທະນາ ຕາມທິດປ່ຽນແປງໃໝ່ ແລະ ໄດ້ ກໍານົດແນວທາງປ່ຽນແປງໃໝ່ ທາງດ້ານເສດຖະກິດ ຄື: ຫັນລະບອບເກືອກຸນໄປສູ່ລະບອບໄລ່ລຽງເສດຖະ ກິດ, ຫັນຈາກເສດຖະກິດທໍາມະຊາດກຸ້ມຕົນເອງ ໄປສູ່ ເສດຖະກິດສິນຄ້າຕາມກົນໄກຕະຫຼາດ ທີ່ມີການດັດ ສົມຂອງລັດ. ຕໍ່ຈາກນັ້ນ ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງພັກ (1991) ໄດ້ກໍານົດ ກ່ຽວກັບການປ່ຽນແປງ ໃໝ່ລະບົບການເມືອງ, ເພື່ອເຮັດໃຫ້ເນື້ອໃນຈິດໃຈ ຂອງແນວທາງປ່ຽນແປງໃໝ່ດັ່ງກ່າວ ເປັນອັນລະອຽດ, ຈະແຈ້ງ ແລະ ຄົບຖ້ວນສົມບູນຂຶ້ນນັ້ນ ປະທານ ໄກສອນ ພົມວິຫານ ໃນຖານະທີ່ເປັນຜູ້ນໍາການປະຕິວັດ, ທັງເປັນ ຜູ້ນໍາສູງສຸດຂອງພັກປະຊາຊົນ ປະຕິວັດລາວ ໄດ້ເອົາ ໃຈໃສ່ຢ່າງບໍ່ລົດລະ ແລະ ບໍ່ຮູ້ອິດຮູ້ເມື່ອຍ ໃນການຄົ້ນ ຄວ້າທາງດ້ານທິດສະດີ ແລະ ຊອກຮູ້ບົດຮຽນ ຂອງບັນ ດາປະເທດເພື່ອນມິດ ເພື່ອໝູນໃຊ້ເຂົ້າໃນເງື່ອນໄຂ ຕົວຈິງ ຂອງປະເທດເຮົາຢ່າງປະດິດສ້າງ ເວົ້າລວມ, ເວົ້າສະເພາະ ກໍ່ຄືແນວຄິດ, ທິດສະດີ ແລະ ບົດຮຽນອັນ ອຸດົມສົມບູນໃຫ້ແກ່ການປັບປຸງບູລະນະອົງການປົກ ຄອງທ້ອງຖິ່ນເປັນລໍາດັບສືບຕໍ່ມາ. ບັນດາແນວທາງ ນະໂຍບາຍ, ທິດສະດີ ແລະ ພຶດຕິກໍາ ເຫຼົ່ານັ້ນສະແດງ ອອກໃນບົດລາຍງານການເມືອງໃນແຕ່ລະໄລຍະ ສະໄໝກອງປະຊຸມໃຫຍ່ຂອງພັກປະຊາຊົນ ປະຕິວັດ ລາວ ເຊິ່ງບາງຈຸດ ໃນແນວຄິດຊີ້ນໍາ ຂອງປະທານ ໄກສອນ ພົມວິຫານ ທີ່ມີຕໍ່ວຽກງານການປົກຄອງທ້ອງຖິ່ນ ມີ ດັ່ງນີ້:

1). ແນວຄິດໄກສອນ ພົມວິຫານ ຕໍ່ກັບການກໍ່ສ້າງ ຮາກຖານການເມືອງ.

ການຫັນພະນັກງານລົງສູ່ທ້ອງຖິ່ນຮາກຖານ ຕິດແໜ້ນກັບປະຊາຊົນບັນດາເຜົ່າ ແມ່ນນະໂຍບາຍ ຫຼັກຂອງພັກ-ລັດເຮົາ ທີ່ເປັນການສ້າງບຸກຄະລາກອນ ຜູ້ສືບທອດໃຫ້ມີນໍ້າໃຈຮັກຊາດ, ມີຄວາມເສຍສະຫຼະ ເພື່ອສ່ວນລວມ, ເຂົ້າໃຈ ຕໍ່ສະພາບຄວາມເປັນຈິງຂອງ ບັນຫາທີ່ເກີດຂຶ້ນ ຢູ່ຮາກຖານທ້ອງຖິ່ນ ທັງເປັນການ ຝຶກຝົນຫຼໍ່ຫຼອມພະນັກງານເຫຼົ່ານັ້ນ ໃນຂະບວນການ ເຄື່ອນໄຫວຈັດຕັ້ງປະຕິບັດວຽກຕົວຈິງ. ໃນຂະນະ ດຽວກັນ ການສົ່ງພະນັກງານລົງຮາກຖານທ້ອງຖິ່ນ ກໍ່ຍັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ ນັ້ນອີກດ້ວຍ, ການເຮັດວຽກງານການເມືອງ-ແນວຄິດ ຕ້ອງຕິດພັນກັບການຊຸກຍູ້ຂະບວນການ ຂອງມະຫາຊົນ ໝາຍຄວາມວ່າ ມັນຕ້ອງແມ່ນການປຸກລະດົມຂົນ ຂວາຍມະຫາຊົນໃຫ້ເຂົ້າຮ່ວມວຽກງານຕ່າງໆເຊັ່ນ: ການຜະລິດ, ການສຶກສາ, ວັດທະນະທໍາ, ປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ, ການປະກອບສ່ວນ ໃນການປັບປຸງພັກ ແລະ ອໍານາດການປົກຄອງເປັນຕົ້ນ, ເວົ້າລວມ ແມ່ນຕ້ອງຕິດພັນກັບການປະຕິບັດໜ້າທີ່ ແຫ່ງການປົກປັກຮັກສາ ແລະ ສ້າງສາລະບອບໃໝ່ ນັ້ນເອງ.

ການປ່ຽນແປງໃໝ່ດ້ານແບບແຜນ ແລະ ວິທີ ນໍາພາຂອງພັກ ປະທານ ໄກສອນ ພົມວິຫານ ໄດ້ກ່າວ ວ່າ: ຕ້ອງຫັນລົງຮາກຖານຢ່າງແຂງແຮງ ຂຶ້ນໄປເຂດ ຊົນເຜົ່າພູດອຍ ແລະ ລົງໄປສູ່ຊົນນະບົດ ເພື່ອກໍ່ສ້າງ ຮາກຖານໃຫ້ເຂັ້ມແຂງຮອບດ້ານ ນັບທັງດ້ານການ ເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ, ພວກເຮົາທຸກຄົນ ຕ້ອງ ເຫັນນໍາກັນ ຢ່າງເປັນເອກະພາບວ່າ ການຫັນລົງຮາກ

ຖານນັ້ນ ແມ່ນວິທີການສັກສິດໃນການກໍ່ສ້າງພັກໃຫ້ໜັກແໜ້ນ ເຂັ້ມແຂງ. ພ້ອມກັນນັ້ນ ກໍ່ເປັນວິທີການທີ່ແທດຕົວຈິງ ເພື່ອກໍ່ສ້າງ ແລະ ຝຶກຝົນຫຼໍ່ຫຼອມພະນັກງານ, ສະມາຊິກພັກ ໃນຂະບວນການຂອງມະຫາຊົນ, ການຫັນລົງຮາກຖານຍັງແມ່ນວິທີທີ່ດີ ແລະ ທັນການກວ່າໝູ່ ເພື່ອນຳເອົາແນວທາງແຜນນະໂຍບາຍ ແລະ ນະໂຍບາຍ ຂອງພັກ ເຂົ້າສູ່ການຈັດຕັ້ງປະຕິບັດໃນຕົວຈິງ, ມີແຕ່ລົງເຖິງຮາກຖານເທົ່ານັ້ນ ຈຶ່ງຈະເສີມຂະຫຍາຍໄດ້ປະຊາທິປະໄຕໃນໝູ່ປະຊາຊົນ, ໃຫ້ປະຊາຊົນ ໄດ້ເຂົ້າຮ່ວມປຶກສາຫາລື ກ່ຽວກັບແນວທາງນະໂຍບາຍຂອງພັກ ແລະ ການຈັດຕັ້ງຜັນຂະຫຍາຍນະໂຍບາຍດັ່ງກ່າວ ຢູ່ທ້ອງຖິ່ນຮາກຖານຂອງເຂົາເຈົ້າ ເພື່ອປະກອບສ່ວນເຂົ້າໃນການກໍ່ສ້າງປັບປຸງພັກ ແລະ ອຳນາດການປົກຄອງ, ມີແຕ່ລົງໃກ້ຊິດຕິດແທດກົ້ງເກືອກລີເລືອນຳປະຊາຊົນເທົ່ານັ້ນ ພວກເຮົາຈຶ່ງຮູ້ໄດ້ແນວຄິດຈິດໃຈ, ຄວາມຂັດຂ້ອງໝອງໃຈ, ການຕຳນິຕິຊົມ ກ່ຽວກັບວຽກງານຂອງພັກ ແລະ ອຳນາດການປົກຄອງຂອງປະຊາຊົນ.

2). ກ່ຽວກັບການປັບປຸງກົງຈັກການຈັດຕັ້ງຂັ້ນທ້ອງຖິ່ນ.

ເພື່ອເພີ່ມທະວີການນຳພາ ຂອງພັກ, ຄວາມສັກສິດ ໃນການຄຸ້ມຄອງລັດ ແລະ ເສີມຂະຫຍາຍບົດບາດເປັນເຈົ້າ ຂອງບັນດາອົງການຈັດຕັ້ງມະຫາຊົນ ປະທານ ໄກສອນ ພົມວິຫານ ໄດ້ຍົກໃຫ້ເຫັນເຖິງການສັບຊ້ອນດັດແປງໂຄງປະກອບການຈັດຕັ້ງອຳນາດການປົກຄອງຢູ່ຂັ້ນສູນກາງ ໄດ້ສັບຊ້ອນການຈັດຕັ້ງບາງກະຊວງ, ພະແນກການຢູ່ສູນກາງຄືນໃໝ່ ເພື່ອຮັບປະກັນໃຫ້ການຈັດຕັ້ງເຫຼົ່ານີ້ໄດ້ເຄື່ອນໄຫວຕາມພາລະບົດບາດຢ່າງເຕັມສ່ວນ. ນອກນັ້ນ, ປະທານ ໄກສອນ ພົມວິຫານ ຍັງໄດ້ຮັບຮູ້ ແລະ ເຂົ້າໃຈແຈ້ງວ່າ: ການປັບປຸງບູລະນະການຈັດຕັ້ງກົງຈັກລັດຂັ້ນຕ່າງໆເປັນວຽກງານໜຶ່ງທີ່ຮີບດ່ວນທີ່ສຸດໃນປະຈຸບັນ ແລະ ຖ້າພວກເຮົາເຮັດວຽກນີ້ບໍ່ໄດ້ດີຈະບໍ່ສາມາດເຮັດໃຫ້ມະຕິກອງປະຊຸມໃຫຍ່ໄດ້ຮັບການຜັນຂະຫຍາຍ ໃຫ້ເກີດຜົນຕົວຈິງ. ຕ້ອງເອົາໃຈໃສ່ເປັນພິເສດ ເຖິງການບູລະນະກົງຈັກລັດໃຫ້ກະທັດຮັດ ແລະ ເຂັ້ມແຂງ, ຫຼຸດຜ່ອນຂອດ ລະຫວ່າງກາງ, ຫຼີກເວັ້ນການເຮັດວຽກກ້າວກ່າຍກັນ, ຫຼຸດຜ່ອນຈຳນວນພົນ ໃນການຈັດຕັ້ງ, ແກ້ໄຂພະຍາດອາດຍາສິດ ແລະ ເຄື່ອນໄຫວ ຢ່າງມີປະສິດທິຜົນກວ່າເກົ່າ. ການຈັດຕັ້ງກົງຈັກລັດຂອງພວກເຮົາ ຈະຕ້ອງເຮັດເປັນຮູບທາດ, ຢູ່ທາງເທິງເບົາບາງ ແລະ ຍອດຍິ່ງ, ມີຄວາມສາມາດ ໃນການຄົ້ນຄວ້າ, ຊອກຫາແນວທາງ, ແຜນນະໂຍບາຍ ແລະ ທັດສະນະສະເໜີ ຕໍ່ສູນກາງ, ສາມາດວາງລະບຽບ, ກົດໝາຍ ກ່ຽວກັບການຄຸ້ມຄອງລັດ ແລະ ຄຸ້ມຄອງສັງຄົມ ໃນລະດັບມະຫາພາກໄດ້.

ປະທານ ໄກສອນ ພົມວິຫານ ໄດ້ໃຫ້ທິດຊີ້ນຳວ່າ: ຕ້ອງສ້າງກົງຈັກ ທີ່ກະທັດຮັດ, ເບົາບາງ ແຕ່ເຂັ້ມແຂງ ແລະ ມີປະສິດທິພາບ ໂດຍປະຕິບັດຕາມຫຼັກການດັ່ງກ່າວ ປະທານ ໄກສອນ ພົມວິຫານ ໄດ້ສະເໜີວ່າ: ອົງການບໍລິຫານລັດຂອງທ້ອງຖິ່ນ, ແຂວງ, ເມືອງ ແມ່ນໃຫ້ປະກອບສ້າງຂຶ້ນ ໂດຍອີງຕາມຂະໜາດຂອງພົນລະເມືອງ, ພູມີປະເທດ, ສະພາບເສດຖະກິດ-ສັງຄົມ, ບໍ່ຄວນເຮັດຕາຍຕົວຕາມແບບກົງຈັກຢູ່ຂັ້ນສູນກາງ, ບໍ່ຈຳເປັນຕ້ອງໃຫ້ຄືກັນ ລະຫວ່າງແຂວງຕ່າງໆນຳກັນ ຫຼື ລະຫວ່າງແຕ່ລະເມືອງນຳກັນໃນແຂວງດຽວ, ກ່ຽວກັບກົງຈັກຂອງເມືອງ ຕ້ອງໄດ້ເພີ່ມທະວີທາງດ້ານຄຸນນະພາບຫຼາຍກວ່າເກົ່າ ແລະ ຕ້ອງມີກົນໄກເຄື່ອນໄຫວທີ່ຕິດພັນກັບຮາກຖານ. ການຈັດຕັ້ງທີ່ປະທານ ໄກສອນ ພົມວິຫານ ໄດ້ກ່າວໄວ້ວ່າ: ກົງຈັກຕ້ອງກະທັດຮັດ, ເບົາບາງ ແລະ ເຂັ້ມແຂງນັ້ນ, ໃນປີ 1991 ເຊິ່ງເປັນປີດຽວກັນກັບການປະກາດໃຊ້ລັດຖະທຳມະນູນສະບັບທຳອິດ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກົງຈັກການຈັດຕັ້ງໄດ້ຮັບການທົບທວນ ແລະ ປັບປຸງຄືນໃໝ່, ອົງການນິຕິບັນຍັດໄດ້ປ່ຽນຈາກສະພາປະຊາຊົນສູງສຸດ ມາເປັນສະພາແຫ່ງຊາດ ແລະ ລົບລ້າງສະພາປະຊາຊົນທ້ອງຖິ່ນ (ສະພາປະຊາຊົນ

ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ). ພ້ອມນັ້ນ, ອົງການບໍລິຫານລັດຂັ້ນທ້ອງຖິ່ນ ກໍ່ໄດ້ຍຸບຂັ້ນຕາແສງ ຮັກສາໄວ້ສາມຂັ້ນຄື: ແຂວງ, ເມືອງ ແລະ ບ້ານ, ໄດ້ຄົ້ນຄວ້າປັບປຸງແປງຮູບແບບການປົກຄອງ-ບໍລິຫານ ຈາກຮູບແບບຄະນະກຳມະການປົກຄອງ ໂດຍມີປະທານຄະນະກຳມະການປົກຄອງ ເປັນຫົວໜ້າ ມາເປັນຮູບແບບເຈົ້າແຂວງ, ເຈົ້າເມືອງ ແລະ ນາຍບ້ານ. ຕໍ່ຈາກນັ້ນ ໃນປີ 1994 ເຊິ່ງເປັນໄລຍະທ້າຍ ຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງພັກ, ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ກໍ່ໄດ້ຮັບການສຶກສາ, ຄົ້ນຄວ້າ ແລະ ໄດ້ກາຍເປັນຮູບປະທຳ ພ້ອມທັງປະກາດໃຊ້ຢ່າງເປັນທາງການ ໃນປີ 2003 ກອງປະຊຸມໃຫຍ່ຂອງພັກ ຄັ້ງທີ VII ໄດ້ຢືນຢັນເຖິງຄວາມຈຳເປັນ ໃນການສືບຕໍ່ປັບປຸງກົງຈັກ ໃຫ້ມີຄວາມກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິຜົນ ໂດຍມີຄາດໝາຍລວມວ່າ: ປັບປຸງອົງການບໍລິຫານລັດທັງສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມກະທັດຮັດ, ເຂັ້ມແຂງ ຮັບປະກັນໃຫ້ກົງຈັກມີສະຖຽນລະພາບ, ເຄື່ອນໄຫວມີປະສິດທິຜົນສູງ, ສຳລັບຢູ່ຂັ້ນທ້ອງຖິ່ນນັ້ນ ແມ່ນຕ້ອງໄດ້ຄົ້ນຄວ້າປັບປຸງອົງການປົກຄອງທ້ອງຖິ່ນຄືນໃໝ່ໃຫ້ຖືກຕ້ອງຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ເງື່ອນໄຂການສ້າງຕັ້ງຕາມກົດໝາຍ ກຳນົດເທື່ອລະກ້າວ ເພື່ອຮັບປະກັນໃຫ້ແຂວງ, ເມືອງ ແລະ ບ້ານ ມີຄວາມສາມາດພຽງພໍໃນການພັດທະນາທ້ອງຖິ່ນ ດ້ວຍການປັບປຸງສັບຊ້ອນບາງຫ້ອງການ ຂອງຂະແໜງການສາຍຕັ້ງຢູ່ຂັ້ນເມືອງຈຳນວນໜຶ່ງຄືນໃໝ່ ຕາມທິດຫ້ອງການໜຶ່ງ ເຮັດຫຼາຍວຽກ, ມີຫຼາຍກະຊວງຊີ້ນຳ, ການສ້າງຕັ້ງກົງຈັກຢູ່ຂັ້ນທ້ອງຖິ່ນອີງໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງວຽກງານ ແລະ ອີງໃສ່ສະພາບຈຸດພິເສດຂອງແຕ່ລະທ້ອງຖິ່ນ, ບາງກໍລະນີ ບໍ່ຈຳເປັນຕ້ອງເຮັດເປັນເອກະພາບກັນໝົດທຸກວຽກ ແລະ ບໍ່ຈຳເປັນຕ້ອງຈັດຕັ້ງ ໃຫ້ມີຄືກັນກັບກົງຈັກການຈັດຕັ້ງຢູ່ຂັ້ນສູນກາງ.

3). ກ່ຽວກັບການແບ່ງຂັ້ນຄຸ້ມຄອງ.

ການແບ່ງງານ, ແບ່ງຂັ້ນຄຸ້ມຄອງ ຈະໄດ້ຮັບການປະຕິບັດຢ່າງດີ ຫຼື ບໍ່ນັ້ນ ແມ່ນຂຶ້ນກັບຄວາມສາມາດຄຸ້ມຄອງໃນຂັ້ນທ້ອງຖິ່ນ ແລະ ຄວາມຮັບຜິດຊອບ, ສິດທີ່ໄດ້ມອບໃຫ້ທ້ອງຖິ່ນນັ້ນ ຕ້ອງເຮັດໃຫ້ຫຼ້ອນ, ເປັນເຈົ້າການ ໃນການຊອກຮູ້ຄົ້ນຄວ້າຮ່ຳຮຽນ, ຕ້ອງຄຸ້ມຄອງເສດຖະກິດ, ຊີວິດການເປັນຢູ່ຂອງທ້ອງຖິ່ນຕົນໃຫ້ໄດ້. ຖ້າມອບສິດ ແລະ ຄວາມຮັບຜິດຊອບໃຫ້ແລ້ວແຕ່ຫາກບໍ່ ມີຜູ້ຮັບຜິດຊອບ ແລະ ເຮັດມະລຸ່ມມະລ້ອຍ, ຊະຊາຍ ກໍ່ໝາຍຄວາມວ່າການແບ່ງຂັ້ນ, ແບ່ງງານ, ການມອບຄວາມຮັບຜິດຊອບເຫຼົ່ານັ້ນ ກໍ່ຈະບໍ່ມີປະສິດທິຜົນຫຍັງ, ຊ້ຳບໍ່ໜຳຍັງເປັນໄພອັນຕະລາຍອີກດ້ວຍ. ດ້ວຍເຫດນັ້ນ ຖ້າຢາກເຮັດໃຫ້ການແບ່ງຂັ້ນຄຸ້ມຄອງ ໄດ້ດຳເນີນໄປຢ່າງມີຄຸນນະພາບ ພວກເຮົາຕ້ອງເອົາໃຈໃສ່ເປັນພິເສດຕໍ່ການກໍ່ສ້າງການຈັດຕັ້ງ ໃຫ້ໜັກແໜ້ນ, ກໍ່ສ້າງຖັນແຖວພະນັກງານ ທີ່ມີຄວາມສາມາດ ໄປເພີ່ມຄວາມເຂັ້ມແຂງໃຫ້ແກ່ບັນດາທ້ອງຖິ່ນ ດັ່ງນັ້ນ, ປະທານໄກສອນ ພົມວິຫານ ໄດ້ໃຫ້ທິດຊີ້ນຳວ່າ: ການແບ່ງຂັ້ນຄຸ້ມຄອງ ຕ້ອງຮັບປະກັນລະດັບຄາດໝາຍ 4 ປະການດັ່ງນີ້:

ອັນທີໜຶ່ງ: ໃນເວລາແບ່ງ ແລະ ມອບຄວາມຮັບຜິດຊອບນັ້ນ, ຕ້ອງແບ່ງ ແລະ ມອບພາຫະນະ, ວັດຖຸ ແລະ ກຳນົດຜົນປະໂຫຍດ ໃຫ້ແກ່ທ້ອງຖິ່ນໄປພ້ອມໆກັນ, ສ້າງທຸກເງື່ອນໄຂໃຫ້ແຕ່ລະຂັ້ນ ທີ່ໄດ້ຮັບການມອບໝາຍ ແລະ ແບ່ງຂັ້ນໃຫ້ດຳເນີນວຽກງານຄຸ້ມຄອງຂອງຕົນເປັນຢ່າງດີ.

ອັນທີສອງ: ຢາກແບ່ງຂັ້ນຄຸ້ມຄອງໄດ້ ຕ້ອງມີກົງຈັກ ແລະ ພະນັກງານ ຕ້ອງມີຄົນ ທີ່ມີຄວາມສາມາດຄຸ້ມຄອງ, ຮູ້ຄົ້ນຄວ້າ ແລະ ຮັບເອົາແນວທາງ, ແຜນນະໂຍບາຍ, ຮູ້ຈັກຄົ້ນຄວ້າ ແລະ ໝູນໃຊ້ແນວທາງນະໂຍບາຍ ຂອງພັກເຂົ້າໃນສະພາບການຕົວຈິງຂອງທ້ອງຖິ່ນຢ່າງລະອຽດ, ບໍ່ແມ່ນວ່າ ຈະປະໃຫ້ແຜນຮ່າງທີ່ວາງອອກນັ້ນກາຍເປັນແຜນຮ່າງ ຂອງທອງຖິ່ນ ໂດຍກ່າຍເອົາຂອງສູນກາງທັງໝົດ. ຖ້າຫາກບໍ່ທັນມີຄົນເຮັດ

ກໍ່ບໍ່ແບ່ງຂັ້ນໃຫ້ເຂົາເຈົ້າເຮັດ, ບ່ອນໃດ, ຂັ້ນໃດເກັ່ງກໍ່ແບ່ງໃຫ້ຫຼາຍ, ບ່ອນໃດ, ຂັ້ນໃດ ຫາກບໍ່ທັນມີເງື່ອນໄຂເຮັດໄດ້ຫຼາຍກໍ່ແບ່ງໃນລະດັບພໍດີ ຫຼື ມີບາງດ້ານກໍ່ບໍ່ຄວນແບ່ງໃຫ້ເທື່ອ.

ອັນທີສາມ: ການແບ່ງານ, ແບ່ງຂັ້ນນັ້ນ ມັນບໍ່ແມ່ນການແບ່ງສິດ, ແບ່ງເຂດແຄວ້ນ, ແບ່ງຊັບສົມບັດຂອງຊາດ, ສູນກາງມອບໃຫ້ທ້ອງຖິ່ນແລ້ວປະປ່ອຍໃຫ້ທ້ອງຖິ່ນຢາກເຮັດແນວໃດກໍ່ເຮັດ ສູນກາງເມີນເສີຍຢູ່, ຖ້າຫາກວ່າແມ່ນການຄຸ້ມຄອງຕາມຫຼັກການລວມສູນປະຊາທິປະໄຕ ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ.

ອັນທີສີ່: ການແບ່ງ ແລະ ມອບຄວາມຮັບຜິດຊອບ, ມອບສິດໃຫ້ແກ່ທ້ອງຖິ່ນ, ເປີດກວ້າງປະຊາທິປະໄຕ ໃຫ້ແກ່ທ້ອງຖິ່ນ, ເສີມຂະຫຍາຍສະຕິເປັນເຈົ້າໃນການຄຸ້ມຄອງເສດຖະກິດ ຢູ່ທ້ອງຖິ່ນ ແລະ ຮາກຖານຢ່າງແທ້ຈິງ ແຕ່ກໍ່ບໍ່ຄວນປະໃຫ້ທ້ອງຖິ່ນ ແລະ ຮາກຖານຢາກເຮັດຫຍັງກໍ່ເຮັດຕາມໃຈ ສູນກາງຕ້ອງຜ່ານຈຸດສູງແຫ່ງການບັນຊາ, ລະບົບລະບອບການ, ນະໂຍບາຍ ແລະ ລະບົບການກວດກາ, ກວດກາຈຶ່ງຈະຮູ້ຈັກທຸກວຽກງານຂອງທ້ອງຖິ່ນ ແລະ ກໍາໄດ້ບັນດາບົດຮຽນອັນດີຢູ່ແຕ່ລະທ້ອງຖິ່ນ, ແຕ່ລະຮາກຖານເພື່ອສະຫຼຸບສັງລວມຄືນ ແລະ ເຜີຍແຜ່ໄປທົ່ວປະເທດ. ພ້ອມກັນນັ້ນ, ກໍ່ຕ້ອງຮູ້ອັນຜິດ ແລະ ຈຸດອ່ອນ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດຢູ່ບ່ອນນັ້ນ ເພື່ອຈະມີວິທີການດັດແກ້ໃຫ້ທັນການ. ໃນບົດຄໍາເຫັນຕອນໜຶ່ງຂອງປະທານ ໄກສອນ ພົມວິຫານ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ ໄດ້ກ່າວວ່າ: ການແບ່ງງານ, ແບ່ງຂັ້ນນັ້ນມັນບໍ່ແມ່ນການແບ່ງສິດ, ແບ່ງເຂດແຄວ້ນ, ແບ່ງຊັບສົມບັດ ຂອງຊາດ. ສະນັ້ນ, ການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ແມ່ນການແບ່ງຄວາມຮັບຜິດຊອບ ແລະ ຂອບເຂດສິດຂອງລັດຖະບານ ລົງໃຫ້ໜ່ວຍງານຂອງຕົນທີ່ໄປເຮັດໜ້າທີ່ຄຸ້ມຄອງບໍລິຫານລັດ ປະຈໍາຢູ່ເຂດການປົກຄອງລະດັບຕ່າງໆຂອງປະເທດ (ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ) ເທົ່ານັ້ນ.

ໃນໄລຍະຜ່ານມາ, ພວກເຮົາໄດ້ດໍາເນີນການແບ່ງຂັ້ນຄຸ້ມຄອງຕາມຄໍາສັ່ງແນະນໍາ ຂອງນາຍົກລັດຖະມົນຕີສະບັບເລກທີ 01/ນຍ, ລົງວັນທີ 11 ມີນາ 2000 ວ່າດ້ວຍການສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍແຜນການງົບປະມານ ແລະ ສ້າງບ້ານ ເປັນຫົວໜ່ວຍພື້ນຖານຈັດຕັ້ງປະຕິບັດ; ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ໄດ້ວາງນະໂຍບາຍ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ ກໍ່ໄດ້ຮັບການສືບຕໍ່ຈັດຕັ້ງປະຕິບັດ, ກົມການເມືອງສູນກາງພັກໄດ້ອອກມະຕິ ສະບັບເລກທີ 03/ກມສພ ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ແລະ ໄດ້ດໍາເນີນການເຮັດທົດລອງ ບົນພື້ນຖານຜົນສໍາເລັດ ຂອງການເຮັດທົດລອງ ກົມການເມືອງສູນກາງພັກ ຈຶ່ງໄດ້ມີມະຕິ ເລກທີ 25/ກມສພ, ລົງວັນທີ 22 ທັນວາ 2011 ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ, ນາຍົກລັດຖະມົນຕີ ໄດ້ອອກຄໍາສັ່ງ ເພື່ອຜັນຂະຫຍາຍມະຕິ ຂອງກົມການເມືອງສູນກາງພັກ ແລະ ກະຊວງພາຍໃນ ອອກຄໍາແນະນໍາໃນການຈັດຕັ້ງປະຕິບັດ, ນັບແຕ່ນັ້ນເປັນຕົ້ນມາ ວຽກງານ 3 ສ້າງ ໄດ້ກາຍມາເປັນວຽກງານປົກກະຕິຂອງຂະແໜງການຕ່າງໆ ໃນຂອບເຂດທົ່ວປະເທດ.

ຕາມທັດສະນະຂອງຜູ້ຄົ້ນຄວ້າ ແນວຄິດໄກສອນ ພົມວິຫານ ກ່ຽວກັບອີງການບໍລິຫານລັດຂັ້ນທ້ອງຖິ່ນ ພວກເຮົາຕ້ອງໄດ້ສືບຕໍ່ຄົ້ນຄວ້າ, ເສີມຂະຫຍາຍ ແລະ ເອົາໃຈໃສ່ບາງບັນຫາ ດັ່ງນີ້:

ໜຶ່ງ, ສືບຕໍ່ຄົ້ນຄວ້າຜັນຂະຫຍາຍແນວຄິດໄກສອນ ພົມວິຫານ ກ່ຽວກັບການປັບປຸງອີງການບໍລິຫານລັດ ໂດຍການກໍານົດກົງຈັກການຈັດຕັ້ງຂອງເມືອງ ຕ້ອງໄດ້ກໍານົດຂຶ້ນບົນພື້ນຖານຄວາມ

ເປັນຈິງຂອງແຕ່ລະທ້ອງຖິ່ນ ໂດຍບໍ່ໃຫ້ປະຕິບັດຕາມທັດສະນະທີ່ວ່າ ສູນກາງ ແລະ ແຂວງ ມີກົງຈັກຄືແນວໃດ ເມືອງກໍ່ຕ້ອງມີກົງຈັກຄືແນວນັ້ນ, ການສ້າງຕັ້ງກົງຈັກຂອງອົງການປົກຄອງຂັ້ນເມືອງ ຄວນອີງໃສ່ບັນດາຫຼັກການຄື: ນະໂຍບາຍ ຂອງລັດຖະບານ ກ່ຽວກັບ ການປັບປຸງກົງຈັກການຈັດຕັ້ງໃນແຕ່ລະໄລຍະ ຕາມຈຸດພິເສດຂອງການປົກຄອງ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງແຕ່ລະໄລຍະ, ຕາມການຂະຫຍາຍຕົວ ຂອງພົນລະເມືອງ ຕາມທ່າແຮງ, ລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ການບໍລິການ.

ສອງ, ສືບຕໍ່ຄົ້ນຄວ້າຜັນຂະຫຍາຍແນວຄິດ ໄກສອນ ພົມວິຫານ ກ່ຽວກັບການແບ່ງຂັ້ນຄຸ້ມຄອງໃນຕໍ່ໜ້ານີ້ ພວກເຮົາຄວນສືບຕໍ່ແບ່ງຂັ້ນຄຸ້ມຄອງຕາມທິດສູນກາງຄຸ້ມຄອງມະຫາພາກ, ລັດຖະບານເປັນຜູ້ກຳນົດແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ກວມລວມທົ່ວປະເທດ, ຕິດຕາມ-ກວດກາການປະຕິບັດໜ້າທີ່ ຂອງທ້ອງຖິ່ນຮາກຖານ ເປັນຕົ້ນຕໍ, ພ້ອມທັງເປັນຜູ້ຊີ້ນຳ, ບັນຊາຄວບຄຸມໂດຍກົງ, ເດັດຂາດ ແລະ ຮອບດ້ານ ຂອງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານອະທິປະໄຕຂອງຊາດ ໄປພ້ອມໆກັບການເສີມຂະຫຍາຍສິດເປັນເຈົ້າ, ຄວາມຜິດຊອບຢ່າງຈະແຈ້ງ, ຂາດຕົວ ແລະ ສົມຄູ່ກັບຄວາມສາມາດຕົວຈິງຂອງທ້ອງຖິ່ນຕາມທິດສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ.

ໃນເມື່ອມີການແບ່ງງານ ແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ດ້ວຍການເພີ່ມສິດ ແລະ ຄວາມຮັບຜິດຊອບ ໃຫ້ກັບທ້ອງຖິ່ນຫຼາຍຂຶ້ນ, ການເຊື່ອມໂຍງພາກພື້ນ ແລະ ສາກົນນັບມື້ນັບກວ້າງຂວາງ, ບວກກັບລະດັບການຕື່ນຕົວທາງດ້ານການເມືອງ ຂອງປະຊາຊົນ ນັບມື້ນັບສູງຂຶ້ນ ຈຶ່ງຮຽກຮ້ອງໃຫ້ ຕ້ອງມີອົງການຕົວແທນ ຂອງປະຊາຊົນ ທີ່ເຮັດໜ້າທີ່ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຂອງອົງການບໍລິຫານທ້ອງຖິ່ນ, ທັງຕິດຕາມ-ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ປະຕິບັດລະບຽບ, ກົດໝາຍ ໃນທ້ອງຖິ່ນ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນສູງຫຼາຍຂຶ້ນ ເພື່ອປັບປຸງ ແລະ ສ້າງອົງການບໍລິຫານລັດຂັ້ນທ້ອງຖິ່ນໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ໂປ່ງໃສ ແລະ ເປັນລະບົບໃນທົ່ວປະເທດ ແນໃສ່ຮັບປະກັນການປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ ປະກອບສ່ວນເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງ ເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ສີວິໄລ ແລະ ຍຸຕິທຳ.

ສະຫຼຸບແລ້ວ: ປະທານ ໄກສອນ ພົມວິຫານ ໄດ້ໝູນໃຊ້ທິດສະດີມາກ-ເລນິນ ຢ່າງປະດິດສ້າງເຂົ້າໃນການປັບປຸງ ແລະ ບູລະນະ ລະບອບປະຊາທິປະໄຕ ປະຊາຊົນ, ນຳພາສ້າງປະເທດຕາມແນວທາງປ່ຽນແປງໃໝ່ທີ່ມີຫຼັກການ ຂອງພັກ, ຊີວິດ ແລະ ຜົນງານ ຂອງປະທານ ໄກສອນ ພົມວິຫານ ທີ່ມີຕໍ່ພາລະກິດການປະຕິວັດ ແລະ ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕະຫຼອດໄລຍະເວລາຫຼາຍທົດສະວັດຜ່ານມານັ້ນ ແມ່ນເປັນມໍລະດົກທີ່ມີຄຸນຄ່າອັນຍິ່ງໃຫຍ່ ແລະ ມະຫາສານ ຂອງການປະຕິວັດລາວ, ເປັນພື້ນຖານແນວຄິດທິດສະດີ ຂອງພັກເຮົາ, ເຊິ່ງບັນດາແນວຄິດທິດສະດີດັ່ງກ່າວນັ້ນ ພວກເຮົາຕ້ອງສືບຕໍ່ຄົ້ນຄວ້າ, ສຶກສາຮ່ຳຮຽນ ແລະ ເສີມຂະຫຍາຍແນວຄິດ ໄກສອນ ພົມວິຫານ ກ່ຽວກັບອົງການບໍລິຫານລັດຂັ້ນທ້ອງຖິ່ນ ໃຫ້ອຸດົມສົມບູນປະກອບສ່ວນເຂົ້າໃນການປັບປຸງບູລະນະວຽກງານການປົກຄອງທ້ອງຖິ່ນ ໃຫ້ມີປະສິດທິພາບ ແລະ ປະສິດຜົນຂຶ້ນເທື່ອລະກ້າວ...ຯ

ບາງຕອນບົດສຳພາດຂອງ ສະຫາຍ ອາລູນ ໄຊ ສູນນະລາດ

ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຈຳປາສັກ ກ່ຽວກັບການກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ແລະ ບາງຜົນສຳເລັດໃນການນຳພາ-ຊີ້ນຳຂອງອົງຄະນະພັກແຂວງຈຳປາສັກ ຕໍ່ນັກຂ່າວວາລະສານກໍ່ສ້າງພັກ ຄັ້ງວັນທີ 16 ພະຈິກ 2024

ໂດຍ: ແກ້ວໃຈ ແສງມີໄຊ

ຄຳຖາມ 1: ການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ411 /ຄລສພ, ລົງວັນທີ 8 ສິງຫາ 2023 ແລະ ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ເລກທີ 211/ຄຈສພ, ລົງວັນທີ 16 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 03 ຂັ້ນຂອງພັກ ຂອງອົງຄະນະພັກແຂວງ, ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກ ໃນທົ່ວແຂວງ ມາຮອດປະຈຸບັນສາມາດຈັດຕັ້ງປະຕິບັດໄດ້ຄືແນວໃດ?

ຄຳຕອບ: ພາຍຫຼັງທີ່ໄດ້ຮັບຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ, ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 211 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ; ຄະນະພັກ, ຄະນະຈັດຕັ້ງແຕ່ລະຂັ້ນກໍ່ໄດ້ຈັດຕັ້ງເຊື່ອມຊຶມມະຕິກຳຕ່າງໆຂອງສູນກາງພັກ, ຂອງແຂວງ ໃຫ້ຄະນະພັກ, ພະນັກງານຫຼັກແຫຼ່ງຂອງຕົນ, ໄດ້ຄົ້ນຄວ້າຜັນຂະຫຍາຍເປັນຄຳສັ່ງແນະນຳຂອງຂັ້ນຕົນ. ຄະນະປະຈຳພັກແຕ່ລະຂັ້ນກໍໄດ້ອອກມະຕິຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳການກະກຽມດຳເນີນກອງປະຊຸມໃຫຍ່, ອະນຸກຳມະການຕ່າງໆຂັ້ນຂອງຕົນ ໂດຍມີຄະນະປະຈຳພັກເປັນຜູ້ຊີ້ນຳ ແລະ ປະກອບບັນດາອະນຸກຳມະການ ແລະ ກອງເລຂາ ເພື່ອຊ່ວຍວຽກ, ໃນນັ້ນໄດ້ສຸມໃສ່ນຳພາຈັດຕັ້ງປະຕິບັດ 3 ວຽກຕົ້ນຕໍຄື : ດ້ານຂະບວນການ, ດ້ານເນື້ອໃນ ແລະ ດ້ານບຸກຄະລາກອນ ຜ່ານການຈັດຕັ້ງປະຕິບັດຕົວຈິງມາເຖິງປະຈຸບັນມີຜົນສຳເລັດດັ່ງນີ້:

1. ດ້ານຂະບວນການ: ອະນຸກຳມະການຂະບວນການຂັ້ນແຂວງ ໄດ້ປະສານສົມທົບກັບຄະນະພັກແຕ່ລະຂັ້ນເປັນເຈົ້າການນຳພາຊຸກຍູ້ຂະບວນການດ້ານຕ່າງໆ ໃນອົງຄະນະພັກຂັ້ນຕົນໃນນັ້ນ, ໄດ້ຖືສຳຄັນ

ຕໍ່ວຽກງານການເມືອງ-ແນວຄິດ ດ້ວຍການຈັດຕັ້ງເຜີຍແຜ່ເຊື່ອມຊຶມເອກະສານຂອງສູນກາງພັກ ແລະ ຂອງແຂວງ ກ່ຽວກັບການກະກຽມດໍາເນີນກອງປະຊຸມໃຫຍ່ ໃຫ້ຄະນະພັກແຕ່ລະຂັ້ນ ສະມາຊິກພັກ, ພະນັກງານ ແລະ ປະຊາຊົນຮັບຮູ້ເຂົ້າໃຈເຖິງຈຸດປະສົງ, ຄາດໝາຍ ແລະ ຄວາມໝາຍຄວາມສໍາຄັນ, ຂອງການກະກຽມດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ, ຊຸກຍູ້ອົງຄະນະພັກ, ຄະນະພັກຮາກຖານ, ໜ່ວຍພັກຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນເຂົ້າສູ່ວຽກງານຕົວຈິງ ຕິດພັນກັບການຫັນລົງກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ຂະບວນການແຂ່ງຂັນຮັກຊາດພັດທະນາ, ສີລະປະວັນນະຄະນະດີ, ກິລາມວນຊົນ, ການອະນາໄມປະດັບປະດາສໍານັກງານ-ອົງການ, ບ້ານ ແລະ ການຮັກສາສິ່ງແວດລ້ອມ ເປັນຂະບວນຟົດຟື້ນຕໍ່ເນື່ອງ, ໄດ້ຈັດຕັ້ງການຝຶກອົບຮົມວຽກງານກໍ່ສ້າງພັກ-ພະນັກງານ ແລະ ການປົກຄອງໃຫ້ເລຂາຄະນະພັກຮາກຖານບ້ານ, ກຸ່ມບ້ານ, ບ້ານໃຫຍ່ ແລະ ກົມກອງອ້ອມຂ້າງເມືອງ-ນະຄອນ; ພ້ອມນັ້ນ, ກໍ່ໄດ້ເອົາໃຈໃສ່ນໍາພາປັບປຸງກໍ່ສ້າງຮາກຖານພັກ ເຊິ່ງໃນປະຈຸບັນກໍາລັງສຸມໃສ່ຈັດຕັ້ງການປະເມີນຜົນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນປະຈໍາປີ 2024.

2. ດ້ານເນື້ອໃນ: ອະນຸກໍາມະການເນື້ອໃນຂັ້ນແຂວງ ໄດ້ນໍາພາສ້າງຮ່າງລາຍງານການເມືອງທັງ 02 ພາກ ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມຂອງອົງຄະນະພັກເມືອງ, ນະຄອນ ແລະ ອົງຄະນະພັກກອງບັນຊາການທະຫານ-ປ້ອງກັນຄວາມສະຫງົບແຂວງ ພ້ອມທັງບົດປິ່ນອ້ອມຕ່າງໆ; ມາເຖິງປະຈຸບັນເຫັນວ່າ 12 ອົງຄະນະພັກ ໄດ້ສໍາເລັດການສ້າງຮ່າງລາຍງານການເມືອງ ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ສໍາເລັດໂດຍພື້ນຖານ, ໃນນັ້ນ, ສໍາລັບອົງຄະນະພັກກອງບັນຊາການທະຫານແຂວງ ກໍ່ໄດ້ນໍາເອົາຮ່າງລາຍງານການເມືອງ ແລະ ຮ່າງບົດສໍາຫຼວດການນໍາພາລວມຂອງຄະນະພັກ ເຂົ້າທາບທາມໃນກອງປະຊຸມທາບທາມບຸກຄະລາກອນ ຮອບທີ 3 ເພື່ອໃຫ້ບັນດາສະຫາຍຜູ້ແທນກອງປະຊຸມໄດ້ປະກອບຄໍາຄິດຄໍາເຫັນຕໍ່ສອງຮ່າງເອກະສານດັ່ງກ່າວ. ສໍາລັບເມືອງໂຂງ ແລະ ເມືອງບາຈຽງຈະເລີນສຸກ ກໍ່ໄດ້ມີການປະສານສົມທົບກັບອະນຸກໍາມະການເນື້ອໃນຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອປັບປຸງ 2 ຮ່າງເອກະສານດັ່ງກ່າວ ເພື່ອກະກຽມເອົາເຂົ້າສູ່ກອງປະຊຸມທາບທາມບຸກຄະລາກອນ ໃນຮອບທີ 2 ເຊິ່ງຈະດໍາເນີນໃນເດືອນທັນວາ 2024.

3. ດ້ານບຸກຄະລາກອນ: ການກະກຽມບຸກຄະລາກອນກອງປະຊຸມໃຫຍ່ຂອງອົງຄະນະພັກ, ການຈັດຕັ້ງຮາກຖານພັກ ໄດ້ດໍາເນີນໄປຖືກຕ້ອງຕາມຫຼັກການ, ບາດກ້າວ, ຂັ້ນຕອນທີ່ໄດ້ກໍານົດໄວ້ໃນມິຕິກໍາຂອງສູນກາງພັກ, ການເລືອກເຟັ້ນບຸກຄະລາກອນເຂົ້າໃນຄະນະພັກ ຮັບປະກັນຖືກຕ້ອງຕາມມາດຕະຖານ, ເງື່ອນໄຂ, ເສີມຂະຫຍາຍໄດ້ປະຊາທິປະໄຕ ຂອງສະມາຊິກພັກ-ພະນັກງານ ຢ່າງກວ້າງຂວາງ ໂດຍຕິດພັນກັບແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ, ຜູ້ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະພັກແຕ່ລະຂັ້ນ ລ້ວນແລ້ວແຕ່ໄດ້ຜ່ານກອງປະຊຸມທາບທາມໃນແຕ່ລະຮອບຕິດພັນກັບການດໍາເນີນຊີວິດການເມືອງທ້າຍສະໄໝ ແລະ ໄດ້ຮັບການຕົກລົງຈາກຄະນະປະຈໍາພັກເພື່ອອະນຸມັດອອກຮັບສະໝັກເລືອກຕັ້ງເຂົ້າໃນຄະນະພັກຊຸດໃໝ່; ຜູ້ສະໝັກເລືອກຕັ້ງປະກອບມີທັງຜູ້ເກົ່າ ແລະ ຜູ້ໃໝ່ ມີໂຄງປະກອບເພດ-ເຜົ່າ ໃນອັດຕາສ່ວນທີ່ເໝາະສົມ ມີທັງຮຸ່ນໜຸ່ມ, ຮຸ່ນກາງ ແລະ ຮຸ່ນ

ອາວຸໂສ, ໃນນັ້ນ ສິ່ງທີ່ສໍາຄັນ ກ່ອນຈະດໍາເນີນກອງປະຊຸມໃຫຍ່ ແມ່ນໄດ້ເຊື່ອມຊຶມ 4 ເອກະສານ ຂອງຄະນະໂຄສະນາອົບຮົມສູນກາງພັກ ກ່ຽວກັບການສຶກສາອົບຮົມການເມືອງ-ແນວຄິດ ສໍາລັບສະມາຊິກພັກ, ພະນັກງານຫຼັກແຫຼ່ງ ໃນການກະກຽມດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກຢ່າງເລິກເຊິ່ງ ແລະ ຖືກຕ້ອງຕາມຫຼັກການຂອງພັກ.

ການນໍາພາດໍາເນີນກອງປະຊຸມໃຫຍ່ ແມ່ນໄດ້ເລີ່ມຈາກຮາກຖານພັກຢູ່ຂັ້ນບ້ານ ແລະ ຮາກຖານພັກໃນສໍານັກງານ-ກົມກອງອ້ອມຂ້າງເມືອງ-ນະຄອນ ທີ່ມີອາຍຸຄົບຮອບ 5 ປີ ຕາມທີ່ໄດ້ກໍານົດໄວ້ໃນກົດລະບຽບຂອງພັກ, ມາເຖິງປະຈຸບັນສາມາດນໍາພາດໍາເນີນກອງປະຊຸມໃຫຍ່ຂັ້ນຮາກຖານພັກ ທີ່ຂຶ້ນກັບ 12 ອົງຄະນະພັກ ສໍາເລັດ 100%, ຮາກຖານພັກພະແນກການ-ກົມກອງອ້ອມຂ້າງແຂວງ ມີ 181 ຮາກຖານ ສໍາເລັດ 114 ຮາກຖານ, ເທົ່າກັບ 62,98 %; ໃນນັ້ນ, ຄະນະພັກຮາກຖານ 20 ຮາກຖານ ສໍາເລັດ 4 ຮາກຖານ ເທົ່າກັບ 20%, ໜ່ວຍພັກ 161 ໜ່ວຍ ສໍາເລັດ 110 ໜ່ວຍ ເທົ່າກັບ 68,32%. ສໍາລັບໂຄງປະກອບຄະນະພັກຮາກຖານ, ໜ່ວຍພັກທີ່ໄດ້ຮັບການເລືອກຕັ້ງໃນກອງປະຊຸມໃຫຍ່ສ່ວນຫຼາຍຢູ່ໃນແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ ກວມ 97 %; ໄດ້ສໍາເລັດການດໍາເນີນກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກກອງບັນຊາການປ້ອງກັນຄວາມສະຫງົບແຂວງ ຄັ້ງທີ IV ແລະ ອົງຄະນະພັກກອງບັນຊາການທະຫານແຂວງ ຄັ້ງທີ VI; ສໍາລັບອົງຄະນະພັກເມືອງ-ນະຄອນ ໄດ້ມີແຜນການກະກຽມເປັນລະອຽດ ເລີ່ມແຕ່ການເກັບກໍາສະຖິຕິຂໍ້ມູນເປົ້າໝາຍຜູ້ແທນທີ່ຈະເຂົ້າຮ່ວມກອງປະຊຸມທາບທາມໃນ 03 ຮອບ ແລະ ຂຶ້ນບັນຊີຜູ້ແທນສົມບູນ ແລະ ຜູ້ແທນສໍາຮອງທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກເມືອງ, ນະຄອນ; ພ້ອມນັ້ນ, ກໍ່ໄດ້ມີການຈັດວາງສັບຊ້ອນພະນັກງານນໍາພາ-ຄຸ້ມຄອງເຂົ້າໃສ່ຕໍາແໜ່ງງານຕ່າງໆ ເພື່ອເຂົ້າໃນໂຄງປະກອບຄະນະພັກຊຸດໃໝ່; ໃນນັ້ນ, ອົງຄະນະພັກເມືອງໂຂງ ແລະ ເມືອງບາຈຽງຈະເລີນສຸກ ກໍໄດ້ມີແຜນການກະກຽມຮອບດ້ານໃຫ້ແກ່ການດໍາເນີນກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ, ອັນທີເປັນພື້ນຖານ ແມ່ນໄດ້ວາງແຜນຄາດຄະເນດ້ານບຸກຄະລາກອນເຂົ້າໃສ່ໂຄງປະກອບຂອງຄະນະບໍລິຫານງານພັກເມືອງ-ນະຄອນ ສໍາເລັດ, ຄາດຄະເນຈໍານວນຄະນະບໍລິຫານງານພັກ, ຈໍານວນຄະນະປະຈໍາພັກ ແລະ ໄດ້ມີແຜນການຈັດວາງ, ສັບຊ້ອນແບ່ງງານພາຍໃນຄະນະປະຈໍາພັກໃຫ້ຖືກຕາມຄໍາສັ່ງແນະນໍາ ສະບັບເລກທີ 173/ຄລສພ, ມີການຄົ້ນຄວ້າຄາດຄະເນແບ່ງງານ, ແບ່ງຄວາມຮັບຜິດຊອບພາຍໃນຄະນະບໍລິຫານງານພັກຊຸດໃໝ່, ການກະກຽມເປົ້າໝາຍຜູ້ທີ່ມີມາດຕະຖານ, ເງື່ອນໄຂສະໝັກຄະນະປະຈໍາພັກ, ປະທານ, ຮອງປະທານຄະນະກວດກາພັກເມືອງ-ນະຄອນ ເພື່ອກະກຽມໃຫ້ແກ່ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານພັກ; ການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ ໃນປີ 2025 ມີຄື: ເດືອນມັງກອນ ມີ 3 ເມືອງ (ເມືອງໂຂງ, ເມືອງບາຈຽງຈະເລີນສຸກ, ເມືອງມູນລະປາໂມກ); ເດືອນ ກຸມພາ ມີ 3 ເມືອງ (ເມືອງ ຈໍາປາສັກ, ເມືອງປາກຊ່ອງ, ເມືອງຊະນະສົມບູນ); ເດືອນ ມີນາ ມີ 4 ເມືອງ, 1 ນະຄອນ (ເມືອງປະທຸມພອນ, ເມືອງສຸຂຸມາ, ເມືອງໂພນທອງ ແລະ ນະຄອນປາກເຊ); ສໍາລັບການດໍາເນີນກອງປະຊຸມໃຫຍ່ຄັ້ງທີ IX ຂອງອົງຄະນະພັກແຂວງ ຄາດຄະເນໃນເດືອນ 9 ປີ 2025.

ອ່ານຕໍ່ສະບັບ 269

ກອງປະຊຸມສະຫຼຸບວຽກງານຈັດຕັ້ງ ກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ທົ່ວປະເທດ ປະຈໍາປີ 2024

ໂດຍ: ແສງອອນ ແກ້ວນິມົນລັດ

ໃນວັນທີ 29 ມັງກອນ 2025 ຜ່ານມາ ກອງປະຊຸມສະຫຼຸບວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງທົ່ວປະເທດ ປະຈໍາປີ 2024 ໄດ້ໄຂຂຶ້ນ ແລະ ອັດລົງດ້ວຍຜົນສໍາເລັດອັນຈົບງາມ, ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ບຸດສະດີ ທະນະເມືອງ ກໍາມະການສູນກາງພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ພາຍໃນຄະນະຈັດຕັ້ງສູນກາງພັກ ມີບັນດາຫົວໜ້າ-ຮອງຫົວໜ້າກົມ, ຫ້ອງການ, ສູນ ແລະ ຫົວໜ້າພະແນກ; ບັນດາຫົວໜ້າຄະນະຈັດຕັ້ງແຂວງ-ນະຄອນຫຼວງ ແລະ ບັນດາຫົວໜ້າກົມຈັດຕັ້ງ ແລະ ພະນັກງານຂອງບັນດາກະຊວງ-ອົງການເຂົ້າຮ່ວມຢ່າງພ້ອມພຽງ ໂດຍຜ່ານກອງປະຊຸມທາງໄກແບບອອນລາຍນ໌.

ກອງປະຊຸມ ໄດ້ສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດວຽກງານ ໃນໄລຍະ 01 ປີຜ່ານມາ ແລະ ທິດທາງໜ້າວຽກຈຸດສຸມໃນຕໍ່ໜ້າ ສະເໜີໂດຍ ສະຫາຍ ສີອໍາພອນ ຈັນລາຕີ ຮອງຫົວໜ້າຫ້ອງການ ຄະນະຈັດຕັ້ງສູນກາງພັກ ເຊິ່ງສະແດງອອກດັ່ງນີ້:

ການກໍ່ສ້າງພັກທາງດ້ານການເມືອງ-ແນວຄິດ: ຄະນະພັກແຕ່ລະຂັ້ນ ໄດ້ເອົາໃຈໃສ່ເຮັດວຽກງານການເມືອງ-ແນວຄິດ ເລີ່ມຈາກການຄົ້ນຄວ້າ, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ຄົ້ນຄວ້າຜັນຂະຫຍາຍມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 ສະໄໝທີ XI ຂອງພັກ, ມະຕິກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V, ມະຕິກອງປະຊຸມລັດຖະບານ ຄັ້ງທີ II, ມະຕິວ່າດ້ວຍການສ້າງເສດຖະ

ກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່, ມະຕິກອງປະຊຸມວຽກງານກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານພັດທະນາຊົນນະບົດຮອບດ້ານແກ້ໄຂຄວາມທຸກຍາກ, ວຽກງານ 3 ສ້າງ ແລະ ນິຕິກຳອື່ນໆ.

ການກໍ່ສ້າງພັກທາງດ້ານການຈັດຕັ້ງ: ຄະນະພັກ, ຄະນະຈັດຕັ້ງ ແຕ່ລະຂັ້ນ ໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ຕາມ 5 ຫຼັກການ 3 ທິດນຳ ແລະ ໄດ້ເພີ່ມກຳລັງແຮງຂອງພັກ ດ້ວຍການຂະຫຍາຍສະມາຊິກພັກຕາມລະບຽບ, ຂັ້ນຕອນ ທີ່ນິຕິກຳໄດ້ກຳນົດໄວ້, ມີການປະສານສົມທົບກັບອົງການຈັດຕັ້ງມະຫາຊົນ ຕິດຕາມການເຄື່ອນໄຫວ, ການຄົ້ນຄວ້າ, ເລືອກເຟັ້ນ, ຄັດເລືອກເອົາມະຫາຊົນທີ່ຫ້າວຫັນ, ພົ້ນເດັ່ນໃນຂະບວນການ ແລະ ການປະຕິບັດໜ້າທີ່ວຽກງານ. ຜ່ານການຝຶກຝົນຫຼໍ່ຫຼອມຈາກອົງການຈັດຕັ້ງມະຫາຊົນສາມາດສ້າງໄດ້ມະຫາຊົນທີ່ຄົບມາດຕະຖານ, ເງື່ອນໄຂເຂົ້າເປັນສະມາຊິກພັກ. ປະຈຸບັນທົ່ວປະເທດມີສະມາຊິກພັກ ຈຳນວນ 415.784 ສະຫາຍ, ຍິງ 112.529 ສະຫາຍ ທຽບໃສ່ປີ 2023 ເພີ່ມຂຶ້ນ 3.264 ສະຫາຍ; ຄະນະໜ່ວຍພັກແຕ່ລະຂົງເຂດ ໄດ້ເປັນເຈົ້າການໃນການປະຕິບັດພາລະບົດບາດ, ສິດ, ໜ້າທີ່ໃນການຜັນຂະຫຍາຍແນວທາງຂອງພັກ ເປັນແຜນງານ, ແຜນການຂັ້ນໜ່ວຍ, ປະຕິບັດລະບອບດຳເນີນຊີວິດການເມືອງເປັນປົກກະຕິ, ຮັບປະກັນ 3 ລັກສະນະ ໃນນີ້ຖືສຳຄັນການຕຳນິຕິຊົມເຊິ່ງກັນ ແລະ ກັນ, ເສຍເງິນບຳລຸງເປັນປົກກະຕິ. ປີ 2023 ປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ມີ 1,039 ໜ່ວຍ; ໜ່ວຍພັກກາງ ມີ 2,657 ໜ່ວຍ, ໜ່ວຍພັກອ່ອນ ມີ 140 ໜ່ວຍ ແລະ ບໍ່ໄດ້ຈັດປະເພດ 2,048 ໜ່ວຍ ແລະ ໄດ້ຕີລາຄາແບ່ງປະເພດສະມາຊິກພັກ ມີປະເພດແຂງ 313.995 ສະຫາຍ, ຍິງ 88.312 ສະຫາຍ; ປະເພດກາງ 25.862 ສະຫາຍ, ຍິງ 5.557 ສະຫາຍ; ປະເພດອ່ອນ 391 ສະຫາຍ, ຍິງ 44 ສະຫາຍ; ປະເພດເສຍທາດ 52 ສະຫາຍ, ຍິງ 03 ສະຫາຍ; ບໍ່ໄດ້ຕີລາຄາແບ່ງປະເພດ 75.484 ສະຫາຍ, ຍິງ 18.613 ສະຫາຍ. ປີ 2024 ໄດ້ຮັບເງິນສະຕິພັກ 337,791,012 ກີບ; ບັນດາໜ່ວຍພັກໄດ້ສ້າງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ,ໜັກແໜ້ນ, ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງ, ທ້າຍປີກໍ່ໄດ້ດຳເນີນການປະເມີນຜົນການກໍ່ສ້າງໜ່ວຍພັກ ແລະສະມາຊິກພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ມາຮອດປະຈຸບັນ ກອງປະຊຸມໃຫຍ່ອົງຄະນະພັກເມືອງ ໄດ້ສຳເລັດເມືອງທຳອິດຂອງແຂວງ-ນະຄອນຫຼວງ ເຫັນວ່າ ຄະນະບໍລິຫານງານພັກຊຸດໃໝ່ ລ້ວນແຕ່ແມ່ນຜູ້ທີ່ມີມາດຕະຖານ-ເງື່ອນໄຂ, ມີໂຄງປະກອບເພດ-ເຜົ່າ, ປະກອບມີ 3 ຮຸ່ນຄື: ຮຸ່ນອາວຸໂສ, ກາງ, ໜຸ່ມ (ໃນນີ້ຮຸ່ນກາງ ແລະ ຮຸ່ນໜຸ່ມກວມອັດຕາສ່ວນຫຼາຍ) ເຊິ່ງກາຍເປັນຫຼັກແຫຼ່ງໃນການນຳພາ-ຊີ້ນຳ ຢູ່ແຕ່ລະຂົງເຂດວຽກງານ; ຄະນະພັກແຕ່ລະຂັ້ນໄດ້ເອົາໃຈໃສ່ຄຸ້ມຄອງກົມແຖວສະມາຊິກພັກ ດ້ວຍການຫັນເປັນທັນສະໄໝ, ມີການແບ່ງຂັ້ນຄຸ້ມຄອງຕາມລະບຽບ, ຫຼັກການ, ຕິດຕາມ ແລະ ເກັບກຳຊີວະປະຫວັດ, ສະພາບການເຄື່ອນໄຫວ, ທັດສະນະການເມືອງ ຄຸນສົມບັດສິນທຳປະຕິວັດ, ເກັບກຳສະຖິຕິພັກ ລາຍງານຂັ້ນເທິງເປັນປົກກະຕິ ເຊິ່ງປະຈຸບັນທົ່ວປະເທດມີ 36 ອົງຄະນະພັກກະຊວງ-ອົງການ, 18 ອົງຄະນະພັກແຂວງ-ນະຄອນ, ມີ 149 ອົງຄະນະພັກເມືອງ ແລະ ທຽບເທົ່າ, ການຈັດຕັ້ງຮາກຖານພັກ 24.440 ຮາກຖານ, ໃນນີ້ມີຄະນະພັກຮາກຖານ 2.140 ຮາກຖານ, ມີໜ່ວຍພັກທັງໝົດ 22.300 ໜ່ວຍ, ໃນນີ້ມີ 9.775 ໜ່ວຍພັກຮາກຖານ, ມີ 12.525 ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ; ວຽກງານປ້ອງກັນພັກ ໂດຍເລີ່ມຈາກປ້ອງກັນແນວທາງການເມືອງຂອງພັກ, ການຈັດຕັ້ງພັກ, ຄະນະພັກ, ບຸກຄົນສະມາຊິກພັກ; ເກັບກຳສະພາບການເຄື່

ອນໄຫວຂອງບຸກຄົນຄະນະພັກ, ສະມາຊິກພັກ, ເປົ້າໝາຍຂະຫຍາຍພັກ ເພື່ອເປັນຂໍ້ມູນໃນການຄົ້ນຄວ້າພິຈາລະນາເຂົ້າໃນວຽກງານພັກ-ພະນັກງານ, ຈັດຕັ້ງການຝຶກອົບຮົມວຽກງານປ້ອງກັນພັກ-ພະນັກງານໃຫ້ບາງແຂວງ, ໄດ້ອອກບັດໃຫ້ສະມາຊິກພັກສົມບູນ ຈໍານວນ 6.949 ສະຫາຍ, ຍິງ 2.329 ສະຫາຍ. ວຽກງານປັບປຸງກົງຈັກການຈັດຕັ້ງພັກ ໄດ້ຂະຫຍາຍສະມາຊິກພັກ ຕາມນິຕິກໍາ ທີ່ກໍານົດໄວ້, ປະຕິບັດລະບອບການດໍາເນີນຊີວິດການເມືອງ, ເສຍເງິນບໍາລຸງເປັນປົກກະຕິ, ໄດ້ຄັດເລືອກເອົາຄະນະພັກຊຸດໃໝ່ ຖືກຕ້ອງສອດຄ່ອງກັບນິຕິກໍາ ເຮັດໃຫ້ການຈັດຕັ້ງພັກ ແຕ່ລະຂັ້ນມີກໍາລັງທີ່ແໜ້ນໜາ ແລະ ມີຜູ້ນໍາພາ-ຊີ້ນໍາ ທີ່ຄົບມາດຖານ, ເງື່ອນໄຂ ເປັນທ່າແຮງໃນການຈັດຕັ້ງປະຕິບັດວຽກງານມີຜົນສໍາເລັດເປັນຢ່າງດີ.

ມີມະຕິຂອງກອງປະຊຸມ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ຕິດຕາມ, ກວດກາ; ໄດ້ເອົາໃຈໃສ່ປັບປຸງແບບແຜນນໍາພາວິທີເຮັດວຽກທີ່ມີວິທະຍາສາດ, ແທດຕົວຈິງ, ແທດກັບຮາກຖານ, ໃກ້ຊິດສະໜິດແໜ້ນກັບມະຫາຊົນ; ຮັບຟັງຄໍາຄິດຄໍາເຫັນຂອງມະຫາຊົນ, ປະຕິບັດລະບອບຕິຊົມຕົນເອງ-ຕິຊົມເຊິ່ງກັນ ແລະ ກັນ ເພື່ອຍົກສູງລັກສະນະນໍາໜ້າ, ລັກສະນະຕໍ່ສູ້ ແລະ ລັກສະນະສຶກສາອົບຮົມຂອງພັກ, ມີຄວາມຕັດສິນໃຈແກ້ໄຂ ແລະ ຕ້ານແບບແຜນວິທີເຮັດວຽກອາດຍາສິດ, ຂາດຄວາມຮັບຜິດຊອບ ແລະ ອື່ນໆ.

ການກໍ່ສ້າງພະນັກງານ ແມ່ນອີງໃສ່ແຜນກໍານົດພະນັກງານເປັນຫຼັກ, ຄະນະພັກແຕ່ລະຂັ້ນໄດ້ເອົາໃຈໃສ່ການບໍາລຸງ, ກໍ່ສ້າງພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດດ້ວຍຫຼາຍຮູບການ, ວິທີການ ຕາມເງື່ອນໄຂຕົວ

ການກໍ່ສ້າງພັກທາງດ້ານແບບແຜນນໍາພາ ແລະ ວິທີເຮັດວຽກ: ຄະນະພັກແຕ່ລະຂັ້ນ ເປັນເຈົ້າການໃນການປະຕິບັດຫຼັກການລວມສູນປະຊາທິປະໄຕ, ນໍາພາເປັນໝູ່ຄະນະ, ມີການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງລະອຽດ; ປະຕິບັດລະບອບເຮັດວຽກມີແຜນດໍາເນີນງານ, ເຮັດວຽກມີແຜນງານ, ໂຄງການ ແລະ ແຜນການຈັດຕັ້ງປະຕິບັດແຕ່ລະໄລຍະ, ຄະນະພັກປະຕິບັດລະບອບປະຊຸມສາມັນ, ວິສາມັນ ເປັນປົກກະຕິ ແລະ

ຈິງຂອງແຕ່ລະຂັ້ນ, ແຕ່ລະຂະແໜງການເຊັ່ນ: ການປະຕິບັດວຽກງານຢູ່ກັບທີ່, ລົງທ້ອງຖິ່ນຮາກຖານ, ຈັດຕັ້ງການຝຶກອົບຮົມ, ບໍາລຸງ-ກໍ່ສ້າງທາງດ້ານທິດສະດີການເມືອງ ແລະ ວຽກງານວິຊາສະເພາະຢູ່ສະຖາບັນການສຶກສາຕ່າງໆ; ຄະນະຈັດຕັ້ງສູນກາງພັກ ໄດ້ປະຕິບັດພາລະບົດບາດການບໍາລຸງ-ກໍ່ສ້າງພະນັກງານທາງດ້ານທິດສະດີການເມືອງ-ການປົກຄອງ ດ້ວຍການສົມທົບກັບພາກສ່ວນກ່ຽວຂ້ອງສົ່ງພະນັກງານໄປບໍາລຸງ-

ກໍ່ສ້າງຢູ່ພາຍໃນ ແລະ ຕ່າງປະເທດຈຳນວນ 1,027 ສະຫາຍ, ຍິງ 218 ສະຫາຍ ໃນນີ້ພາຍໃນປະເທດມີ 408 ສະຫາຍ, ຍິງ 105 ສະຫາຍ, ຕ່າງປະເທດ 619 ສະຫາຍ, ຍິງ 113 ສະຫາຍ, ເກັບກຳສະຖິຕິພະນັກງານນຳພາ-ຄຸ້ມຄອງ ທີ່ຍັງບໍ່ທັນຜ່ານທິດສະດີການເມືອງຂັ້ນສູງມີທັງໝົດ 3.333 ສະຫາຍ, ຍິງ 634 ສະຫາຍ; ນອກຈາກນີ້ ບັນດາແຂວງໄດ້ສົ່ງພະນັກງານໄປຍົກລະດັບທາງດ້ານທິດສະດີການເມືອງ, ວິຊາສະເພາະ ຢູ່ແຂວງແຮກສ່ຽວ ສສ ຫວຽດນາມຕື່ມອີກ; ໄດ້ຍົກລະດັບໃຫ້ພະນັກງານນຳພາ-ຄຸ້ມຄອງຂະແໜງຈັດຕັ້ງດ້ວຍການສົ່ງໄປບຳລຸງວຽກງານຈັດຕັ້ງ 2 ເດືອນຢູ່ ສສ ຫວຽດນາມ ຈຳນວນ 25 ສະຫາຍ, ຍິງ 9 ສະຫາຍ, ຈັດຝຶກອົບຮົມວຽກງານຈັດຕັ້ງຢູ່ແຂວງໄຊຍະບູລີ ມີຜູ້ເຂົ້າຮ່ວມ 59 ສະຫາຍ, ຍິງ 16 ສະຫາຍ; ຈັດຝຶກອົບຮົມ ໃຫ້ຄະນະພັກ, ຄະນະໜ່ວຍພັກ ຢູ່ກະຊວງ-ອົງການ ມີຜູ້ເຂົ້າຮ່ວມທັງໝົດ 400 ສະຫາຍ,ຍິງ 161 ສະຫາຍ. ປະຈຸບັນພະນັກງານຂະແໜງຈັດຕັ້ງ ທັງໝົດມີ 2.952 ສະຫາຍ, ຍິງ1.217ສະຫາຍ, ໃນນີ້ຢູ່ກະຊວງ-ອົງການມີ1.098ສະຫາຍ, ຍິງ 513 ສະຫາຍ, ຢູ່ທ້ອງຖິ່ນມີ 1.665 ສະຫາຍ, ຍິງ622 ສະຫາຍ, ຢູ່ຄະນະຈັດຕັ້ງສູນກາງພັກ ມີ 189 ສະຫາຍ, ຍິງ 82 ສະຫາຍ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ກໍຍັງມີຈຸດອ່ອນຂໍ້ຄົງຄ້າງທີ່ຄະນະພັກແຕ່ລະຂັ້ນ ຕ້ອງປັບປຸງແກ້ໄຂໃນຕໍ່ໜ້າດັ່ງນີ້:

ໜຶ່ງ: ຄະນະພັກ ຈຳນວນໜຶ່ງ ບໍ່ທັນໄດ້ເອົາໃຈໃສ່ ແລະ ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງໃນການຫັນນິຕິກຳຂອງສູນກາງພັກມາເປັນອັນລະອຽດຂັ້ນຂອງຕົນ; ການຈັດຕັ້ງເຊື່ອມຊຶມແນວທາງ, ແຜນນະໂຍບາຍ, ກົດໝາຍ, ລະບຽບການ ແລະ ນິຕິກຳຕ່າງໆຂອງພັກ-ລັດ ບໍ່ເລິກເຊິ່ງ, ຮູບການ, ວິທີການຍັງເຮັດແບບລວມໆ, ຊັກຊ້າ, ບໍ່ທົ່ວເຖິງ;

ສອງ: ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຈຳນວນໜຶ່ງ ເສື່ອມຖອຍຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ, ມີແນວຄິດຫຍໍ້ທໍ້ປຽບທຽບຊົ່ງຊາ, ສໍ້ລາດບັງຫຼວງ ເຮັດໃຫ້ມີພະນັກງານ-ລັດຖະກອນຈຳນວນໜຶ່ງຖືກລົງວິໄນ; ການຈັດຕັ້ງຮາກຖານພັກຈຳນວນໜຶ່ງປະຕິບັດລະບອບດຳເນີນຊີວິດການເມືອງ ບໍ່ເປັນປົກກະຕິ, ໜ່ວຍພັກທີ່ໄດ້ດຳເນີນຊີວິດການເມືອງ ກໍ່ບໍ່ຮັບປະກັນ 3 ລັກສະນະ ໂດຍສະເພາະແມ່ນລັກສະນະຕໍ່ສູ້ບໍ່ແຂງແຮງ, ບໍ່ກ້າຕຳນິສົ່ງຂ່າວເຊິ່ງກັນ ແລະ ກັນ, ບໍ່ມີການກໍ່ສ້າງຊ່ວຍເຫຼືອກັນ ເຮັດໃຫ້ພາຍໃນການຈັດຕັ້ງບໍ່ມີຄວາມສະຫງົບ, ຄວາມສາມັກຄີພາຍໃນບໍ່ໜັກແໜ້ນ ແລະ ມີທາງສຽງຈາກສັງຄົມ.

ສາມ: ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຍັງບໍ່ທັນໄດ້ດີ ເປັນຕົ້ນແມ່ນຍັງບໍ່ທັນຫັນເອົາເນື້ອໃນການກໍ່ສ້າງໜ່ວຍພັກ ຕິດພັນກັບການດຳເນີນຊີວິດການເມືອງ ແມ່ນທ້າຍປີຈຶ່ງດຳເນີນການປະເມີນບາດຖຽວ, ບໍ່ປະຕິບັດຕາມວິທີການ, ລະບຽບ,ຂັ້ນຕອນທີ່ ກຳນົດໄວ້ໃນນິຕິກຳ, ການຕີລາຄາແບ່ງປະເພດຍັງບໍ່ທັນພາວະວິໄສ ເຮັດໃຫ້ເກີດປະກົດການປຽບທຽບຊົ່ງຊາ.

ສີ່: ການຂະຫຍາຍພັກ ເປັນຕົ້ນແມ່ນຂັ້ນໜ່ວຍພັກບ້ານ, ວິສາຫະກິດເອກະຊົນ ແມ່ນມີຈຳນວນໜ້ອຍ, ຂົງເຂດສຳນັກງານ-ອົງການ ພັດມີຈຳນວນເພີ່ມຂຶ້ນແຕ່ຍັງມີຈຳນວນໜຶ່ງບໍ່ທັນຮັບປະກັນຄຸນນະພາບ; ການຂະຫຍາຍເປົ້າໝາຍບໍ່ທັນຕິດພັນກັບການປັບປຸງກໍ່ສ້າງພັກ ແລະ ຂະບວນການ; ການຄົ້ນຄວ້າເປົ້າໝາຍບໍ່ເລິກເຊິ່ງ, ມີລັກສະນະຈຸ້ມເຈື້ອ, ກຸ່ມກ້ອນ, ບໍ່ຕິດພັນກັບການປ້ອງກັນພັກ-ພະນັກງານ ແລະ ບໍ່ທັນເລີ່ມຈາກສິ່ງຊຸກຍູ້ທີ່ຕັ້ງໜ້າ, ເປັນສະມາຊິກພັກແລ້ວບໍ່ເປັນແບບຢ່າງ ແລະ ບໍ່ທັນເປັນກຳລັງແຮງໃຫ້ແກ່ການຈັດຕັ້ງພັກໃນການປະຕິບັດໜ້າທີ່ວຽກງານ.

ຫ້າ: ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ

ການ ນຳພາ-ຊີ້ນຳຂອງຄະນະພັກໃນການກະກຽມທັງ 3 ດ້ານ ແມ່ນຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ເປັນຕົ້ນແມ່ນດ້ານຂະບວນການບໍ່ເດັ່ນ ຍັງບໍ່ທັນເປັນການປຸກລະດົມທົ່ວສັງຄົມໃຫ້ມີສ່ວນຮ່ວມຢ່າງເຕັມສ່ວນ, ຍັງບໍ່ທັນເປັນຂະບວນການທີ່ຟົດຟື້ນ, ດ້ານບຸກຄະລາກອນໂຄງປະກອບເພດ, ເຜົ່າ ຍັງບໍ່ທັນສົມສ່ວນ.

ຫົກ: ການປະຕິບັດລະບອບແບບແຜນນຳພາ ແລະ ວິທີເຮັດວຽກຂອງຄະນະພັກຈຳນວນໜຶ່ງບໍ່ຍຶດໝັ້ນຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ການແບ່ງງານ-ແບ່ງຄວາມຮັບຜິດຊອບບໍ່ລະອຽດຈະແຈ້ງ, ການຄົ້ນຄວ້າຕົກລົງບັນຫາທີ່ສຳຄັນບໍ່ເປັນໝູ່ຄະນະ; ຄະນະໜ່ວຍພັກຈຳນວນໜຶ່ງ ປະຕິບັດລະບອບປະຊຸມບໍ່ເປັນປົກກະຕິ, ບໍ່ມີມະຕິກອງປະຊຸມ, ບໍ່ມີບົດບັນທຶກ ແລະ ບໍ່ມີແຜນການຜັນຂະຫຍາຍ, ບໍ່ມີການຕິດຕາມ, ກວດກາ, ຊຸກຍູ້ຢ່າງຕໍ່ເນື່ອງ, ແທດເຖິງຕົວຈິງ, ບໍ່ມີການສະຫຼຸບຕີລາຄາຖອດຖອນບົດຮຽນ ແລະ ລາຍງານຂໍທິດຊີ້ນຳຈາກຂັ້ນເທິງເປັນປົກກະຕິ.

ເຈັດ: ຄະນະພັກຈຳນວນໜຶ່ງ ສ້າງແຜນກຳນົດພະນັກງານຍັງບໍ່ທັນຄົບຖ້ວນ, ແຜນກຳນົດພະນັກງານທີ່ໄດ້ຮັບຮອງແລ້ວ ກໍ່ບໍ່ໄດ້ປະເມີນຄືນ ຕາມລະບຽບການກຳນົດໄວ້, ການຄົ້ນຄວ້າພະນັກງານໄປຍົກລະດັບ, ແຕ່ງຕັ້ງ, ຍົກຍ້າຍ ບໍ່ທັນອີງໃສ່ແຜນກຳນົດພະນັກງານ.

ແປດ: ກະຊວງ-ອົງການ ແລະ ທ້ອງຖິ່ນຈຳນວນໜຶ່ງຍັງບໍ່ທັນໄດ້ສ້າງແຜນບຳລຸງ-ກໍ່ສ້າງພະນັກງານຢູ່ໃນແຜນກຳນົດ, ບ່ອນທີ່ມີແຜນແລ້ວບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນການ, ຄະນະພັກຈຳນວນໜຶ່ງ ຄົ້ນ ຄວ້າຄັດເລືອກເປົ້າໝາຍບໍ່ຖືກມາດຕະຖານ, ເງື່ອນໄຂຕາມແຈ້ງການຄັດເລືອກ ໄປບຳລຸງ-ກໍ່ສ້າງໃນສະຖາບັນການສຶກສາຕ່າງໆ; ການທຽບລະດັບທິດສະດີການເມືອງຍັງບໍ່ທັນເປັນເອກະພາບກັນ ແລະ ຍັງບໍ່ທັນສຳເລັດ.

ເກົ້າ: ການແຕ່ງຕັ້ງ, ສັບຊ້ອນ, ຈັດວາງພະນັກງານຈຳນວນໜຶ່ງ ບໍ່ອີງໃສ່ແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ບໍ່ມີການທາບທາມ, ຜົນສຳເລັດໃນການປະຕິບັດໜ້າທີ່, ຍັງບໍ່ທັນບຸກທະລຸໄດ້ຕາມທິດມີຂຶ້ນ-ມີລົງ, ມີເຂົ້າ-ມີອອກ, ບາງບ່ອນບໍ່ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ໃນການຄົ້ນຄວ້າພິຈາລະນາ, ມີລັກສະນະຈຸ້ມເຈື້ອເຊື້ອສາຍ, ກຸ່ມກ້ອນ.

ສິບ: ການປັບປຸງກົງຈັກການຈັດຕັ້ງ ຢູ່ບາງກະຊວງ-ອົງການ ບໍ່ໄປຕາມທິດກະທັດຮັດ ຍັງສະເໜີຂໍສ້າງຕັ້ງກົງຈັກການຈັດຕັ້ງເພີ່ມ; ການສ້າງ, ປັບປຸງພາລະບົດບາດ, ໜ້າວຽກບໍ່ຊັດເຈນ; ຫຼາຍພາກສ່ວນບໍ່ທັນສຳເລັດ ແລະ ບໍ່ສາມາດແກ້ໄຂບັນຫາສະພາບພະນັກງານເຫຼືອ-ບໍ່ພໍ.

ໃນໂອກາດດັ່ງກ່າວ ຜູ້ແທນກອງປະຊຸມໄດ້ພ້ອມກັນຄົ້ນຄວ້າປະກອບຄຳເຫັນຢ່າງກົງໄປກົງມາຕໍ່ບົດສະຫຼຸບການ ເຄື່ອນໄຫວວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ໃນປີ 2024 ແລະ ທິດທາງແຜນການ ກໍ່ຄືວຽກງານຈຸດສຸມໃນປີ 2025. ໃນຕອນທ້າຍກອງປະຊຸມຜູ້ເຂົ້າຮ່ວມຍັງໄດ້ຮັບຟັງຄຳເຫັນໂອ້ລົມຂອງສະຫາຍ ນາງ ບຸດສະດີ ທະນະເມືອງ ກຳມະການສູນກາງພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ເຊິ່ງສະຫາຍ ໄດ້ໃຫ້ທິດຊີ້ນຳຕໍ່ການປັບປຸງແກ້ໄຂຈຸດອ່ອນ-ຂໍ້ຄົງຄ້າງ ເປັນຕົ້ນແມ່ນການຄົ້ນຄວ້າເຊື່ອມຊຶມກຳແໜ້ນແນວທາງການຈັດຕັ້ງຂອງພັກ ແລະ ການຫັນເປັນນິຕິກຳວຽກງານຈັດຕັ້ງກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ຂັ້ນຂອງຕົນ; ການກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ຕ້ອງໄປຕາມທິດຊີ້ນຳລວມຂອງພັກ, ຖືກຕ້ອງຕາມຫຼັກການ, ບາດກ້າວ-ຂັ້ນຕອນທີ່ນິຕິກຳໄດ້ກຳນົດໄວ້; ການກະກຽມດ້ານເນື້ອໃນ, ບຸກຄະລາກອນ ແລະ ຂະບວນການ ຕ້ອງຮັບປະກັນຄຸນນະພາບ, ຖືກຕ້ອງ, ສອດຄ່ອງ ເໝາະກັບຈຸດພິເສດທ່າແຮງບົ່ມຊ້ອນຂອງທ້ອງຖິ່ນຕົນ ແລະ ທັນກັບກຳນົດເວລາທີ່ວາງໄວ້...ຯ

ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ເມືອງນ້ຳບາກ ຄັ້ງທີ X ໄດ້ຮັບຜົນສຳເລັດຢ່າງຈົບງາມ

ໂດຍ: ພອນສະຫວັນ ໄຊຊະນະ

ໃນລະຫວ່າງວັນທີ 13-14 ມັງກອນ 2025 ທີ່ຜ່ານມາ ອົງຄະນະພັກເມືອງນ້ຳບາກໄດ້ດຳເນີນກອງປະຊຸມໃຫຍ່ ຄັ້ງທີ X ຂອງຕົນ ດ້ວຍຜົນສຳເລັດຢ່າງຈົບງາມ ໂດຍມີ ສະຫາຍ ຄຳຂັນ ຈັນທະວິສຸກ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງຫຼວງພະບາງ ເປັນກຽດເຂົ້າຮ່ວມ ແລະ ໃຫ້ກຽດໂອ້ລົມ. ກອງປະຊຸມມີຜູ້ແທນສົມບູນເຂົ້າຮ່ວມ ທັງໝົດ 165 ສະຫາຍ, ຍິງ 08 ສະຫາຍ, ໃນນັ້ນ ມີຜູ້ແທນບົ່ງຕົວ 08 ສະຫາຍ, ຍິງ 01 ສະຫາຍ ທີ່ເປັນຕົວແທນໃຫ້ແກ່ສະມາຊິກພັກທັງໝົດ 2.913 ສະຫາຍ ແລະ ແຂກຖືກເຊີນເຂົ້າຮ່ວມທັງໝົດ 12 ສະຫາຍ.

ກອງປະຊຸມໃຫຍ່ ໄດ້ພ້ອມກັນຄົ້ນຄວ້າຢ່າງເລິກເຊິ່ງ ແລະ ໄດ້ຮັບຮອງເອົາຢ່າງເປັນເອກະສັນ ເນື້ອໃນລາຍງານການເມືອງ ຂອງຄະນະບໍລິຫານງານພັກເມືອງຄັ້ງທີ IX ຕໍ່ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກເມືອງຄັ້ງທີ X ໂດຍໄດ້ສະແດງຄວາມເຫັນດີເຫັນພ້ອມ ຕໍ່ການສະຫຼຸບຕີລາຄາໝາກຜົນແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງອົງຄະນະພັກເມືອງກໍຄືມະຕິ VIII ຂອງອົງຄະນະພັກແຂວງ ແລະ ມະຕິ XI ຂອງພັກ ເປັນຕົ້ນແມ່ນບັນດາຜົນສຳເລັດທີ່ພົ້ນ

ເດັ່ນ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມ, ການລົງກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດຮອບດ້ານ, ແກ້ໄຂຄວາມທຸກຍາກ ແລະ ວຽກງານສາມສ້າງ, ການປັບປຸງການບໍລິຫານລັດຂັ້ນຕ່າງໆ, ວຽກງານພົວພັນຕ່າງປະເທດ, ວຽກງານແນວລາວສ້າງຊາດ-ນັກຮົບເກົ່າ ແລະ ວຽກງານອົງການຈັດຕັ້ງມະຫາຊົນ, ວຽກງານກໍ່ສ້າງພັກ-ພະນັກງານ. ບັນດາຜົນສຳເລັດທີ່ບັນລຸໄດ້ໃນ 5 ປີ ຜ່ານມາ ໄດ້ສ້າງພື້ນຖານ ແລະ ທ່ອງທ່າອັນໃໝ່ໃຫ້ເມືອງນໍ້າບາກສືບຕໍ່ພັດທະນາຖືກຕ້ອງຕາມທິດທາງ ແລະ ຈຸດໝາຍທີ່ວາງໄວ້.

ຫາຍຜູ້ແທນໄດ້ຮັບຟັງການລາຍງານກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ 05 ປີ (2025-2029). ໃນນັ້ນ, ໄດ້ກຳນົດອອກ 06 ເປົ້າໝາຍໃຫຍ່ ເພື່ອສືບຕໍ່ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ປະກົດຜົນເປັນຈິງ; ກອງປະຊຸມໃຫຍ່ ຍັງໄດ້ຮັບຮອງເອົາບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກເມືອງຊຸດທີ IX ໂດຍໄດ້ຕີລາຄາສູງຕໍ່ຄວາມພະຍາຍາມອັນຕັ້ງໜ້າ ແລະ ຄວາມເປັນເຈົ້າການປະດິດສ້າງ ໃນການເສີມຂະຫຍາຍມູນເຊື້ອ ແລະ ບົດຮຽນຂອງຄະນະພັກຊຸດຜ່ານມາ, ສາມາດນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມ

ກອງປະຊຸມໃຫຍ່ ໄດ້ຮັບຮອງເອົາ ຂໍ້ສະຫຼຸບ 5 ປະການ ເຊິ່ງເປັນບົດຮຽນທີ່ຖອດຖອນໄດ້ ຈາກພຶດຕິກຳແຫ່ງການນຳພາຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຄັ້ງ IX ຂອງອົງຄະນະພັກເມືອງ ແລະ ຜົນງານ 40 ປີແຫ່ງການປ່ຽນແປງໃໝ່ຢູ່ເມືອງນໍ້າບາກ. ພ້ອມກັນນັ້ນ, ກໍ່ໄດ້ກຳນົດເອົາທິດທາງລວມ ແລະ 07 ຄາດໝາຍສູ້ຊົນຕົ້ນຕໍ ແຕ່ປີ 2025-2029; ນອກນັ້ນ, ບັນດາສະ

ໃຫຍ່ ຄັ້ງທີ IX ຂອງຕົນ ມີຜົນສຳເລັດອັນສຳຄັນ, ພົ້ນເດັ່ນຫຼາຍດ້ານ ແລະ ບາງດ້ານກໍໄດ້ລື່ນຄາດໝາຍ;ກອງປະຊຸມໃຫຍ່ ຍັງໄດ້ມອບໃຫ້ຄະນະບໍລິຫານງານພັກເມືອງ ຊຸດທີ X ສືບຕໍ່ເສີມຂະຫຍາຍຈຸດດີດ້ານຕ່າງໆຢ່າງແຂງແຮງ, ເຊີດຊູຄວາມເປັນແບບຢ່າງນຳໜ້າ ຂອງຄະນະພັກ ໃຫ້ສູງເດັ່ນຂຶ້ນເລື້ອຍໆ. ພ້ອມນີ້, ກໍ່ຕ້ອງວາງມາດຕະການ ຈຳກັດ, ແກ້ໄຂຈຸດອ່ອນ-ຂໍ້ຄົງຄ້າງຢ່າງ

ຈິງຈັງ, ສ້າງທຸກເງື່ອນໄຂ ເຮັດໃຫ້ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງນີ້ໃຫ້ມີຜົນສໍາເລັດຕາມລະດັບຄາດໝາຍ.

ກອງປະຊຸມໃຫຍ່ ໄດ້ປ່ອນບັດເລືອກຕັ້ງເອົາຄະນະບໍລິຫານງານພັກເມືອງ ຊຸດໃໝ່ ເຊິ່ງມີຜູ້ອອກສະໝັກຮັບເລືອກຕັ້ງທັງໝົດ 32 ສະຫາຍ, ຍິງ 04 ສະຫາຍ, ເລືອກເອົາ 27 ສະຫາຍ, 03 ສະຫາຍ ແລະ ເລືອກເອົາຄະນະປະຈໍາພັກເມືອງ ຈໍານວນ 09 ສະຫາຍຄື: 1. ສະຫາຍ ສົມຫວັງ ພອນຄໍາວົງສາ, 2. ສະຫາຍ ຄໍາສະໝອນ ເພັດດາລາ, 3. ສະຫາຍ ບຸນທັນ ຈັນທະສັກ, 4. ສະຫາຍ ທອງໄລ ກິນດາວົງ, 5. ສະຫາຍ ວັນແພງ ອຸດທະວິສັກ, 6. ສະຫາຍ ອາຄົມ ສັນຕິສຸກ, 7. ສະຫາຍ ບຸນຄົງ ລັດຕະນະຈິດ, 8. ສະຫາຍ ພັທ ນິນລະພົບ ຈັນທະວິສຸກ, 9. ສະຫາຍ ພັທ ສົມພອນ ສອນສຸພັນ.

ກອງປະຊຸມໄດ້ເລືອກເອົາເລຂາພັກເມືອງ, ຮອງເລຂາພັກເມືອງ ຄື: ເລືອກເອົາສະຫາຍສົມຫວັງ ພອນຄໍາວົງສາ ເປັນເລຂາພັກເມືອງ, ສະຫາຍ ຄໍາສະໝອນ ເພັດດາລາ ແລະ ສະຫາຍ ບຸນທັນ ຈັນທະສັກ ເປັນຮອງເລຂາພັກເມືອງ; ເລືອກເອົາປະທານ, ຮອງປະທານກວດກາພັກເມືອງຄື: ສະຫາຍ ວັນແພງ ອຸດທະວິສັກ ເປັນປະທານກວດກາພັກເມືອງ, ສະຫາຍ ຈັນທິມະນີແສງ ແລະ ສະຫາຍ ບົວເກດ ອໍລະສົມ ເປັນຮອງປະທານກວດກາພັກເມືອງ; ກອງປະຊຸມຍັງໄດ້ເລືອກເອົາຜູ້ແທນສົມບູນ ແລະ ຜູ້ແທນສໍາຮອງ ເພື່ອໄປຮ່ວມກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ IX ຂອງອົງຄະນະພັກແຂວງ ລວມມີ 14 ສະຫາຍ, ຍິງ 01 ສະຫາຍ.

ໃນຕອນທ້າຍກອງປະຊຸມໄດ້ຮັບຟັງການໂອ້ລົມຈາກ ສະຫາຍ ຄໍາຂັນ ຈັນທະວິສຸກ ກໍາມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງຫຼວງພະບາງ ເຊິ່ງສະຫາຍໄດ້ຕີລາຄາສູງຕໍ່ໝາກຜົນແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະພັກແຂວງ, ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງອົງຄະນະພັກເມືອງ ແລະ ການຈັດຕັ້ງປະຕິບັດບັນ ດາມະຕິຕ່າງໆໃນຊຸມປີຜ່ານມາ; ພ້ອມນັ້ນ, ສະຫາຍ ຍັງໄດ້ສະແດງຄວາມເປັນຫ່ວງເປັນໄຍ ພ້ອມທັງໃຫ້ທິດຊີ້ນໍາ ເພື່ອສືບຕໍ່ເສີມຂະຫຍາຍດ້ານດີທີ່ຕັ້ງໜ້າ ແລະ ປັບປຸງແກ້ໄຂຂໍ້ຄົງຄ້າງແຕ່ລະດ້ານໃຫ້ໝົດໄປ; ຮຽກຮ້ອງໃຫ້ຄະນະບໍລິ ຫານງານພັກເມືອງຊຸດໃໝ່ ສືບຕໍ່ນໍາພາ-ຊີ້ນໍາ ໃນການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດມະຕິກອງປະຊຸມໃຫຍ່ອົງຄະນະພັກເມືອງຊຸດນີ້ ໃຫ້ເຂົ້າສູ່ຊີວິດຕົວຈິງ ແລະ ມີຜົນສໍາເລັດ ຕາມລະດັບຄາດໝາຍ ທີ່ວາງໄວ້; ກອງປະຊຸມໃຫຍ່ ຍັງໄດ້ຮຽກຮ້ອງ ມາຍັງຜູ້ແທນກອງປະຊຸມ, ສະມາຊິກພັກ, ພະນັກງານ-ລັດຖະກອນທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ, ທຸກຂັ້ນຄົນໃນທົ່ວເມືອງ ຈົ່ງເຊີດຊູສະຕິປັນຍາ, ຄວາມຮູ້, ຄວາມສາມາດ ແລະ ດ້ານທຶນຮອນ, ເສີມຂະຫຍາຍຄວາມຮັບຜິດຊອບທາງດ້ານການເມືອງຂອງຕົນໃຫ້ສູງຂຶ້ນ ສູ້ຊົນສ້າງທຸກເງື່ອນໄຂ ເຮັດໃຫ້ເມືອງນໍ້າບາກ ເປັນເມືອງເຂັ້ມແຂງຮອບດ້ານ, ມີການຫັນປ່ຽນໃໝ່ທີ່ດີຢ່າງຕັ້ງໜ້າ, ຍາດໄດ້ຜົນງານ ແລະ ໄຊຊະນະໃໝ່ຍິ່ງໃຫຍ່ກວ່າເກົ່າ...ຯ

ໜຶ່ງສະໄໝແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາ ພາຍໃຕ້ການນຳພາ-ຊີ້ນຳຂອງອົງຄະນະພັກເມືອງຕົ້ນເຜິ້ງ ຊຸດທີ V

ໂດຍ: ສູນທອນ ທອງຊະນະ

ພາຍໃຕ້ການນຳພາຂອງຄະນະພັກ ເມືອງຕົ້ນເຜິ້ງ ໂດຍກຳແໜ້ນແນວທາງນະໂຍບາຍຂອງພັກກ່ຽວກັບການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ, ກຳແໜ້ນ ແລະ ເປັນເຈົ້າການນຳພາຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ພັກ-ລັດ ວາງອອກໃນແຕ່ລະໄລຍະ ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນທົ່ວເມືອງຕົ້ນເຜິ້ງ ມີການຫັນປ່ຽນດີຂຶ້ນເທື່ອລະກ້າວໃນຫຼາຍດ້ານທຽບໃສ່ໃນເມື່ອກ່ອນ.

ເຖິງແມ່ນວ່າໃນໄລຍະຜ່ານມາ ສະພາບແວດລ້ອມທາງສາກົນ ກໍ່ຄືພາຍໃນປະເທດ ເວົ້າລວມ, ເວົ້າສະເພາະ ເມືອງຕົ້ນເຜິ້ງ ມີຄວາມຫຍຸ້ງຍາກສັບສົນຫຼາຍດ້ານ, ແຕ່ເຖິງຢ່າງໃດກໍ່ດີ ໃນໄລຍະ 5 ປີ ຜ່ານມານີ້ ກໍ່ຄືນັບແຕ່ກອງປະຊຸມໃຫຍ່ອົງຄະນະພັກເມືອງ ຄັ້ງທີ V ມາເຖິງກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກເມືອງ ຄະນະພັກ, ອຳນາດການປົກຄອງ ແລະ ປະຊາຊົນຊາວເມືອງຕົ້ນເຜິ້ງ ສາມາດຍາດໄດ້ຜົນງານ ແລະ ໄຊຊະນະອັນໃຫຍ່ຫຼວງຮອບດ້ານໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາທ້ອງຖິ່ນຂອງຕົນ. ກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກເມືອງຕົ້ນເຜິ້ງ ໄດ້ດຳເນີນ ແລະ ມີຜົນສຳເລັດຢ່າງຈົບງາມ ໃນລະຫວ່າງ ວັນທີ 9-10 ມັງກອນ 2025 ຜ່ານມາ ເຊິ່ງໃນບົດລາຍງານການເມືອງ ກໍ່ໄດ້ສະແດງໃຫ້ເຫັນການເຄື່ອນໄຫວນຳພາ-ຊີ້ນຳວຽກງານຮອບດ້ານຂອງອົງຄະນະພັກເມືອງໃນແຕ່ລະດ້ານດັ່ງນີ້:

ການນຳພາ-ຊີ້ນຳ ຂົງເຂດເສດຖະກິດ ໄດ້ຖືເອົາການພັດທະນາເສດຖະກິດ ເປັນໃຈກາງຕາມທິດສີຂຽວ ແລະ ຍືນຍົງຂອງກອງປະຊຸມໃຫຍ່ ຄັ້ງທີ V ໂດຍການ

ສຸມໃສ່ຊຸກຍູ້ການລົງທຶນຂອງລັດເອກະຊົນພາຍໃນ ແລະ ຕ່າງປະເທດ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ຜັນຂະຫຍາຍບັນດາແຜນວຽກຕ່າງໆ ຂອງວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ອໍານວຍຄວາມສະດວກໃຫ້ນັກລົງທຶນ ແລະ ຜູ້ປະກອບການພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນຢູ່ເມືອງ; ດ້ານເສດຖະກິດ ໃນໄລຍະ 5 ປີຜ່ານມາ ໄດ້ມີການຂະຫຍາຍຕົວ ສະເລ່ຍລະດັບ 3,8% ຕໍ່ປີ (ຄາດໝາຍສູ້ຊົນໃນມະຕິ V 6,7%) ລວມຍອດຜະລິດຕະພັນພາຍໃນ (GDP) ບັນລຸ 556,28 ຕື້ກີບ ທຽບໃສ່ແຜນການ 5 ປີ (678,76 ຕື້ກີບ) ປະຕິບັດໄດ້ 81,96%, ສະເລ່ຍລາຍຮັບຕໍ່ຫົວຄົນໄດ້ 15 ລ້ານກວ່າກີບ/ຄົນ/ປີ ທຽບໃສ່ 5 ປີ ຜ່ານມາ ເພີ່ມຂຶ້ນ 5,45% ເປັນເງິນໂດລາສະຫະລັດ ເທົ່າກັບ 714,95 ໂດລາສະຫະລັດ/ຄົນ/ປີ (ຈໍານວນປະຊາກອນ 34.265 ຄົນ) ທຽບໃສ່ແຜນ 5 ປີ (2.089 ໂດລາສະຫະລັດ) ຫຼຸດລົງ 1.374 ໂດລາສະຫະລັດ; ຈັດເກັບລາຍຮັບເຂົ້າງົບປະມານໄດ້ 32,880 ລ້ານກີບ, ທຽບໃສ່ແຜນການ 5 ປີ ປະຕິບັດໄດ້ 99,64%; ປະຕິບັດລາຍຈ່າຍໄດ້ 120,827 ລ້ານກີບ, ທຽບໃສ່ແຜນການ 5 ປີປະຕິບັດໄດ້ 67,05% ແລະ ວຽກງານທະນາຄານກໍ່ໄດ້ຮັບການປັບປຸງ ແລະ ຫັນເປັນທັນສະໄໝ ບໍລິການໂປ່ງໃສ, ວ່ອງໄວກວ່າເກົ່າ; ປ່ອຍເງິນກູ້ໄດ້ 43,317 ລ້ານກວ່າກີບ ກວມເອົາ 17,66% ທຽບແຜນ 5 ປີ ຫຼຸດລົງ 83,9% ແລະ ປະຕິບັດໄດ້ພຽງ 14,78%.

- ພື້ນຖານໂຄງລ່າງຄົມມະນາຄົມ ໄດ້ຮັບການກໍ່ສ້າງ, ຍົກລະດັບ, ສໍາຫຼວດອອກແບບຜັງເມືອງ ແລະ ຄຸ້ມຄອງເຄຫາຜັງເມືອງ ເຊິ່ງ 5 ປີຜ່ານມາ ເຫັນວ່າມີຫຼາຍໜ້າວຽກໄດ້ຮັບຜົນສໍາເລັດເຊັ່ນ: ການກໍ່ສ້າງເສັ້ນທາງແຕ່ບ້ານມອມ-ບ້ານຫ້ວຍໄຄ້, ສ້ອມແປງ-ຟື້ນຟູເສັ້ນທາງຊົນນະບົດຄື: ນໍ້າເກິ່ງເກົ່າ-ນາຄໍາ, ສີເມືອງງາມ-ສີດອນຄູນ, ສີ່ແຍກຕົ້ນເຜີ້ງ-ທາງເບຕົງ, ທາງແຍກບ້ານໂພນໂຮມ, ທາງແຍກທະຫານ-ທາງເບຕົງ, ພອນສະຫວັນ-ສີມຸງຄຸນ, ດອນແກ້ວ-ປຸ່ງຮ້ອນ. ນອກນັ້ນ, ຍັງໄດ້ສ້າງຂົວເຫຼັກຫ້ວຍອໍ້, ຂົວອູ່ນໍ້າຟ້າ ແລະ ຂົວນໍ້າລົ້ນນາຄໍາ. ຄຸ້ມຄອງຜັງເມືອງ, ການປຸກສ້າງ, ການຕິດຕັ້ງຕ່າງໆ, ການຖົມດິນ, ຕັດຜັງທາງຊອຍເທດສະບານ, ສໍາຫຼວດ, ຂຶ້ນແຜນອອກແບບ ແລະ ປັບປຸງຜັງເມືອງຄື: ຈຸດສຸມບ້ານມອມ, ສີເມືອງງາມ, ນໍ້າເກິ່ງ ແລະ ຈຸດສຸມນາຄໍາ; ຄຸ້ມຄອງ-ສະໜອງນໍ້າປະປາ ໃຫ້ປະຊາຊົນເທດສະບານເມືອງຕົ້ນເຜີ້ງ ແລະ ຈຸດສຸມນໍ້າເກິ່ງ; ຄຸ້ມຄອງ-ນໍາໃຊ້ ແລະ ພັດທະນາທີ່ດິນໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ພ້ອມທັງກວດກາ, ອອກສິດນໍາໃຊ້ທີ່ດິນໄດ້ທັງໝົດ 996 ຕອນ, ເນື້ອທີ່ 1.501,28 ເຮັກຕາ ທຽບໃສ່ແຜນການ 5 ປີ ປະຕິບັດໄດ້ 75,55%, ປ່ຽນເອກະສານ 01 ເກົ່າທີ່ໝົດອາຍຸນໍາໃຊ້ໄດ້ 973 ຕອນ, ເນື້ອທີ່ 376 ເຮັກຕາ ປະຕິບັດໄດ້ 79% ຂອງແຜນ, ຈົດທະບຽນທີ່ດິນຖາວອນ 4.705 ຕອນ, ເນື້ອທີ່ 1.474,74 ເຮັກຕາ, ປະຕິບັດໄດ້ 87,8% ຂອງແຜນ; ເອົາໃຈໃສ່ປົກປັກຮັກສາສິ່ງແວດລ້ອມ ສ້າງໜ່ວຍບໍລິການເກັບຂີ້ເຫຍື້ອ 5 ຫົວໜ່ວຍ ແລະ ຄຸ້ມຄອງປ່າສະຫງວນ, ປ່າປ້ອງກັນຫ້ວຍນໍ້າເກິ່ງ-ນໍ້າຍາວ.

- ໄດ້ຂະຫຍາຍຕາຄ່າຍໄຟຟ້າ ໄປສູ່ຄົວເຮືອນກວມ 38 ບ້ານ, ຊຸກຍູ້, ຕິດຕາມການຕິດຕັ້ງໄຟຟ້າເຍືອງທາງຢູ່ຈຸດສຸມບ້ານໃຫຍ່ນໍ້າເກິ່ງເກົ່າ-ນໍ້າເກິ່ງໃໝ່, ບ້ານສີເມືອງງາມ, ບ້ານພຽງງາມ ແລະ ບ້ານມອມ 89 ຊຸດ; ຊຸກຍູ້ເກັບເງິນເຂົ້າກອງທຶນ ເພື່ອບູລະນະໃນການບໍາລຸງຮັກສາໄຟຟ້າເຍືອງທາງມີເງິນທັງໝົດ 27 ລ້ານກວ່າກີບ, ຄຸ້ມຄອງການຂຸດຄົ້ນຫີນ-ບໍ່ດິນ ແລະ ໂຮງງານໄມ້ຫີນໃຫ້ເຂົ້າສູ່ລະບຽບກົດໝາຍ; ໄດ້ລົງກວດກາ ແລະ ວັດແທກມາດຕະຖານ ໝໍ້ນັບໄຟຟ້າ-ນໍ້າປະປາ, ຫົວຈ່າຍນໍ້າມັນ, ຊີງຊັ່ງ-ຜອງຢູ່ບັນດາຫ້າງຮ້ານ, ໂຮງງານ, ຕະຫຼາດໃນທົ່ວເມືອງໃຫ້ຖືກຕ້ອງຕາມມາດຕະຖານ, ຂຶ້ນທະບຽນຜະລິດຕະພັນໂຮງງານດິນບ໋ອກ-ດິນຈີ່, ພ້ອມທັງຊຸກຍູ້ການຜະລິດໄປສູ່ຄຸນນະພາບທີ່ໄດ້ມາດຖານເທື່ອລະກ້າວ;

ການນໍາພາ-ຊີ້ນໍາ ຂົງເຂດວັດທະນະທໍາ-ສັງຄົມ ໄດ້ຖືເອົາການຍົກສູງຄຸນນະພາບການສຶກສາ, ຖືເອົາການກັນພະຍາດ ແລະ ການປິ່ນປົວເປັນສໍາຄັນ; ປັບປຸງຄຸນນະພາບສື່ມວນຊົນ, ອະນຸລັກວັດທະນະທໍາບັນ

ດາເຜົ່າ, ຄຸ້ມຄອງແຮງງານ ແລະ ນະໂຍບາຍປະກັນສັງຄົມ ເປັນຕົ້ນແມ່ນໄດ້ພັດທະນາການສຶກສາຕາມ 3 ລັກສະນະ 5 ຫຼັກມູນ, ສາມາດບັນລຸໄດ້ 12 ຄາດໝາຍ ທຽບໃສ່ 5 ປີຜ່ານມາ ເພີ່ມຂຶ້ນ 5 ຄາດໝາຍ (ໃນ 15 ຄາດໝາຍ) ພື້ນຖານການສຶກສາ ມີໂຮງຮຽນ 53 ແຫ່ງ; ສ້າງໂຮງຮຽນປະຖົມ-ມັດທະຍົມປອດຢາເສບຕິດ ເພີ່ມຂຶ້ນ 27 ແຫ່ງກວມ 100%. ນັກຮຽນເກັ່ງໄປເສັງຢູ່ລະດັບແຂວງ 11 ນ້ອງ, ເຂົ້າສອບເສັງນັກຮຽນເກັ່ງລະດັບຊາດ 1 ນ້ອງ ຍາດໄດ້ອັນດັບ 4. ບໍາລຸງ, ຊັ້ນມັດທະຍົມຕົ້ນຄືນໃຫ້ກຸ່ມເປົ້າໝາຍທີ່ຕົກຄ້າງ 349 ຄົນ ທຽບໃສ່ 5 ປີຫຼຸດລົງ 935 ຄົນ. ໄປຄຽງຄູ່ກັນນັ້ນ, ວຽກງານກິລາກາຍຍະກໍາກໍ່ໄດ້ສົ່ງເສີມພັດທະນາປະເພດກິລາຕ່າງໆເຊັ່ນ: ພື້ນຖານໂຄງລ່າງເດີ່ນກິລາ 1 ແຫ່ງ (ເອກະຊົນພາຍໃນ) ຈັດການແຂ່ງຂັນກິລາປະເພດຕ່າງໆ ໃນໂອກາດສໍາຄັນຂອງພັກຂອງຊາດເປັນຂະບວນການຟົດຟື້ນສົມຄວນ; ຕາໜ່າງສາທາລະນະສຸກ ກໍ່ໄດ້ຂະຫຍາຍສູ່ຮາກຖານຊົນນະບົດຢ່າງທົ່ວເຖິງ ແລະ ມີຄຸນະພາບດີ, ຍຸຕິທໍາ, ສະເໝີພາບ ແລະ ທັນເປັນທັນສະໄໝດີຂຶ້ນເຊັ່ນ: ຄວາມຮູ້ຄວາມສາມາດ, ຈັນຍາທໍາ, ປັບປຸງການຄຸ້ມຄອງບໍລິຫານ ແລະ ລະບົບຂໍ້ມູນຂ່າວສານສາທາລະນະສຸກ; ຂະຫຍາຍນະໂຍບາຍກອງທຶນປະກັນສຸຂະພາບແຫ່ງຊາດໄປສູ່ເຂດຊົນນະບົດຫ່າງໄກສອກຫຼີກ ເຮັດໃຫ້ປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງການບໍລິການດ້ານສາທາລະນະສຸກ; ທົ່ວເມືອງມີໂຮງໝໍເມືອງ 1 ແຫ່ງ, ສຸກສາລາ 7 ແຫ່ງ, ຫ້ອງກວດພະຍາດເອກະຊົນ 4 ແຫ່ງ, ຮ້ານຂາຍຢາ 11 ຮ້ານ. ອັດຕາການຊົມໃຊ້ນໍ້າສະອາດ 97,19% ແລະ ອັດຕາການຊົມໃຊ້ວິດຖ່າຍ 97,58% ແລະ ບັນລຸ 11 ຕົວຊີ້ວັດ ທີ່ສະພາຮັບຮອງ, ປະກາດເປັນເມືອງສາທາລະນະສຸກແບບຢ່າງ ແລະ ເມືອງຢຸດຕິການຖ່າຍຊະຊາຍ.

ການນໍາພາ-ຊີ້ນໍາ ຂົງເຂດລະບົບການເມືອງ ໂດຍມີການຈັດຕັ້ງການສຶກສາອົບຮົມທາງດ້ານການເມືອງຢ່າງເປັນປົກກະຕິ, ຕໍ່ເນື່ອງ ເຮັດໃຫ້ຄວາມເຊື່ອໝັ້ນຕໍ່ການນໍາພາ ຂອງພັກ, ສະຕິຕື່ນຕົວ, ຈິດໃຈຮັກຊາດຮັກລະບອບໃໝ່ ຂອງພະນັກງານ-ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າໄດ້ຮັບການເຊີດຊູຂຶ້ນຕື່ມ ເປັນຕົ້ນແມ່ນ ວຽກງານກໍ່ສ້າງພັກ-ພະນັກງານ ໄດ້ນໍາພາກໍ່ສ້າງພະນັກງານເລີ່ມຈາກການສຶກສາອົບຮົມການເມືອງ-ນໍາພາແນວຄິດເປັນກົກ ແລະ ສອດຫ້ອຍໃນທຸກຂົງເຂດວຽກງານ; ເອົາໃຈໃສ່ຂຶ້ນແຜນກໍານົດພະນັກງານນໍາພາຄຸ້ມຄອງຂັ້ນເມືອງຄຸ້ມຄອງ, ທົ່ວເມືອງ ມີພະນັກງານ 617 ຄົນ, ຍິງ 281 ຄົນ ຫຼຸດລົງ 35 ຄົນ (ຍ້ອນບາງຄົນເຂົ້າຮັບອຸດໜູນບໍານານ ແລະ ລາອອກສ້າງເສດຖະກິດຄອບຄົວ); ເລືອກເຟັ້ນພະນັກງານໄປບໍາລຸງ, ຍົກລະດັບດ້ານວິຊາສະເພາະ, ທິດສະດີພາຍໃນ ແລະ ຕ່າງປະເທດຢ່າງຕໍ່ເນື່ອງເຊັ່ນ: ຮຽນແນວທາງການເມືອງ ທິດສະດີ 10 ວັນ, 15 ວັນ, 45 ວັນ 236 ສະຫາຍ; ຮຽນທິດສະດີຂັ້ນຕົ້ນ, ຂັ້ນກາງ, ຂັ້ນສູງ 39 ສະຫາຍ ແລະ ຍົກລະດັບປະລິນຍາຕີ, ໂທ ແລະ ເອກ 3 ສະຫາຍ ຕິດພັນກັບການຍົກສູງຄຸນນະພາບ, ຄວາມຮັບຜິດຊອບພະນັກງານ ກໍ່ໄດ້ປະເມີນພະນັກງານ-ລັດຖະກອນ ສາມາດຕີລາຄາພະນັກງານດີຫຼາຍ 953 ເທື່ອຄົນ, ຍິງ 383 ເທື່ອຄົນ (ບໍ່ນັບພະນັກງານຄູ).

ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານນັກຮົບ, ພະນັກງານ, ສະມາຊິກພັກ ແລະ ປະຊາຊົນ ຮັບຮູ້ກົນອຸບາຍທັນປ່ຽນໂດຍສັນຕິ ຂອງສັດຕູ-ກຸ່ມຄົນບໍ່ດີທີ່ຫວັງທໍາລາຍມ້າງເພລະບອບໃໝ່ຂອງພວກເຮົາ; ເອົາໃຈໃສ່ປັບປຸງກໍ່ສ້າງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສາມາດຮັກສາສະຖຽນລະພາບທາງສັງຄົມ-ການເມືອງ ພາຍໃນເມືອງຕົ້ນເຜິ້ງໄດ້ໂດຍພື້ນຖານ ເຊິ່ງສາມາດຍາດໄດ້ຜົນສໍາເລັດໃນບາງດ້ານໄດ້ເຊັ່ນ: ປັບປຸງກໍາລັງກອງຫຼອນບ້ານ 7 ກອງຮ້ອຍ, 24 ໝວດ, 72 ໝູ່, ມີຈໍານວນ 152 ຄົນ, ມີບ້ານປ້ອງກັນຊາດເຂັ້ມແຂງ 17 ບ້ານ, ເພີ່ມຂຶ້ນ 16 ບ້ານ; ກໍາລັງສໍາຮອງມີ 143 ຄົນ; ອົບຮົມການເມືອງ-ການທະຫານໃຫ້ກອງຫຼອນບ້ານໄດ້ 4 ກຸ່ມບ້ານ ແລະ 4 ບ້ານໃຫຍ່ ມີຈໍານວນພົນເຂົ້າຮ່ວມ 267 ສະຫາຍ , ປັບປຸງກໍາລັງກອງຫຼອນໄດ້ 18 ບ້ານ; ປຸກລະດົມຊາວໜຸ່ມເປັນທະຫານພັນທະໄດ້ 50 ຄົນ ແລະ ຈັດຝຶກອົບຮົມ-ຫັດແອບຄວາມຮູ້ພື້ນຖານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະ

ຫງົບໃຫ້ນັກຮຽນຊັ້ນ ມ.7 ຈໍານວນ 2 ແຫ່ງ ໄດ້ 5 ຊຸດ ມີນ້ອງນັກຮຽນເຂົ້າຮຽນ 890 ຄົນ, ຍິງ 456 ຄົນ; ໄດ້ເອົາໃຈໃສ່ກໍ່ສ້າງກໍາລັງປ້ອງກັນຄວາມສະຫງົບຂອງເມືອງ ໃຫ້ມີຄວາມໜັກແໜ້ນ; ຕ້ານ-ສະກັດກັ້ນປະກົດການຫຍໍ້ທໍ້ໃນສັງຄົມ ດ້ວຍການຫັນລົງກໍ່ສ້າງຮາກຖານການເມືອງຕາມ 4 ເນື້ອໃນ 4 ຄາດໝາຍ ຕິດພັນກັບ 8 ແຜນວຽກ ຂອງກະຊວງປ້ອງກັນຄວາມສະຫງົບ ກວມເອົາ 13 ບ້ານ, ນໍາໃຊ້ກໍາລັງຂອງເມືອງ, ແຂວງ ແລະ ກະຊວງ 89 ສະຫາຍ; ທົ່ວເມືອງມີບ້ານປ້ອງກັນຄວາມສະຫງົບດີ 19 ບ້ານ ເພີ່ມຂຶ້ນ 13 ບ້ານ.

ບັນດາຜົນສໍາເລັດທີ່ກ່າວມານັ້ນ ແມ່ນໝາກຜົນລວມຍອດແຫ່ງຄວາມສາມັກຄີ, ຄວາມບຸກບືນສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກນາໆປະການ ຂອງທົ່ວອົງຄະນະພັກ, ທົ່ວກໍາລັງປະກອບອາວຸດ ແລະ ທົ່ວປວງຊົນຊາວເມືອງຕົ້ນເຜິ້ງ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາທ້ອງຖິ່ນຂອງຕົນ. ຄຽງຄູ່ກັບຜົນງານ ແລະ ໄຊຊະນະທີ່ຍາດມາໄດ້ຂ້າງເທິງນັ້ນ ກໍ່ຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງບາງດ້ານ ທີ່ຄະນະພັກ, ຄະນະນໍາໃນຊຸດທີ VI ຈະຕ້ອງໄດ້ເອົາໃຈໃສ່ດັ່ງນີ້:

1. ການສຶກສາອົບຮົມການເມືອງ-ແນວຄິດ ເຖິງແມ່ນໄດ້ດໍາເນີນຢ່າງປົກກະຕິ-ຕໍ່ເນື່ອງ ແຕ່ຄວາມຮັບຮູ້ຂອງສະມາຊິກພັກ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນຈໍານວນໜຶ່ງ ຕໍ່ການກໍາແໜ້ນແນວທາງ, ແຜນນະໂຍບາຍຂອງພັກບໍ່ທັນເລິກເຊິ່ງ ສະມາຊິກພັກ-ພະນັກງານຈໍານວນໜຶ່ງມີແນວຄິດເສື່ອມຖອຍ; ສວຍໃຊ້ໜ້າທີ່ຄວາມຮັບຜິດຊອບທາງການເມືອງ ທີ່ໄດ້ຮັບມອບໝາຍ, ປະກົດການຫຍໍ້ທໍ້ຕ່າງໆ ທີ່ມີບໍ່ທັນໄດ້ຮັບການແກ້ໄຂຢ່າງທັນການ.

2. ດ້ານເສດຖະກິດ ເຖິງແມ່ນມີທ່າອ່ຽງຂະຫຍາຍຕົວໃນທ່າອ່ຽງກ້າວຂຶ້ນ, ແຕ່ວ່າການປູກ-ການລ້ຽງ, ການຜະລິດສິນຄ້າວິສາຫະກິດຂະໜາດນ້ອຍ-ຂະໜາດກາງ, ການສະໜອງຄວາມຕ້ອງການພາຍໃນ ເພື່ອສ້າງລາຍຮັບໃຫ້ປະຊາຊົນບໍ່ທັນຂະຫຍາຍຕົວທີ່ໝັ້ນທ່ຽງ-ຍືນຍົງ, ສ່ວນຫຼາຍຍັງອາໄສການນໍາເຂົ້າສິນຄ້າຈາກຕ່າງແຂວງ ແລະ ຕ່າງປະເທດເປັນສ່ວນໃຫຍ່; ການຄຸ້ມຄອງຕະຫຼາດ, ລາຄາສິນຄ້າ, ເງິນຕາ, ການຂຸດດິນ, ຖົມດິນບໍ່ທັນເຂັ້ມງວດ. ທ່າແຮງບົ່ມຊ້ອນຖານລາຍຮັບມີຫຼາຍ ແຕ່ການຕິດຕາມ, ກວດກາຖານລາຍຮັບ ແລະ ຄຸ້ມຄອງຊັບສິນຂອງລັດບໍ່ທັນຮັດກຸມ, ມາດຕະການຫັນເປັນທັນສະໄໝໃຫ້ຜູ້ປະກອບການຈັດຕັ້ງປະຕິບັດຍັງບໍ່ທັນເປັນຮູບປະທໍາ ແລະ ການສ້າງຄວາມເຂັ້ມແຂງໃຫ້ບ້ານໂດຍການແບ່ງຂັ້ນຄຸ້ມຄອງປະຕິບັດໄດ້ໜ້ອຍ.

3. ການກໍາແໜ້ນແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຂອງພັກ, ສະຕິເປັນເຈົ້າຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຍັງບໍ່ທັນເລິກເຊິ່ງ ແລະ ທົ່ວເຖິງ ຈຶ່ງພາໃຫ້ເກີດມີປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນເປັນຕົ້ນແມ່ນບັນຫາການລັກລອບເອົາແຮງງານ, ສິນຄ້າເຂົ້າ-ອອກຕາມຊາຍແດນແບບບໍ່ຖືກຕ້ອງ, ການລັກຊັບ-ປຸ້ນຈີ້, ຄາດຕະກໍາ, ອຸບັດຕິເຫດຕາມທ້ອງຖະໜົນ, ການຄ້າມະນຸດ ແລະ ອື່ນໆ.

4. ຂົງເຂດວັດທະນະທໍາ-ສັງຄົມ ເຫັນວ່າຄາດໝາຍການພັດທະນາວຽກງານສຶກສາທີ່ສະພາຮັບຮອງຍັງບໍ່ບັນລຸ 3 ຄາດໝາຍ, ເກີດປະກົດການຖູຂໍລາອອກມີຈໍານວນເພີ່ມຂຶ້ນ; ຕາໜ່າງສາທາລະນະສຸກຂະຫຍາຍຕົວສູ່ຊົນນະບົດ, ບ້ານສາທາລະນະສຸກ ບັນລຸຢ່າງຫຼວງຫຼາຍ ແຕ່ຄຸນນະພາບ, ທາງສຽງສັງຄົມຕໍ່ຄວາມຮັບຜິດຊອບຂອງພະນັກງານແພດໝໍຈໍານວນໜຶ່ງຍັງມີ; ແບບແຜນການດໍາລົງຊີວິດອັນດີງາມຖືກຕີຖອຍ; ການຫຼິ້ນກິນຟຸມເຟືອຍ; ການຄຸ້ມຄອງຮ້ານອາຫານ, ຮ້ານກິນດື່ມ ຮ້ານບັນເທີງ, ເຮືອນພັກ, ໂຮງແຮມ ຍັງບໍ່ທັນເຂັ້ມງວດຕາມລະບຽບການ; ການສົ່ງເສີມ-ວຽກເຮັດງານທໍາ, ສ້າງສີມືແຮງງານຍັງເຮັດໄດ້ໜ້ອຍ ແລະ ການຄຸ້ມຄອງແຮງງານພາຍໃນ-ຕ່າງປະເທດ ບໍ່ທັນຮັດກຸມ ແລະ ເຂັ້ມງວດແທ້.

5. ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ ເຖິງແມ່ນໄດ້ຫຼາຍ ແຕ່ບາງດ້ານຄຸນນະພາບບໍ່ສູງ ແລະ ມີລັກສະນະແລ່ນນໍາປະລິມານ ຖືເບົາຄຸນນະພາບ; ການສຶກສາອົບຮົມການເມືອງໃຫ້ແຕ່ລະກຸ່ມເປົ້າໝາຍຍັງມີລັກສະ

ນະລວມໆ, ບໍ່ເລີກເຊິ່ງເຫດເຖິງ ຈຶ່ງເກີດມີປະກົດການຫຍໍ້ທໍ້ເກີດຂຶ້ນໃນທ້ອງຖິ່ນຮາກຖານ ຕໍ່ສະມາຊິກອົງການຈັດຕັ້ງມະຫາຊົນຈຳນວນໜຶ່ງເຊັ່ນ: ຢາເສບຕິດ, ການຢ່າຮ້າງ ແລະ ການໃຊ້ຄວາມຮຸນແຮງໃນຄອບຄົວ.

6. ການກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເຖິງແມ່ນກະຊວງ, ແຂວງ ແລະ ເມືອງໄດ້ເອົາໃຈໃສ່ຫັນພະນັກງານລົງກໍ່ສ້າງຮາກຖານການເມືອງປະຈຳຈຸດສຸມຕ່າງໆຢ່າງຕໍ່ເນື່ອງກໍ່ຕາມ ແຕ່ມີຫຼາຍຄາດໝາຍ ຍັງບໍ່ບັນລຸເຊັ່ນ: ຍັງມີບ້ານທຸກຍາກ 2 ບ້ານ, ຊົນນະບົດຕົວແບບ ຍັງມີຫຼາຍຕົວຊີ້ວັດບໍ່ທັນມີຄວາມຄືບໜ້າ, ການສ້າງບ້ານພັດທະນາໄດ້ໜ້ອຍ ແລະ ບາງຕົວຊີ້ວັດສ້າງບ້ານພົ້ນທຸກ, ສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ແລະ ບ້ານພົ້ນທຸກຄຸນນະພາບບໍ່ສູງ.

7. ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເຖິງແມ່ນໄດ້ຫຼາຍ ແຕ່ມີບາງໜ່ວຍຄຸນນະພາບບໍ່ທັນສູງ, ມີສະມາຊິກພັກຖືກວິໄນລຶບຊື່ອອກຈາກການຈັດຕັ້ງພັກ 7 ສະຫາຍ ແລະ ຄວາມເປັນແບບຢ່າງນຳໜ້າໃນການເຄື່ອນໄຫວວຽກງານ ຂອງສະມາຊິກ, ຄະນະພັກບາງສະຫາຍດ້ານແບບແຜນນຳພາ-ວິທີເຮັດວຽກ ແລະ ຄວາມຮັບຜິດຊອບທາງການເມືອງບໍ່ສູງແທ້.

ເຖິງຢ່າງໃດກໍ່ຕາມ ກອງປະຊຸມໃຫຍ່ ຄັ້ງທີ VI ອົງຄະນະພັກເມືອງຕົ້ນເຜິ້ງໃນຄັ້ງນີ້ ຍັງໄດ້ວາງທິດທາງໜ້າທີ່ ໃນຊຸມປີຕໍ່ໜ້າດັ່ງນີ້:

1. ເດັດດ່ຽວຍຶດໝັ້ນ ແລະ ຜັນຂະຫຍາຍແນວທາງປ່ຽນແປງໃໝ່ທີ່ມີຫຼັກການ, ສືບຕໍ່ສ້າງບາດກ້າວບຸກທະລຸ 4 ດ້ານຢ່າງແຂງແຮງ ແລະ ໃຫ້ເປັນຮູບປະທຳເພື່ອເຮັດໃຫ້ທຸກຊັ້ນຄົນມີຄວາມໜັກແໜ້ນ, ຕື່ນຕົວທາງດ້ານການເມືອງ, ມີສະຕິເຄົາລົບກົດໝາຍ, ມີຄວາມເສຍສະລະ ເພື່ອສ່ວນລວມ, ມີຄວາມເປັນເຈົ້າການປົກປັກຮັກສາສິ່ງແວດລ້ອມ, ປົກປັກຮັກສາຊັບສິນສ່ວນລວມ ແລະ ມີຄວາມດຸໝັ່ນ-ຂະຫຍັນພຽນ ພັດທະນາເສດຖະກິດຄອບຄົວດ້ວຍຄວາມເປັນເຈົ້າການ.

2. ຍົກລະດັບການຈັດຕັ້ງເຜີຍແຜ່ແນວທາງ, ແຜນນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ ຂອງຄະນະພັກຂັ້ນເທິງ, ມະຕິກອງປະຊຸມໃຫຍ່ ໃຫ້ທົ່ວປວງຊົນຮັບຮູ້, ເຊື່ອມຊຶມ, ກຳແໜ້ນຂຶ້ນຕື່ມ ເພື່ອເປັນບ່ອນອີງໃນການຈັດຕັ້ງຜັນຂະຫຍາຍໃຫ້ເລິກເຊິ່ງເຖິງຖອງ ຕິດພັນກັບສະຕິຄວາມເປັນເຈົ້າຕົນເອງ ແລະ ເປັນເຈົ້າຂອງປະເທດຊາດໃຫ້ສູງຂຶ້ນ.

3. ຈັດຕັ້ງຜັນຂະຫຍາຍແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຂອງພັກ, ຮັບປະກັນໃຫ້ທົ່ວເມືອງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບຢ່າງໜັກແໜ້ນ. ຍຶດໝັ້ນປະຕິບັດແນວທາງການຕ່າງປະເທດຕາມທິດເພີ່ມມິດ-ຫຼຸດຜ່ອນສັດຕູຂອງພັກ ເພື່ອພັດທະນາ ແລະ ສ້າງເງື່ອນໄຂສະດວກ ໃນການນຳເອົາຜົນປະໂຫຍດມາໃຫ້ປະຊາຊົນ.

4. ຊຸກຍູ້-ສົ່ງເສີມກຳລັງແຮງທົ່ວສັງຄົມ, ພາກສ່ວນເສດຖະກິດ ເຂົ້າໃນການປົກປັກຮັກສາ-ພັດທະນາເມືອງຕົ້ນເຜິ້ງ, ເສດຖະກິດມີການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແນໃສ່ສ້າງເມືອງຕົ້ນເຜິ້ງເປັນເມືອງເຂັ້ມແຂງ ຮອບດ້ານຕາມທິດສີຂຽວ-ຍືນຍົງ ແລະ ເພື່ອສ້າງເງື່ອນໄຂອັນໜັກແໜ້ນ ໃນການເຊື່ອມໂຍງກັບເຂດເສດຖະກິດພິເສດສາມຫຼ່ຽມຄຳ, ສົ່ງເສີມການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່.

5. ພັດທະນາດ້ານວັດທະນະທຳ-ສັງຄົມ ໃຫ້ສົມຄູ່ກັບການພັດທະນາເສດຖະກິດ, ຍົກສູງຄຸນນະພາບການສຶກສາ, ສາທາລະນະສຸກໃຫ້ສູງຂຶ້ນ, ພັດທະນາແຫຼ່ງທ່ອງທ່ຽວ ເພື່ອດຶງດູດນັກທ່ອງທ່ຽວ, ເອົາໃຈໃສ່ໃນການປະຕິບັດນະໂຍບາຍປະ ກັນສັງຄົມ ແລະ ນະໂຍບາຍສົງເຄາະ ໃຫ້ສອດຄ່ອງກັບລະບຽບການ.

6. ເສີມຂະຫຍາຍສິດເປັນເຈົ້າຂອງທຸກຊັ້ນຄົນໃນການທຳມາຫາກິນ, ດຳເນີນທຸລະກິດໃຫ້ຖືກຕ້ອງກັບແນວທາງຂອງພັກ, ກົດໝາຍຂອງລັດ, ປະຕິບັດສິດສະເໝີພາບກ່ຽວກັບບົດບາດຍິງ-ຊາຍ, ສິດສະເໝີພາບຕໍ່ໜ້າກົດໝາຍ, ມີຄວາມຍຸຕິທຳ, ສັງຄົມມີຄວາມສາມັກຄີປອງດອງ ແລະ ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ...ໆ

ອົງຄະນະພັກເມືອງຜາໄຊ ເອົາໃຈໃສ່ນຳພາ-ຊີ້ນຳຢ່າງຮອບດ້ານ ເຮັດໃຫ້ເມືອງໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ

ໂດຍ: ແສງຄຳ

ເມືອງຜາໄຊ ເປັນເມືອງໜຶ່ງທີ່ຂຶ້ນກັບແຂວງຊຽງຂວາງ ເຊິ່ງຕັ້ງຢູ່ທາງທິດຕາເວັນອອກສ່ຽງໃຕ້ຂອງແຂວງມີເສັ້ນທາງຫຼວງແຫ່ງຊາດ ເລກທີ 5 A ຜ່ານໄປສູ່ແຂວງໄຊສົມບູນ, ມີຊາຍແດນຕິດຈອດກັບບັນດາເມືອງ ຄື: ທິດເໜືອຕິດກັບເມືອງແປກ, ທິດໃຕ້ຕິດກັບເມືອງທ່າໂທມ ແຂວງໄຊສົມບູນ, ທິດຕາເວັນອອກຕິດກັບເມືອງຄູນ, ທິດຕາເວັນຕົກຕິດກັບເມືອງພູກູດ ແລະ ເມືອງລ້ອງແຈ້ງ ແຂວງໄຊສົມບູນ, ມີ 2 ກຸ່ມບ້ານພັດທະນາ, ລວມມີ 31 ບ້ານ, ມີ 2.439 ຄົວເຮືອນ, ມີພົນລະເມືອງທັງໝົດ 13.563 ຄົນ, ຍິງ 6.518 ຄົນ. ໃນນີ້, ເຜົ່າລາວລຸ່ມ ກວມ 48,57%, ເຜົ່າມົ້ງ ກວມ 35,61% ແລະ ເຜົ່າກຶມມຸ ກວມ 5,21%, ເຜົ່າໄຕດຳ ກວມ 10,46% ແລະ ມີເຜົ່າອື່ນໆອີກ ກວມ 0,14%, ປະຊາຊົນສ່ວນຫຼາຍມີອາຊີບເຮັດນາປູກເຂົ້າ, ປູກພືດຕາມລະດູການ ແລະ ລ້ຽງສັດໃຫຍ່-ນ້ອຍເປັນຕົ້ນຕໍ.

ໃນໄລຍະຜ່ານມາ ຄະນະພັກເມືອງໄດ້ເອົາໃຈໃສ່ນຳພາ-ຊີ້ນຳຢ່າງຮອບດ້ານ ບົນພື້ນຖານທ່າແຮງບົ່ມຊ້ອນຂອງເມືອງເປັນຕົ້ນແມ່ນ ໄດ້ສຸມໃສ່ການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າດ້ວຍຫຼາຍຮູບການ ໂດຍການຫັນເອົາພະນັກງານລົງກໍ່ສ້າງຮາກຖານການເມືອງ ປະຕິບັດຕົວຈິງຢູ່ 8 ກຸ່ມບ້ານ ຕາມມະຕິ 03/ກມສພ ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ຈຶ່ງເຮັດໃຫ້ເມືອງຜາໄຊ ສາມາດແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນເປັນກ້າວໆ. ມາຮອດປະຈຸບັນ ທົ່ວເມືອງມີບ້ານພົ້ນທຸກ 25 ບ້ານ (ຍັງມີບ້ານທຸກຍາກ 6 ບ້ານ, ທຽບໃສ່ປີຜ່ານມາຫຼຸດລົງ 5 ບ້ານ), ມີຄອບຄົວພົ້ນທຸກແລ້ວ 2.048 ຄອບຄົວ (ຍັງມີຄອບຄົວທຸກຍາກ 426 ຄອບຄົວ, ທຽບໃສ່ປີຜ່ານມາຫຼຸດລົງ 190 ຄອບຄົວ), ມີບ້ານພັດທະນາ 02 ບ້ານ, ຄອບຄົວພັດທະນາ 1.295 ຄອບຄົວ.

ຄະນະພັກເມືອງ ໄດ້ເອົາໃຈໃສ່ຈັດຕັ້ງເຊື່ອມຊຶມ ແລະຜັນຂະຫຍາຍບັນດາມະຕິ, ຄຳສັ່ງ, ຄຳແນະນຳ ຂອງສູນກາງພັກ, ແຂວງ, ນິຕິກຳລຸ່ມກົດໝາຍ ດ້ວຍຫຼາຍຮູບການຢ່າງເປັນປົກກະຕິຕໍ່ເນື່ອງ ເຮັດໃຫ້ພະນັກງານ, ສະມາຊິກພັກ, ປະຊາຊົນ ມີຄວາມຮັບຮູ້ເຂົ້າໃຈຕໍ່ແນວທາງ, ແຜນນະໂຍບາຍຂອງພັກ-ລັດ, ມີແນວຄິດອຸ່ນອຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ຕໍ່ປະຊາຊົນ, ເປັນເຈົ້າການຕ້ານທຸກກົນອຸບາຍຂອງກຸ່ມຄົນບໍ່ຫວັງດີຕໍ່ລະບອບໃໝ່ຂອງພວກເຮົາ, ມີຄວາມຕື່ນຕົວເປັນເຈົ້າການຈັດຕັ້ງປະຕິບັດຕາມແນວທາງຂອງພັກ, ມີສະຕິເຄົາລົບກົດລະບຽບຂອງພັກ ແລະ ກົດໝາຍຂອງລັດຢ່າງເຂັ້ມງວດ.

ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຄະນະພັກ ກໍ່ໄດ້ເອົາໃຈໃສ່ນຳພາ-ຊີ້ນຳຢ່າງຮອບ ດ້ານຕໍ່ກຳລັງ ປກຊ-ປກສ ເຮັດໃຫ້ກຳລັງປະກອບອາວຸດ ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ວິຊາສະເພາະ, ເປັນກຳລັງຫຼັກໃຫ້ແກ່ປະຊາຊົນບັນດາເຜົ່າເພື່ອປົກປັກຮັກສາສະຖຽນລະພາບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ເປັນເຈົ້າການຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຢ່າງກວ້າງຂວາງ, ສາມາດຮັບປະກັນຄວາມສະຫງົບປອດ

ໄພ 100%, ໄດ້ເອົາໃຈໃສ່ຍູ້ແຮງຂະບວນການສ້າງຄອບຄົວ ແລະ ບ້ານປ້ອງກັນຊາດເຂັ້ມແຂງ, ໃນນັ້ນໄດ້ປະເມີນຄອບຄົວ ແລະ ບ້ານປ້ອງກັນຊາດເຂັ້ມແຂງ ທັງໝົດ 826 ຄອບຄົວ ໃນ 15 ບ້ານ, ຮັບຮອງເອົາຄອບຄົວປອດຢາເສບຕິດທັງໝົດ 137 ຄອບຄົວ, ປະກາດໂຮງຮຽນປອດຢາເສບຕິດ 5 ໂຮງຮຽນ ແລະ ບ້ານປອດຢາເສບຕິດຈໍານວນ 4 ບ້ານ, ເປັນເຈົ້າການແກ້ໄຂບັນຫາປະກົດການຫຍໍ້ທໍ້ໃນສັງຄົມເປັນຕົ້ນແມ່ນ ບັນຫາຢາເສບຕິດ, ຂີ້ລັກງັດແງະ, ໄພສັງຄົມ ເຮັດໃຫ້ທົ່ວເມືອງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍດີຂຶ້ນ.

ຕິບັດທ່າແຮງທີ່ເປັນບູລິມະສິດຂອງເມືອງເປັນຕົ້ນແມ່ນ: ສຸມໃສ່ການລ້ຽງສັດໃຫຍ່ ງົວ, ຄວາຍ, ດ້ວຍທຶນຈາກທະນາຄານນະໂຍບາຍ ແລະ ໂຄງການລ້ຽງສັດໃຫຍ່ປະຈໍາພາກເໜືອ; ສຸມໃສ່ການປູກເຂົ້ານາປີ, ສົ່ງເສີມກຸ່ມຜະລິດເຂົ້າໄກ່ນ້ອຍ, ພືດຜັກ, ຕົ້ນໄມ້ໃຫ້ໝາກ, ສາລີ, ມັນສະຫຼູ, ໝາກເດືອຍ ແລະ ອື່ນໆ; ການປັບປຸງພື້ນຖານໂຄງລ່າງ ເປັນຕົ້ນເອົາໃຈໃສ່ປັບປຸງສ້ອມແປງຖະໜົນຫົນທາງທີ່ເປ່ເພ ແລະ ກໍ່ສ້າງເສັ້ນທາງປູແຮ່ແຕ່ 3 ແຍກແກ່ວຮອມຫາບ້ານນາໄຊ-ຈ້ານໍ້າ ຄວາມຍາວ 30 ກິໂລແມັດ ແລະ ເສັ້ນທາງ 031 ຂຶ້ນຫາແຫຼ່ງທ່ອງທ່ຽວຕາດແສ້, ໄດ້ຍາດແຍ່ງເອົາທຶນຮອນເຂົ້າໃນການກໍ່ສ້າງ

ດ້ານເສດຖະກິດ ຄະນະພັກໄດ້ເອົາໃຈໃສ່ຊີ້ນໍາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຢ່າງຕໍ່ເນື່ອງ ເຮັດໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວຢູ່ໃນລະດັບ 4,18% ຕໍ່ປີ, ລວມຍອດຜະລິດຕະພັນພາຍໃນບັນລຸ 154,40 ຕື້ກີບ, ທຽບໃສ່ແຜນປີປະຕິບັດໄດ້ 126%, ໃນນັ້ນຂົງເຂດກະສິກໍາ ຂະຫຍາຍຕົວ 3,88% ກວມ 96,67%, ອຸດສາຫະກໍາ 11,46% ກວມ 0,75%, ການບໍລິການ 14,22% ກວມ 2,58%, ສະເລ່ຍລາຍຮັບຕໍ່ຫົວຄົນ 11 ລ້ານກວ່າກີບ; ເອົາໃຈໃສ່ການຈັດເກັບລາຍຮັບເຂົ້າງົບປະມານບັນລຸ 1,358 ລ້ານກວ່າກີບ, ກວມ 114,10%, ໄດ້ເອົາໃຈໃສ່ຈັດຕັ້ງປະ

ພື້ນຖານໂຄງລ່າງ, ຄຸ້ມຄອງການຂົນສົ່ງສິນຄ້າ, ປັບປຸງຈັດວາງແຜນຜັງເຂດບ້ານ, ພັດທະນາຕົວເມືອງຕາມທິດສີຂຽວ-ຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ; ເອົາໃຈໃສ່ຕິດຕາມ, ກວດກາ, ຄຸ້ມຄອງ, ຊຸກຍູ້ສົ່ງເສີມວຽກງານພະລັງງານ ແລະ ບໍ່ແຮ່ ໃຫ້ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ, ມາຮອດປະຈຸບັນ ທົ່ວເມືອງໄດ້ຊົມໃຊ້ໄຟຟ້າທັງໝົດ 31 ບ້ານ ກວມ 100%.

ຂົງເຂດວັດທະນະທໍາ-ສັງຄົມ ກໍ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງເປັນຕົ້ນແມ່ນ: ວຽກງານສຶກສາທິການ ແລະ ກິລາ ໄດ້ປັບປຸງ ແລະ ຍົກສູງປະສິດທິພາບລະບົບການຄຸ້ມຄອງຂັ້ນຫ້ອງການ ແລະ ຂັ້ນໂຮງຮຽນ;

ຝຶກອົບຮົມວິທີການສິດສອນ ແລະ ນໍາໃຊ້ອຸປະກອນໃຫ້ແກ່ຄູສອນ, ໄດ້ສູ້ຊົນຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຂອງຂະແໜງການສຶກສາ ໃນ 14 ຄາດໝາຍ ໃຫ້ລຸຕາມແຜນການ; ວຽກງານສາທາລະນະສຸກ ໄດ້ປັບປຸງຄຸນນະພາບຂອງການບໍລິການດ້ານສາທາລະນະສຸກແຕ່ເມືອງລົງຮອດບ້ານ ໂດຍຖືເອົາຄໍາຂວັນ 5 ດີ 1 ພໍໃຈ ຂອງການບໍລິການ, ປັບປຸງພື້ນຖານໂຄງລ່າງດ້ານສາທາລະນະສຸກ, ການສະໜອງຢາ ແລະ ອຸປະກອນການແພດໃຫ້ມີຄວາມທັນສະໄໝ ແລະ ພຽງພໍ, ຍົກລະດັບຄວາມຮູ້ຄວາມສາມາດໃຫ້ພະນັກງານແພດໝໍ, ປັບປຸງກົນໄກການເຮັດວຽກ ແລະ ຂອດການປະສານງານໃຫ້ດີຂຶ້ນເທື່ອລະກ້າວ; ສົ່ງເສີມການທ່ອງທ່ຽວທາງດ້ານປະຫວັດສາດ, ທໍາມະຊາດ ແລະ ວັດທະນະທໍາ ຕິດພັນກັບການຊຸກຍູ້ສົ່ງເສີມການຜະລິດຫັດຖະກໍາທີ່ມີສີໄມ້ລາຍມືຂອງປະຊາຊົນເປັນຕົ້ນ: ກຸ່ມຜະລິດເຕົາປະຢັດ, ກຸ່ມຕໍ່າຫູກທໍໄໝ, ກຸ່ມຫຼອມໂລຫະ, ກຸ່ມຫັດຖະກໍາຈັກສານ, ກຸ່ມຜະລິດເສັ້ນເຝີ ແລະ ອື່ນໆ ເພື່ອສ້າງລາຍຮັບໃຫ້ແກ່ປະຊາຊົນ.

ວຽກງານພັກ-ພະນັກງານ: ຄະນະພັກແຕ່ລະຂັ້ນ ໄດ້ເປັນເຈົ້າການນໍາພາການກໍ່ສ້າງ ແລະ ປັບປຸງການຈັດຕັ້ງຮາກຖານພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ເຮັດໃຫ້ການຈັດຕັ້ງພັກເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ສາມາດເປັນແກນນໍາໃນລະບົບການເມືອງຢູ່ແຕ່ລະຂັ້ນ, ເອົາໃຈໃສ່ຍູ້ແຮງຂະບວນການກໍ່ສ້າງ ແລະ ຂະຫຍາຍພັກໃຫ້ມີຈໍານວນເພີ່ມຂຶ້ນຢ່າງຕໍ່ເນື່ອງ, ໄດ້ຂະຫຍາຍມະຫາຊົນເຂົ້າພັກສໍາຮອງ 33 ສະຫາຍ, ຍິງ 09 ສະຫາຍ, ເລື່ອນສໍາຮອງຂຶ້ນສົມບູນ 47 ສະຫາຍ, ຍິງ 20 ສະຫາຍ. ປະຈຸບັນທົ່ວເມືອງ ມີສະມາຊິກພັກທັງໝົດ 997 ສະຫາຍ, ຍິງ 282 ສະຫາຍ. ໃນປີ 2023 ໄດ້ສໍາເລັດການປະເມີນສະມາຊິກພັກ ໃນນັ້ນ, ມີສະມາຊິກພັກແຂງ 800 ສະຫາຍ, ຍິງ 217 ສະຫາຍ; ມີສະມາຊິກພັກກາງ 127 ສະຫາຍ, ຍິງ 44 ສະຫາຍ ແລະ ອ່ອນ 01 ສະຫາຍ, ບໍ່ໄດ້ຈັດປະເພດ 69 ສະຫາຍ, ຍິງ 21 ສະຫາຍ; ໄດ້ມີການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຈໍານວນ 62 ໜ່ວຍ, ມີໜ່ວຍພັກກາງ 03 ໜ່ວຍ, ບໍ່ໄດ້ຈັດປະເພດ 03 ໜ່ວຍ (ເຫດຜົນຍ້ອນສົ່ງໃບປະເມີນຊ້າ). ທົ່ວເມືອງມີພະນັກງານ-ລັດຖະກອນ ທັງໝົດ 518 ຄົນ, ຍິງ 232 ຄົນ. ໄລຍະຜ່ານມາ ໄດ້ເອົາໃຈໃສ່ບໍາລຸງຍົກລະດັບໃຫ້ພະນັກງານຢ່າງມີຈຸດສຸມ ໂດຍເລີ່ມຈາກແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ, ໃນນັ້ນ ໄດ້ສົ່ງໄປຍົກລະດັບວິຊາສະເພາະ 31 ຄົນ, ຍິງ 10 ຄົນ, ຮຽນຢູ່ພາຍໃນ 29 ຄົນ, ຕ່າງປະເທດ 2 ຄົນ; ສົ່ງໄປຍົກລະດັບທິດສະດີການເມືອງ-ການປົກຄອງ 4 ຄົນ, ຍິງ 01 ຄົນ ແລະ ໄດ້ມີການຈັດວາງພະນັກງານຢ່າງລະອຽດ ແຕ່ຂັ້ນເມືອງລົງຮອດຂັ້ນບ້ານ.

ຄຽງຄູ່ກັບຜົນສໍາເລັດທີ່ກ່າວມາຂ້າງເທິງນັ້ນ, ອົງຄະນະພັກເມືອງຜາໄຊ ຍັງມີຂໍ້ຄົງຄ້າງຈໍານວນໜຶ່ງທີ່ຈະຕ້ອງສືບຕໍ່ແກ້ໄຂ ເປັນຕົ້ນແມ່ນ: ການນໍາພາວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນ ເຖິງວ່າເຮັດຢ່າງຕໍ່ເນື່ອງ ແຕ່ຍັງບໍ່ທັນກວ້າງຂວາງ, ການຄົ້ນຄວ້າເຊື່ອມຊຶມ, ກໍາແໜ້ນຄໍາສັ່ງ, ຄໍາແນະນໍາ ຂອງພັກຍັງບໍ່ທັນເລິກເຊິ່ງ; ການປະຕິບັດແນວທາງ ປກຊ-ປກສ, ການສະກັດກັ້ນ, ການແກ້ໄຂປະກົດການຫຍໍ້ທໍ້ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ບໍ່ທັນເດັດຂາດເທົ່າທີ່ຄວນ; ການຂຸດຄົ້ນ ແລະ ນໍາໃຊ້ທ່າແຮງບົ່ມຊ້ອນເພື່ອພັດທະນາເສດຖະກິດ-ສັງຄົມ ເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດຄາດໝາຍສູ້ຊົນຈໍານວນໜຶ່ງບໍ່ບັນລຸຕາມແຜນການ; ການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ຍັງເຮັດໄດ້ໜ້ອຍ, ບໍ່ທັນໄດ້ຕາມແຜນທີ່ກໍານົດໄວ້.

ເພື່ອສືບຕໍ່ແກ້ໄຂ ບັນດາຂໍ້ຄົງຄ້າງດັ່ງກ່າວນັ້ນ, ໃນຕໍ່ໜ້າ ຄະນະພັກ, ຄະນະນໍາ ຂອງເມືອງຜາໄຊ ຈະຕ້ອງໄດກ້ເອົາໃຈໃສ່ສືບຕໍ່ເຊັ່ນ: ຕ້ອງສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ, ພະນັກງານ, ທະຫານ, ຕໍາຫຼວດ, ພໍ່ແມ່ປະຊາຊົນ ໃຫ້ມີຄວາມຮັບຮູ້, ເຂົ້າໃຈ, ຕໍ່ແນວທາງຂອງພັກ, ໃຫ້ມີແນວຄິດອຸ່ນອຽນໜຸ່ນທ່ຽງ; ຕັ້ງໜ້າປະຕິບັດແນວທາງ ປກຊ-ປກສ ທົ່ວປວງຊົນຮອບດ້ານຂອງພັກ, ປັບປຸງລະບອບແບບແຜນວິທີເຮັດວຽກຂອງກໍາລັງຫຼວງ, ກໍາລັງທ້ອງຖິ່ນ (ປກສ ບ້ານ) ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ທາງ

ດ້ານການເມືອງ-ແນວຄິດ; ເອົາໃຈໃສ່ຊີ້ນຳ-ນຳພາຢ່າງເດັດຂາດໂດຍກົງຮອບດ້ານ ຕໍ່ກຳລັງ ປກຊ-ປກສ ເຮັດໃຫ້ກຳລັງປະກອບອາວຸດເປັນກຳລັງຫຼັກແຫຼ່ງໃຫ້ແກ່ປະຊາຊົນບັນດາເຜົ່າ ເພື່ອຮັກສາສະຖຽນລະພາບທາງດ້ານການເມືອງ ແລະ ຮັກສາໄດ້ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ; ເອົາໃຈໃສ່ພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອພັດທະນາຊົນນະບົດ ແລະ ແກ້ໄຂຊີວິດການເປັນຢູ່ໃຫ້ແກ່ປະຊາຊົນບັນດາເຜົ່າໃຫ້ນັບມື້ດີຂຶ້ນ; ເອົາໃຈໃສ່ຍົກລະດັບເຕັກນິກການຜະລິດກະສິກຳ ຂອງທ້ອງຖິ່ນດ້ວຍການຝຶກອົບຮົມເຕັກນິກການປູກ-ການລ້ຽງ ໃຫ້ໄປສູ່ກະສິກຳແບບໃໝ່; ສູ້ຊົນຂະຫຍາຍຖານລາຍຮັບໃຫ້ຫຼາຍຂຶ້ນ, ຈັດເກັບລາຍມີຄວາມໜັກແໜ້ນ, ເຂັ້ມແຂງ ໂດຍຕິດພັນກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ເພີ່ມທະວີການກໍ່ສ້າງ ແລະ ປັບປຸງຮາກຖານພັກ ຕິດພັນກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ໄດ້ທາງດ້ານຈຳນວນ ແລະ ຄຸນນະພາບ, ພ້ອມທັງສະເໜີຂັ້ນເທິງ ອອກບັດໃຫ້ສະມາຊິກພັກສົມບູນຜູ້ທີ່ມີເງື່ອນໄຂ; ເປັນເຈົ້າການຄົ້ນຄວ້າ, ຕິດຕາມກວດກາ, ກໍ່ສ້າງມະຫາຊົນຜູ້ກ້າວໜ້າທີ່ມີມາດຖານ, ເງື່ອນໄຂ ເພື່ອຂະຫຍາຍເຂົ້າພັກ, ເອົາໃຈໃສ່ກວດກາການຈັດຕັ້ງປະຕິບັດກົດລະບຽບຂອງພັກ, ເປັນເຈົ້າການຈັດຕັ້ງຜັນຂະຫຍາຍທຸກມະຕິ, ຄຳສັ່ງຂອງຄະນະພັກຂັ້ນເທິງ ແລະ ຂັ້ນຂອງຕົນຢ່າງເຂັ້ມງວດ.

ຮັບໃຫ້ໄດ້ລື່ນຄາດໝາຍ ແລະ ທັນເປັນທັນສະໄໝ; ເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດ ດ້ວຍການຍົກສູງຄຸນນະພາບ ຂອງການສຶກສາໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ; ປັບປຸງຕາໜ່າງສາທາລະນະສຸກ ນັບທັງຂັ້ນເມືອງລົງຮອດຂັ້ນຮາກຖານ ເຮັດໃຫ້ການບໍລິການມີຄຸນນະພາບດີຂຶ້ນເທື່ອລະກ້າວ; ສືບຕໍ່ປັບປຸງສັບຊ້ອນກົງຈັກການຈັດຕັ້ງຂອງພັກ-ລັດ ນັບແຕ່ບັນດາໜ່ວຍພັກອ້ອມຂ້າງເມືອງລົງຮອດຮາກຖານພັກບ້ານ, ພ້ອມທັງແບ່ງຄວາມຮັບ ຜິດຊອບໃຫ້ກັນຢ່າງເໝາະສົມ ແລະ ຖືກຕ້ອງຕາມແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ເພື່ອຮັບປະກັນໃຫ້ກົງຈັກການຈັດຕັ້ງ

ສັງລວມແລ້ວ, ຜ່ານການນຳພາ-ຊີ້ນຳຂອງອົງຄະນະພັກເມືອງຜາໄຊ ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ຍ້ອນການນຳພາ-ຊີ້ນຳ ແລະ ລົງໃກ້ຊິດຕິດແທດຂອງຄະນະພັກແຕ່ລະຂັ້ນ ຈຶ່ງເຮັດໃຫ້ເມືອງມີການພັດທະນາ, ລະບົບການເມືອງມີຄວາມເຂັ້ມແຂງ, ໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ວັດທະນະທຳ-ສັງຄົມ ມີການຫັນປ່ຽນຢ່າງຕັ້ງໜ້າ, ປະຊາຊົນມີຊີວິດການເປັນຢູ່ທີ່ດີຂຶ້ນເປັນກ້າວໆ...ຯ

ບາງບົດຮຽນທີ່ຖອດຖອນໄດ້ ໃນການດຳເນີນ ກອງປະຊຸມໃຫຍ່ເມືອງທຳອິດ ຂອງບັນດາແຂວງ-ນະຄອນຫຼວງ

ໂດຍ: ພອນສະຫວັນ ໄຊຊະນະ

ການຜັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 08 ສິງຫາ 2023, ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 211/ຄຈສພ ກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ແລະ ການລົງຊຸກຍູ້, ຕິດຕາມການກະກຽມ, ດຳເນີນກອງປະຊຸມໃຫຍ່ຂອງບັນດາອົງຄະນະພັກເມືອງ ທີ່ສຳເລັດເປັນເມືອງທຳອິດຂອງບັນດາແຂວງ-ນະຄອນຫຼວງ ເຊິ່ງໄດ້ດຳເນີນໃນລະຫວ່າງເດືອນມັງກອນ-ກຸມພາ 2025 ທີ່ຜ່ານມາ ລວມມີ 18 ອົງຄະນະພັກເມືອງ-ນະຄອນ, ມາຮອດປະຈຸບັນ ບັນດາອົງຄະນະພັກເມືອງດັ່ງກ່າວ ໄດ້ດຳເນີນກອງປະຊຸມໃຫຍ່ຂອງຕົນສຳເລັດແລ້ວ ມີ 1. ອົງຄະນະພັກເມືອງຈັນທະບູລີ ນະຄອນຫຼວງວຽງຈັນ, 2. ເມືອງສົບເບົາ ແຂວງຫົວພັນ, 3. ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ, 4. ເມືອງແບງ ແຂວງອຸດົມໄຊ, 5. ເມືອງຫຼວງນ້ຳທາ ແຂວງຫຼວງນ້ຳທາ, 6. ເມືອງພຽງ ແຂວງໄຊຍະບູລີ, 7. ເມືອງນ້ຳບາກ ແຂວງຫຼວງພະບາງ, 8. ເມືອງໜອງບົກ ແຂວງຄຳມ່ວນ, 9. ເມືອງກາສີ ແຂວງວຽງຈັນ, 10. ເມືອງປາກຊັນ ແຂວງບໍລິຄຳໄຊ, 11. ເມືອງວິລະບູລີ ແຂວງສະຫວັນນະເຂດ, 12. ເມືອງຕະໂອ້ຍ ແຂວງສາລະວັນ, 13.ເມືອງທ່າແຕງ ແຂວງເຊກອງ, 14. ເມືອງໂຂງ ແຂວງຈຳປາສັກ, 15. ເມືອງສາມັກຄີໄຊ ແຂວງອັດຕະປື, 16. ເມືອງອານຸວົງ ແຂວງໄຊສົມບູນ, 17. ເມືອງບຸນເໜືອ ແຂວງຜົ້ງສາລີ, 18. ເມືອງແປກ ແຂວງຊຽງຂວາງ.

ເພື່ອຮັບປະກັນໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ຖືກຕ້ອງຕາມກົດລະບຽບພັກ, ນິຕິກຳທີ່ກ່ຽວຂ້ອງ ທັນຕາມກຳນົດເວລາ ແລະ ມີຄວາມເປັນເອກະພາບ; ຜ່ານການດຳເນີນກອງປະຊຸມໃຫຍ່ອົງຄະນະພັກເມືອງ ທຳອິດຂອງບັນດາແຂວງ-ນະຄອນຫຼວງ ໂດຍລວມແລ້ວແມ່ນໄດ້ສຳເລັດຕາມແຜນການທີ່ວາງໄວ້. ຜົນສຳເລັດດັ່ງກ່າວ ໄດ້ສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງຄະນະພັກ, ຄະນະນຳ ແລະ ຄະນະຮັບຜິດຊອບນັບທັງສູນກາງ ແລະ ທ້ອງຖິ່ນໃນການຊຸກຍູ້, ຕິດຕາມຢ່າງໃກ້ຊິດແຕ່ຕົ້ນຕະຫຼອດປາຍ ເປັນຕົ້ນແມ່ນດ້ານຂະບວນການ ໄດ້ເອົາໃຈໃສ່ນຳພາສ້າງຂະບວນການວຽກງານຮອບດ້ານໃນທົ່ວອົງຄະນະພັກ ເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່, ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄະນະພັກຂັ້ນເທິງ ແລະ ຂັ້ນຂອງຕົນວາງອອກ, ສຸມໃສ່ວຽກງານສຶກສາອົບຮົມການເມືອງ-ແນວຄິດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຈັດຕັ້ງປະຕິບັດ 02 ວາລະແຫ່ງຊາດ, ຍູ້ແຮງການຜະລິດເປັນສິນຄ້າດ້ວຍການປູກ-ການລ້ຽງ, ສົ່ງເສີມວຽກງານຫັດຖະກຳ ແລະ ການປຸງແຕ່ງຕາມທ່າແຮງບົ່ມຊ້ອນຂອງແຕ່ລະເມືອງເປັນຕົ້ນຕໍ; ດ້ານເນື້ອໃນ ເປັນຕົ້ນແມ່ນການກະກຽມຮ່າງລາຍງານການເມືອງ, ແຜນພັດທະນາເສດຖະກິດ-ສັງຄົມ ສ່ວນຫຼາຍຖືກຕ້ອງຕາມນິຕິກຳທີ່ກ່ຽວຂ້ອງ, ສອດຄ່ອງກັບສະພາບຈຸດພິເສດ, ທ່າແຮງບົ່ມຊ້ອນ, ສິດ, ໜ້າທີ່ຂອງແຕ່ລະເມືອງ ເຊິ່ງສະແດງອອກໃນຮ່າງລາຍງານການເມືອງ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແມ່ນໄດ້ຕີລາຄາຢ່າງຮອບດ້ານຕໍ່ຜົນສຳເລັດ

ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມໃນໄລຍະຜ່ານມາ; ບາງບ່ອນໄດ້ຈັດກອງປະຊຸມສຳມະນາ ໂດຍມີຂະແໜງການຕ່າງໆທີ່ກ່ຽວຂ້ອງຂອງແຂວງເຂົ້າຮ່ວມຄົ້ນຄວ້າປະກອບຄຳເຫັນ ແລະ ທາບທາມຄວາມຄິດເຫັນຈາກສະມາຊິກພັກ-ພະນັກງານ, ປະຊາຊົນ ແລະ ໄດ້ຮັບຮອງຈາກກອງປະຊຸມໃຫຍ່ອົງຄະນະພັກເມືອງ;

ການດຳເນີນຊີວິດການເມືອງ ແລະ ການກະກຽມດ້ານບຸກຄະລາກອນ ເຫັນວ່າສ່ວນຫຼາຍປະຕິບັດຢ່າງຖືກຕ້ອງຕາມກົດລະບຽບພັກ, ນິຕິກຳທີ່ກ່ຽວຂ້ອງເປັນຕົ້ນແມ່ນ ໄດ້ລົງເລິກຕີລາຄາການນຳພາຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງຄະນະພັກຂັ້ນເທິງ ແລະ ການນຳພາປະຕິບັດມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນທີ່ໄດ້ວາງອອກ; ການຈັດຕັ້ງປະຕິບັດຕາມສິດ, ໜ້າທີ່, ຄວາມຮັບຜິດຊອບ ທີ່ໄດ້ກຳນົດໃນກົດລະບຽບພັກ ແລະ ໄດ້ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້ໃນໄລຍະຜ່ານມາ; ໄດ້ສ້າງຄວາມເປັນເອກະພາບສູງກ່ຽວກັບການຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງກ່ຽວກັບບຸກຄະລາກອນທີ່ຈະສະໝັກຮັບເລືອກຕັ້ງເຂົ້າໃນຄະນະພັກຊຸດໃໝ່; ພ້ອມນັ້ນ, ກໍ່ໄດ້ກຳນົດມາດຕະການ ແລະ ວິທີການແກ້ໄຂຈຸດອ່ອນ-ຂໍ້ຄົງຄ້າງໃນຕໍ່ໜ້າ, ທັງເປັນບ່ອນອີງພື້ນຖານໃຫ້ແກ່ການເລືອກເຟັ້ນເອົາບຸກຄະລາກອນທີ່ດີເດັ່ນ, ມີມາດຕະຖານ, ເງື່ອນໄຂ ເພື່ອອອກທາບທາມ ແລະ ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກເມືອງ-ນະຄອນຊຸດໃໝ່. ການກະກຽມດ້ານບຸກຄະລາກອນສ່ວນຫຼາຍແມ່ນໄດ້ດຳເນີນຖືກຕ້ອງຕາມບາດກ້າວ, ຂັ້ນຕອນ ທີ່ໄດ້ກຳນົດໄວ້ເຊັ່ນ: ໄດ້ດຳເນີນການທາບທາມ 3 ຮອບ, ກ່ອນການທາບທາມຮອບທີ 1 ໄດ້ເຊື່ອມຊຶມເອກະສານ 4 ບົດຕາມນິຕິກຳ, ກ່ອນການດຳເນີນການທາບທາມຮອບທີ 3 ກໍ່ໄດ້ດຳເນີນຊີວິດການເມືອງ ແລະ ກອງປະຊຸມຄົບຄະນະບໍລິຫານງານພັກເມືອງທ້າຍສະໄໝ, ການຄົ້ນຄວ້າບຸກຄະລາກອນໂດຍອີງໃສ່ຄະນະບໍລິຫານງານພັກຊຸດເກົ່າ, ແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງເມືອງ ແລະ ສະພາບການຕົວຈິງຂອງຖັນແຖວພະນັກງານທີ່ມີຢູ່ຂັ້ນເມືອງ; ດ້ານໂຄງປະກອບຂອງຄະນະບໍລິຫານງານພັກເມືອງແມ່ນຄົບທັງສາມຮຸ່ນຄື: ຮຸ່ນອາວຸໂສ, ຮຸ່ນກາງ ແລະ ຮຸ່ນໜຸ່ມ ໃນນັ້ນຮຸ່ນກາງ ແລະ ຮຸ່ນໜຸ່ມແມ່ນກວມອັດຕາສ່ວນຫຼາຍ; ຜູ້ທີ່ເປັນເລຂາພັກເມືອງ ສ່ວນຫຼາຍແມ່ນຜູ້ໃໝ່ທີ່ໄດ້ຮັບຄະແນນໄວ້ວາງໃຈບໍ່ຫຼຸດເຄິ່ງໜຶ່ງຂອງຈຳນວນຄະນະບໍລິຫານງານພັກເມືອງ; ການແບ່ງງານ, ແບ່ງຄວາມຮັບຜິດຊອບສ່ວນຫຼາຍ ແມ່ນໄດ້ປະຕິບັດຖືກຕ້ອງຕາມຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 173/ຄລສພ ເຊິ່ງສະແດງອອກ: ໃນຈຳນວນ 18 ອົງຄະນະພັກເມືອງທີ່ສຳເລັດກອງປະຊຸມໃຫຍ່ແລ້ວ ແມ່ນລວມມີຄະນະບໍລິຫານງານພັກເມືອງ ຈຳນວນ 466 ສະຫາຍ, ຍິງ 77 ສະຫາຍ; ໃນນີ້ຄະນະບໍລິຫານງານພັກເມືອງຊຸດເກົ່າທີ່ສືບຕໍ່ລົງສະໝັກ ຈຳນວນ 273 ສະຫາຍ, ຍິງ 47 ສະຫາຍ ແລະ ໄດ້ຮັບການເລືອກຕັ້ງໃໝ່ ຈຳນວນ 260 ສະຫາຍ, ສະໝັກຮັບເລືອກຕັ້ງບໍ່ໄດ້ມີ 13 ສະຫາຍ, ຍິງ 3 ສະຫາຍ (ກຳມະການປະຈຳພັກເມືອງ 146 ສະຫາຍ, ຍິງ 18 ສະຫາຍ; ກຳມະການຄະນະພັກ 320 ສະຫາຍ,ຍິງ 59 ສະຫາຍ); ໂຄງປະກອບຮຸ່ນໜຸ່ມ 45 ປີລົງມາ 162 ສະຫາຍ, ຮຸ່ນກາງ 46-55 ປີ260 ສະຫາຍ, ຮຸ່ນອາວຸໂສ 56-60 ປີ 44 ສະຫາຍ, ໃນນັ້ນອາຍຸສູງສຸດ 59 ປີ ແລະ ຕ່ຳສຸດ 34 ປີ, ກຳມະການພັກເມືອງທີ່ບໍ່ແມ່ນລັດຖະກອນ 12 ສະຫາຍ, ຍິງ 1 ສະຫາຍ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ ກໍ່ຍັງມີບາງດ້ານທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນຕົ້ນແມ່ນການຄົ້ນຄວ້າ, ຈັດຕັ້ງເຊື່ອມຊຶມກຳແໜ້ນບັນດານິຕິກຳທີ່ກ່ຽວຂ້ອງ ກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ ບໍ່ທັນເລິກເຊິ່ງເທົ່າທີ່ຄວນ; ການສຶກສາອົບຮົມການເມືອງ-ແນວຄິດ, ການໂຄສະນາເຜີຍແຜ່ຈຸດປະສົງ, ລະດັບຄາດໝາຍ, ຄວາມໝາຍສຳຄັນຂອງການກະກຽມ, ດຳເນີນກອງປະຊຸມໃຫຍ່ໃຫ້ແກ່ຄະນະພັກ, ສະມາຊິກພັກ ແລະ ມະຫາຊົນ

ຂອງຄະນະຮັບຜິດຊອບແຕ່ລະຂັ້ນ ສ່ວນຫຼາຍເຫັນວ່າເຜີຍແຜ່ແບບລວມໆ, ເຜີຍແຜ່ແຕ່ໃນເວລາກະກຽມກອງປະຊຸມໃຫຍ່ຮາກຖານ, ແຕ່ມາຮອດກອງປະຊຸມໃຫຍ່ຂອງເມືອງພັດບໍ່ໄດ້ເຊື່ອມຊຶມອີກ; ການສ້າງຂະບວນການສ່ວນຫຼາຍບໍ່ພົ້ນເດັ່ນ, ບໍ່ທັນຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດ ຫຼື ມີການວາງແຜນແລ້ວແຕ່ການນຳພາ-ຊີ້ນຳຈັດຕັ້ງປະຕິບັດຕົວຈິງບໍ່ແທດເຖິງ, ເຮັດໃຫ້ບັນຫາປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງຈິງຈັງ ແລະ ການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ບໍ່ທັນໄດ້ກາຍເປັນຄວາມຮັບຜິດຊອບຂອງທົ່ວສັງຄົມ; ການກະກຽມເນື້ອໃນຂອງບາງເມືອງການຕີລາຄາບໍ່ໄດ້ອີງໃສ່ຄາດໝາຍທີ່ມະຕິກອງປະຊຸມໃຫຍ່ຄັ້ງຜ່ານມາ, ຂາດການຄົ້ນຄວ້າ, ວິເຄາະ-ວິໄຈຢ່າງເລິກເຊິ່ງ. ຈາກນັ້ນ, ເຮັດໃຫ້ການກຳນົດທິດທາງ, ໜ້າທີ່ ແລະ ບັນດາຄາດໝາຍສູ້ຊົນໃນການຈັດຕັ້ງປະຕິບັດໃນຕໍ່ໜ້າບໍ່ສອດຄ່ອງກັບສະພາບຈຸດພິເສດ, ທ່າແຮງບົ່ມຊ້ອນ ແລະ ກຳລັງແຮງທີ່ມີຕົວຈິງຂອງເມືອງເທົ່າທີ່ຄວນ. ການປະກອບຄຳເຫັນຂອງຜູ້ແທນຍັງມີຈຳກັດ, ສ່ວນຫຼາຍແມ່ນມີແຕ່ປະກອບດ້ານດີ, ແຕ່ບໍ່ໄດ້ລົງເລິກປະກອບຄຳເຫັນດ້ານອ່ອນ-ຂໍ້ຄົງຄ້າງ; ຜູ້ແທນສົມບູນ-ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ອົງຄະນະພັກເມືອງບາງຄະນະພັກ ບໍ່ໄດ້ດຳເນີນການເລືອກຕັ້ງຢູ່ໃນເວລາດຳເນີນກອງປະຊຸມໃຫຍ່ຮາກຖານພັກ ໂດຍຄະນະພັກເມືອງບົ່ງຕົວແຕ່ງຕັ້ງເອົາຄະນະພັກຮາກຖານ ແລະ ຄະນະໜ່ວຍພັກ; ການດຳເນີນຊີວິດການເມືອງຄະນະບໍລິຫານງານພັກເມືອງທ້າຍສະໄໝ ຍັງຈົ່ງຈຽມ, ບໍ່ກ້າຕຳນິສິ່ງຂ່າວເຊິ່ງກັນ ແລະ ກັນ, ຍ້ອນວ່າຢ້ານມີຜົນສະທ້ອນຕໍ່ຕົນເອງໃນເວລາທາບທາມ ຫຼື ເວລາດຳເນີນກອງປະຊຸມໃຫຍ່; ການເລືອກຕັ້ງຜູ້ແທນສົມບູນ, ສຳຮອງ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງມີຄະນະພັກຈຳນວນໜຶ່ງ ຜູ້ແທນສຳຮອງໄດ້ຮັບຄະແນນສຽງໄວ້ວາງໃຈຈາກຜູ້ແທນຫຼຸດ 50%; ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂອງອົງຄະນະພັກເມືອງຈຳນວນໜຶ່ງ ແມ່ນປະຕິບັດຕາມທີ່ເຄີຍປະຕິບັດຜ່ານມາ, ເຮັດໃຫ້ການຈັດຕັ້ງປະຕິບັດບໍ່ເອກະພາບກັນເປັນຕົ້ນແມ່ນ ການກະກຽມວາລະກອງປະຊຸມທາບທາມ, ການດຳເນີນຊີວິດການເມືອງ, ການກຳນົດເປົ້າໝາຍເຂົ້າຮ່ວມກອງປະຊຸມທາບທາມຮອບ 1-2 ແລະ ວາລະການດຳເນີນກອງປະຊຸມໃຫຍ່; ກົນໄກການປະສານສົມທົບລະຫວ່າງ ຄະນະຮັບຜິດຊອບຂອງສູນກາງ ແລະ ບັນດາແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ບາງດ້ານເຫັນວ່າບໍ່ທັນໂລ່ງລ່ຽນ ແລະ ອື່ນໆ.

ເພື່ອເຮັດໃຫ້ການກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ເວົ້າລວມ, ເວົ້າສະເພາະ ກອງປະຊຸມໃຫຍ່ອົງຄະນະພັກເມືອງ-ນະຄອນ ທີ່ຍັງບໍ່ທັນໄດ້ສຳເລັດການດຳເນີນກອງປະຊຸມໃຫຍ່ຂອງຕົນສາມາດບັນລຸຕາມຈຸດປະສົງຄາດໝາຍ ຄວນເອົາໃຈໃສ່ບາງບັນຫາດັ່ງນີ້:

ໜຶ່ງ: ສືບຕໍ່ເຊື່ອມຊຶມ, ກຳແໜ້ນຢ່າງເລິກເຊິ່ງຕໍ່ເນື້ອໃນນິຕິກຳຕ່າງໆກ່ຽວກັບການກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ແລະ ສ້າງຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ.

ສອງ: ກວດກາຄືນບັນດາແຜນດຳເນີນງານຂອງຄະນະພັກທີ່ກຳນົດອອກ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ; ເອົາໃຈໃສ່ແບ່ງງານພາຍໃນຄະນະປະຈຳພັກໃຫ້ຈະແຈ້ງ ເພື່ອນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມການກະກຽມດຳເນີນກອງປະຊຸມໃຫຍ່ທັນເຂົ້າສູ່ລວງເລິກ, ແທດເຖິງຕົວຈິງ ແລະ ມີຄຸນນະພາບດີຂຶ້ນກວ່າເກົ່າເພື່ອໃຫ້ກາຍເປັນການປັບປຸງພາຍໃນພັກຢ່າງແທ້ຈິງ.

ສາມ: ເອົາໃຈໃສ່ນຳພາ-ຊີ້ນຳ ຍູ້ແຮງຂະບວນການດ້ານຕ່າງໆໃຫ້ເປັນຮູບປະທຳຕື່ມອີກ, ເພີ່ມທະວີການສຶກສາອົບຮົມສະມາຊິກພັກ, ພະນັກງານ ແລະ ປະຊາຊົນທຸກຊັ້ນຄົນ, ສືບຕໍ່ສຸມໃສ່ແກ້ໄຂສິ່ງຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນແຕ່ລະບ່ອນໃຫ້ໄດ້ຢ່າງເປັນຮູບປະທຳ; ຊຸກຍູ້ຂະບວນການຜະລິດເປັນສິນຄ້າຂອງປະຊາຊົນ, ສ້າງໃຫ້ມີຂະບວນການຫັນປ່ຽນໃໝ່ທີ່ຕັ້ງໜ້າໃນທຸກຂົງເຂດວຽກງານ.

ສີ່: ເອົາໃຈໃສ່ຊີ້ນໍາການກະກຽມລາຍງານການເມືອງ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຕໍ່ໜ້າໃຫ້ເລິກເຊິ່ງ, ມີຈຸດສຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ, ທ່າແຮງບົນພື້ນຖານໃຫ້ມີການວິເຄາະວິໄຈຢ່າງເລິກເຊິ່ງ.

ຫ້າ: ເອົາໃຈໃສ່ນໍາພາ-ຊີ້ນໍາ ການກະກຽມດ້ານບຸກຄະລາກອນໃຫ້ດີ, ໃຫ້ອີງໃສ່ມາດຕະຖານ, ເງື່ອນໄຂທີ່ກໍານົດໄວ້, ດ້ານເປົ້າໝາຍໃຫ້ຄົ້ນຄວ້າໃນຄະນະພັກຊຸດເກົ່າ, ເບິ່ງແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ ແລະ ເບິ່ງສະພາບຄວາມເປັນຈິງຂອງຖັນແຖວພະນັກງານທີ່ມີໃນປະຈຸບັນ.

- ດ້ານໂຄງປະກອບ ໃຫ້ສູ້ຊົນປະຕິບັດຕາມທິດທັນເປັນໜຸ່ມ, ໃຫ້ມີເພດ-ເຜົ່າ, ເລຂາ, ຮອງເລຂາພັກບ້ານ ສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກເມືອງຕາມຄວາມເໝາະສົມບົນພື້ນຖານມາດຕະຖານ, ເງື່ອນໄຂກໍານົດໄວ້; ໃຫ້ຄາດຄະເນການຈັດວາງ ແລະ ແບ່ງຄວາມຮັບຜິດຊອບໃນຄະນະບໍລິຫານງານພັກ ໂດຍສະເພາະຄະນະປະຈໍາພັກເມືອງ-ນະຄອນ ຕາມຄໍາສັ່ງຂອງຄະນະເລຂາທິການສູນກາງພັກສະບັບເລກທີ 173 ແລະ ແຈ້ງການຂອງຄະນະຈັດຕັ້ງສູນກາງພັກກ່ຽວກັບບັນຫາດັ່ງກ່າວ.

- ເອົາໃຈໃສ່ຊີ້ນໍາການດໍາເນີນຊີວິດການເມືອງທ້າຍສະໄໝຂອງຄະນະບໍລິຫານງານພັກຊຸດເກົ່າໃຫ້ເລິກເຊິ່ງ, ແທດຕົວຈິງ ໂດຍອີງໃສ່ຄໍາແນະນໍາຂອງຄະນະກວດກາສູນກາງພັກ, ຜົນຂອງການດໍາເນີນຊີວິດການເມືອງກາງສະໄໝ ປີ 2023 ແລະ ຄໍາເຫັນສິ່ງຂ່າວຂອງຄະນະພັກ, ສະມາຊິກພັກຂັ້ນລຸ່ມ ຜ່ານການທາບທາມຮອບທີ I ແລະ ຮອບທີ II ມາຄົ້ນຄວ້າໄຈ້ແຍກອັນໃດມີຈິງ, ອັນໃດບໍ່ມີຈິງ ບົນພື້ນຖານນັ້ນຈຶ່ງຕົກລົງເປັນເອກະພາບພາຍໃນກອງປະຊຸມຄະນະບໍລິຫານງານພັກຄັ້ງສຸດທ້າຍວ່າໃຜຈະສືບຕໍ່ສະໝັກ ຫຼື ບໍ່ສືບຕໍ່ສະໝັກ ໂດຍແມ່ນຄະນະພັກຂັ້ນເທິງເອົາໃຈໃສ່ເຮັດວຽກງານແນວຄິດ ເພື່ອຮັບປະກັນສະຖຽນລະພາບຂອງກອງປະຊຸມ.

- ການດໍາເນີນການທາບທາມບຸກຄະລາກອນອີງຄະນະພັກເມືອງທີ່ດໍາເນີນກອງປະຊຸມໃຫຍ່ຜູ້ແທນແມ່ນໃຫ້ດໍາເນີນການທາບທາມ 3 ຮອບ, ການທາບທາມຮອບສຸດທ້າຍ ສໍາລັບຄະນະພັກຊຸດເກົ່າຜູ້ທີ່ບໍ່ມີມາດຕະຖານ, ເງື່ອນໄຂ ບໍ່ຄວນເອົາລາຍຊື່ລົງທາບທາມອີກ, ຄະນະພັກແຕ່ລະຂັ້ນຕ້ອງມີຄວາມຕັດສິນໃຈ ແລະ ມີຄວາມເປັນເອກະພາບສູງ; ບັນຫານີ້ເປັນສິ່ງສໍາຄັນ ແລະ ເປັນບັນຫາລະອຽດອ່ອນ ທີ່ສະແດງເຖິງຄວາມຕັດສິນໃຈບຸກທະລຸໃນວຽກງານກໍ່ສ້າງພະນັກງານຂອງພັກເຮົາ.

ຫົກ: ຄະນະຕິດຕາມຊຸກຍູ້ຂັ້ນສູນກາງ (ໜ່ວຍງານ) ເອົາໃຈໃສ່ຕິດຕາມການຈັດຕັ້ງປະຕິບັດຕົກຈິງ ມີບັນຫາໃດທີ່ຍັງບໍ່ສອດຄ່ອງກັບນິຕິກໍາທີ່ກ່ຽວຂ້ອງເພື່ອນໍາສະເໜີປັບປຸງຕໍ່ໆໄປ.

ເຈັດ: ກອງປະຊຸມໃຫຍ່ອົງຄະນະພັກເມືອງ-ນະຄອນ ຄາດຄະເນສູ້ຊົນໃຫ້ສໍາເລັດໃນເດືອນມີນາ 2025.

ຢາກປະຕິບັດໄດ້ຕາມເນື້ອໃນ, ຈິດໃຈ ມະຕິ, ຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ ແລະ ຄໍາແນະນໍາ ເລກທີ 211ຄຈສພ ກ່ຽວກັບການກະກຽມ, ດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ແລະ ນິຕິກໍາທີ່ກ່ຽວຂ້ອງອື່ນໆ. ຈຶ່ງມີຄວາມຈໍາເປັນຮຽກຮ້ອງມາຍັງຄະນະພັກທຸກຂັ້ນ ຢູ່ທ້ອງຖິ່ນ ແລະ ກະຊວງ-ອົງການ ຈົ່ງເຫັນໄດ້ຄວາມສໍາຄັນ ແລະ ເພີ່ມທະວີຄວາມເອົາໃຈໃສ່ຕໍ່ການຈັດຕັ້ງປະຕິບັດຄໍາສັ່ງ ແລະ ຄໍາແນະນໍາດັ່ງກ່າວ ແນໃສ່ຮັບປະກັນທາງດ້ານຫຼັກການ, ມາດຕະຖານ, ເງື່ອນໄຂ ແລະ ລະບຽບການ, ຮັບປະກັນທາງດ້ານຄຸນນະພາບ ແລະ ປະສິດທິຜົນຢ່າງໜັກແໜ້ນ. ເຮັດໃຫ້ການດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກໃນຄັ້ງນີ້ ກາຍເປັນຂະບວນການປັບປຸງຮາກຖານພັກຄັ້ງຍິ່ງໃຫຍ່, ເຮັດໃຫ້ພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ປັບປຸງພື້ນຖານເສດຖະກິດ, ວັດທະນະທໍາ-ສັງຄົມ, ແກ້ໄຂໄດ້ຄວາມທຸກຍາກຂອງປະຊາຊົນ ຕາມແນວທາງຂອງພັກທີ່ໄດ້ກໍານົດໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ...ໆ

ຖືເອົາປະຊາຊົນເປັນກົກ ແລະ ເຄື່ອນໄຫວຕາມແນວທາງມະຫາຊົນ

ໂດຍ: ປອ ຈັນສຸລິນ ອິນຄຳແສງ

ພັກປະຊາຊົນປະຕິວັດລາວ ໄດ້ນຳພາປະຊາຊົນລາວບັນດາເຜົ່າດຳເນີນການປະຕິວັດຊາດປະຊາທິປະໄຕ ເຮັດສຳເລັດພາລະກິດປົດປ່ອຍຊາດ, ລົບລ້າງລະບອບລ່າເມືອງຂຶ້ນ ແລະ ສັກດີນາ, ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ ແລະ ຍັງໄດ້ສືບຕໍ່ນຳພາປະຊາຊົນລາວ ປະຕິບັດສອງໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕາມແນວທາງປ່ຽນແປງໃໝ່. ການເຄື່ອນໄຫວນຳພາຂອງພັກທັງສອງໄລຍະນັ້ນ ກໍ່ລ້ວນແຕ່ຮັບໃຊ້ຄວາມມຸ່ງມາດປາດຖະໜາຂອງປະຊາຊົນທີ່ຢາກຫຼຸດພົ້ນອອກຈາກແອກປົກຄອງຂອງຈັກກະພັດ ແລະ ລະບອບສັກດີນາ, ພາຍຫຼັງປົດປ່ອຍແລ້ວປະຊາຊົນມີຄວາມຫວັງຢາກເຫັນປະເທດຊາດ ໄດ້ຮັບການພັດທະນາ ແລະ ມີຄວາມສະຫງົບສຸກ. ພັກເຮົາໄດ້ຖືເອົາປະຊາຊົນເປັນກົກ ແມ່ນຖືກຕ້ອງຕາມທັດສະນະ ແລະ ຫຼັກການກໍ່ສ້າງພັກແບບໃໝ່ຂອງທ່ານເລນິນ, ຍ້ອນວ່າ ແມ່ນພັກຂອງຊົນຊັ້ນກຳມະກອນເຊິ່ງເປັນຕົວແທນໃຫ້ຊາວຜູ້ອອກແຮງງານບັນດາເຜົ່າ, ເຮັດໃຫ້ປະເທດຊາດມີບາດກ້າວຂະຫຍາຍຕົວໃໝ່, ສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການເປີດກວ້າງອອກ, ຄວາມສາມັກຄີເອກະພາບຂອງທົ່ວປວງຊົນລາວທັງຊາດ ນັບມື້ໄດ້ຮັບການປັບປຸງໃຫ້ດີຂຶ້ນ.

ພັກປະຊາຊົນປະຕິວັດລາວ ແມ່ນການຈັດຕັ້ງຕື່ນຕົວສະມັກໃຈ, ຕໍ່ສູ້ເພື່ອພາລະກິດປົດປ່ອຍປະຊາຊົນອອກຈາກກົດຂີ່ຂູດຮີດ, ການປະຕິວັດດັ່ງກ່າວແມ່ນພາລະກິດຂອງປະຊາຊົນ. ສະນັ້ນ, ການຖືເອົາປະຊາຊົນເປັນກົກ ມີຄວາມໝາຍແມ່ນການພົວພັນຢ່າງສະໜິດແໜ້ນ ລະຫວ່າງພັກກັບປະຊາຊົນ ແລະ ເປັນການຕໍ່ສູ້ຢ່າງເດັດດ່ຽວ ເພື່ອສະກັດກັ້ນ ແລະ ແກ້ໄຂພະຍາດອາດຍາສິດ, ຫ່າງເຫີນຈາກປະຊາຊົນ. ການຖືເອົາປະຊາຊົນເປັນກົກ ຍັງມີຄວາມໝາຍວ່າ ພາລະກິດໃດໆກໍ່ຕາມ, ຖ້າບໍ່ມີການສະໜັບສະໜູນພ້ອມໃຈຂອງປະຊາຊົນ ແມ່ນທຸກແຜນງານນະໂຍບາຍຂອງພັກ ກໍ່ຈະບໍ່ກາຍເປັນຄວາມຈິງໄດ້, ທ່ານ ເລນິນ ເວົ້າວ່າ: " ເພື່ອຢາກກາຍເປັນພັກປະຊາທິປະໄຕ ຫຼື ສັງຄົມໜຶ່ງ ແມ່ນຕ້ອງໄດ້ຮັບການສະໜັບສະໜູນ ຈາກກະໂຕຊົນຊັ້ນຂອງມັນ "[1].

ພັກປະຊາຊົນປະຕິວັດລາວມີຈຳນວນສະມາຊິກພັກໜ້ອຍ ເມື່ອທຽບກັບປະຊາຊົນທີ່ມີຈຳນວນຫຼວງຫຼາຍກວ່າ ແລະ ພຽງແຕ່ອາໄສກຳລັງແຮງຂອງສະມາຊິກພັກ ແມ່ນບໍ່ສາມາດເຮັດລ້ອນ 2 ໜ້າທີ່ຍຸດທະສາດນັ້ນໄດ້. ສະນັ້ນ, ຈຶ່ງຖືວ່າ ລັກສະນະປະດິດສ້າງອັນມີຊີວິດຊີວາຂອງປະຊາຊົນ, ນັ້ນແມ່ນປັດໄຈພື້ນຖານຂອງພາລະກິດປ່ຽນແປງໃໝ່. ການສ້າງລະບອບປະຊາທິປະໄຕປະຊາຊົນ ບໍ່ແມ່ນຜົນຂອງການປະຕິບັດມະຕິຄຳສັ່ງແຕ່ເທິງລົງລຸ່ມ, ລັກສະນະກົນຈັກຕາຍຕົວ, ຄຳສັ່ງແບບບໍລິຫານ ແລະ ອາດຍາສິດ ບໍ່ອາດຈະເຂົ້າແກັບເຂົ້າເກຍ ກັບຈິດໃຈຂອງລະບອບປະຊາທິປະໄຕປະຊາຊົນ. ການກໍ່ສ້າງລະບອບປະຊາທິປະໄຕປະຊາຊົນ ທີ່ມີຊີວິດຊີວາ ແລະ ປະດິດສ້າງ ແມ່ນພາລະກິດຂອງມະຫາຊົນຢ່າງກວ້າງໃຫຍ່ໄພສານ.

ອີກປະການໜຶ່ງ ການຖືປະຊາຊົນເປັນກົກ ໃນການວາງແນວທາງຂອງພັກ ແຕ່ລະຄັ້ງກໍ່ຕ້ອງເລີ່ມ

ຈາກຄວາມມຸ່ງມາດປາດຖະໜາ ແລະ ຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນເປັນຈຸດເລີ່ມ ຈຶ່ງຈະເຮັດໃຫ້ແນວທາງທີ່ວາງອອກໄດ້ຮັບການຈັດຕັ້ງປະຕິບັດມີໝາກຜົນຢ່າງແທ້ຈິງ. ພັກປະຊາຊົນປະຕິວັດລາວເປັນພັກກໍາອໍານາດ ທີ່ໄດ້ນໍາພາປະຕິບັດ 2 ໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດເພື່ອກ້າວຂຶ້ນສັງຄົມນິຍົມ, ພັກສາມາດມີເງື່ອນໄຂຫຼາຍຢ່າງ, ໃນນັ້ນ ເງື່ອນໄຂສະດວກທີ່ສຸດ ແມ່ນການເພີ່ມທະວີສາຍພົວພັນລະຫວ່າງພັກກັບປະຊາຊົນ; ແຕ່ໃນເວລາດຽວກັນນັ້ນ, ໃນເມື່ອສະມາຊິກພັກໄດ້ຮັບຕໍາແໜ່ງບໍລິຫານສູງຂຶ້ນ ມັກເກີດພະຍາດອາດຍາສິດ, ໃຊ້ແຕ່ຄໍາສັ່ງດ້ານດຽວ, ເຮັດໃຫ້ພະນັກງານ ແລະ ສະມາຊິກພັກຈໍານວນໜຶ່ງ ບໍ່ເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງ ເຮັດໃຫ້ມີການເຊື່ອມຊຸດປ່ຽນທາດ, ຫ່າງເຫີນຈາກມະຫາຊົນ. ບັນຫານີ້ ແມ່ນໜຶ່ງໃນໄພອັນຕະລາຍ ທີ່ພັກກໍາອໍານາດ ຈະຕ້ອງເອົາໃຈໃສ່ສະກັດກັ້ນແກ້ໄຂໃຫ້ທັນການ.

ໂດຍໝູນໃຊ້ທິດສະດີມາກ-ເລນິນ ຢ່າງປະດິດສ້າງ ນັບແຕ່ມື້ກໍາເນີດພັກປະຊາຊົນປະຕິວັດລາວເປັນຕົ້ນມາ ພັກໄດ້ຖືເອົາມະຫາຊົນເປັນກົກ ແລະ ເຄື່ອນໄຫວຕາມແນວທາງມະຫາຊົນ ກາຍເປັນບັນຫາຍຸດທະສາດຂອງການປະຕິວັດ. ພັກໄດ້ຕັ້ງໜ້າສຶກສາອົບຮົມ, ຈັດຕັ້ງນໍາພາມະຫາຊົນຢ່າງໃກ້ຊິດ, ພຶດຕິກໍາຕົວຈິງສະແດງອອກ: ຕະຫຼອດໄລຍະການຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍ່ຄືໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດໃນປະຈຸບັນ, ພັກຍາມໃດກໍ່ເປັນຫ່ວງເປັນໃຍ ເຖິງຄວາມກ້າວໜ້າ ແລະ ຂະຫຍາຍຕົວຂອງມະຫາຊົນບັນດາເຜົ່າ ເຊິ່ງສະແດງອອກໃນແນວທາງ ແລະ ທັດສະນະໃຫຍ່ໆຂອງພັກ ລ້ວນແຕ່ເພື່ອປະຊາຊົນນັ້ນເອງ.

ການເຄື່ອນໄຫວຕາມແນວທາງມະຫາຊົນຂອງພັກ ແມ່ນໝາຍເຖິງການເຊີດຊູ ແລະ ເສີມຂະຫຍາຍປະຊາທິປະໄຕ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ເອົາປະຊາຊົນເປັນກົກຢູ່ພາຍໃຕ້ການນໍາພາຂອງພັກ ເຊິ່ງພັກໄດ້ວາງທັດສະນະກ່ຽວກັບວຽກງານມະຫາຊົນຄື: ພາລະກິດປະຕິວັດ ກໍ່ຄືພາລະກິດປ່ຽນແປງໃໝ່ ແມ່ນພາລະກິດຂອງປະຊາຊົນ, ຈຸດໝາຍຂອງພັກເຮົາ ແມ່ນນໍາພາປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ ແລະ ປຸກລະດົມຂະບວນການສ້າງຄວາມຮັ່ງມີຂອງປະຊາຊົນ ເຮັດໃຫ້ປະເທດຊາດເຂັ້ມແຂງ ແລະ ປະຊາຊົນຮັ່ງມີຜາສຸກ; ຫາທຸກວິທີທາງ ເພື່ອນໍາເອົາຜົນປະໂຫຍດຕົວຈິງມາໃຫ້ປະຊາຊົນ, ສົມທົບຢ່າງກົມກຽວລະຫວ່າງຜົນປະໂຫຍດສ່ວນບຸກຄົນ, ໝູ່ຄະນະ ກັບຜົນປະໂຫຍດຂອງຊາດ ແລະ ພັນທະພົນລະເມືອງຕິດພັນນໍາກັນ, ເປັນກໍາລັງໜູນກະຕຸກຊຸກຍູ້ຂະບວນການຂອງມະຫາຊົນ; ເຕົ້າໂຮມມະຫາຊົນເຂົ້າໃນການຈັດຕັ້ງດ້ວຍຫຼາຍຮູບການຈັດຕັ້ງທີ່ອຸດົມຮັ່ງມີ, ຫຼາຍຮູບຫຼາຍສີ, ຫຼາຍລະດັບ ແລະ ຫຼາຍຂະໜາດແຕກຕ່າງກັນ ເພື່ອກໍາ ແລະ ສຶກສາອົບຮົມມະຫາຊົນ ໃຫ້ຢູ່ໃນການຄຸ້ມຄອງພາຍໃຕ້ລະບຽບການ ແລະ ກົດໝາຍ; ວຽກງານມະຫາຊົນແມ່ນຄວາມຮັບຜິດຊອບຂອງພັກ, ຂອງລັດ ແລະ ຂອງບັນດາອົງການຈັດຕັ້ງມະຫາຊົນ; ເສີມຂະຫຍາຍທິດສະດີຂອງບັນດາທ່ານຜູ້ທີ່ໃຫ້ກໍາເນີດທິດສະດີປະຕິວັດທີ່ວ່າ: ມະຫາຊົນເປັນຜູ້ສ້າງປະຫວັດສາດ, ພາລະກິດປະຕິວັດ ແມ່ນພາລະກິດຂອງມະຫາຊົນ, ປະທານໄກສອນ ພົມວິຫານ ໄດ້ກ່າວວ່າ: " ແນວທາງທີ່ເດັດດ່ຽວປົດປ່ອຍປະເທດຊາດ, ສໍາເລັດການປະຕິວັດຊາດ, ປະຊາທິປະໄຕ ດ້ວຍກໍາລັງຮຸນແຮງຂອງມະຫາຊົນ ແລະ ເລີ່ມຈາກມູນເຊື້ອແຫ່ງການຕໍ່ສູ້ອັນກ້າຫານເດັດຂາດ ບໍ່ອ່ອນຍອມຈໍານົນຂອງປະຊາຊົນບັນດາເຜົ່າຢູ່ປະເທດເຮົາ ເຊິ່ງພັກໄດ້ຂະຫຍາຍມັນອອກຢ່າງແຂງແຮງ "[2].

ພຶດຕິກໍາຕົວຈິງຂອງການປະຕິວັດປະເທດເຮົາໄດ້ຊີ້ບອກພວກເຮົາຢ່າງຈະແຈ້ງແລ້ວວ່າ ກໍາລັງແຮງມະຫາສານແມ່ນຢູ່ນໍາມະຫາຊົນ. ພັກມີແນວທາງຖືກຕ້ອງ ນໍາເອົາຜົນປະໂຫຍດຕົວຈິງມາສູ່ເຂົາເຈົ້າ ເຖິງວ່າພາລະກິດປະຕິວັດນັ້ນຈະມີຄວາມຫຍຸ້ງຍາກປານໃດກໍ່ຕາມ, ມະຫາຊົນກໍ່ສາມາດຕະລຸມບອນຜ່ານຜ່າ, ກົງກັນຂ້າມ ຖ້າແນວທາງວາງອອກນັ້ນ ຫາກບໍ່ນໍາເອົາຜົນ

ປະໂຫຍດຕົວຈິງມາໃຫ້ມະຫາຊົນແລ້ວ ມະຫາຊົນກໍ່ບໍ່ສະໜັບສະໜູນທຸກວຽກງານທີ່ວາງອອກ ກໍ່ຈະບໍ່ສໍາເລັດເປັນຕົ້ນເປັນໂຕຂຶ້ນໄດ້. ຜົນປະໂຫຍດດັ່ງກ່າວນັ້ນ, ກ່ອນອື່ນໝົດຕ້ອງຖືຜົນປະໂຫຍດທາງດ້ານເສດຖະກິດເປັນກົກ ໝາຍວ່າແມ່ນການປັບປຸງປົວແປງຍົກລະດັບຊີວິດການເປັນຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ ດ້ວຍການຫັນເສດຖະກິດທໍາມະຊາດໄປສູ່ເສດຖະກິດສິນຄ້າ, ສ້າງຖະໜົນຫົນທາງ, ກິນຢູ່ຖືກຫຼັກອະນາໄມສາມສະອາດ.

ດັ່ງພວກເຮົາຮູ້ນໍາກັນແລ້ວ, ມະຫາຊົນແມ່ນກໍາລັງທີ່ກວ້າງຂວາງ ສັງກັດຢູ່ໃນທຸກຂະແໜງການ, ທຸກທ້ອງຖິ່ນ ໃນກໍາລັງມະຫາຊົນນີ້ ມັນໄດ້ບົ່ມຊ້ອນຫຼາຍສາຂາອາຊີບ, ຫຼາຍລະດັບ, ຫຼາຍຫົວຄິດປະດິດສ້າງຕ່າງກັນທີ່ອຸດົມຮັ່ງມີທີ່ສຸດ. ຖ້າຮູ້ຈັດຕັ້ງນໍາພາກໍາລັງມະຫາຊົນເຫຼົ່ານີ້ ກໍ່ຈະກາຍເປັນກໍາລັງແຮງສັງລວມໃຫຍ່ທີ່ສຸດ, ແຂງແຮງທີ່ສຸດ ໃຫ້ແກ່ການປະຕິບັດໜ້າທີ່ການເມືອງທີ່ພັກ ແລະ ລັດຖະບານວາງອອກ ກໍ່ຄືໜ້າທີ່ທີ່ໄດ້ມອບໝາຍໃຫ້ແຕ່ລະຂະແໜງການທ້ອງຖິ່ນນໍາໄປຈັດຕັ້ງປະຕິບັດ. ທຸກຂະແໜງການ ແລະ ທ້ອງຖິ່ນຢາກເຮັດສໍາເລັດໜ້າທີ່ການເມືອງຂອງຕົນເປັນຢ່າງດີຕ້ອງກໍາແໜ້ນກໍາລັງຂອງມະຫາຊົນ, ຮູ້ຈັດຕັ້ງນໍາພາຂະບວນການມະຫາຊົນຢ່າງກວ້າງຂວາງ ໂດຍຜ່ານການເຄື່ອນໄຫວຂອງອົງການມະຫາຊົນ, ຜ່ານການປະຕິບັດຕາມພາລະບົດບາດຂອງເຂົາເຈົ້າຢ່າງມີປະສິດທິຜົນ.

ເພື່ອເຮັດໃຫ້ຄວາມໝາຍທີ່ວ່າ: "ຖືເອົາປະຊາຊົນເປັນກົກ ແລະ ເຄື່ອນໄຫວຕາມແນວທາງມະຫາຊົນ" ໄດ້ກາຍເປັນການກະທໍາຕົວຈິງ ໃນຕໍ່ໜ້າພວກເຮົາຕ້ອງປະຕິບັດ 4 ຄາດໝາຍໃຫຍ່ໆ ໃນການພັດທະນາຊົນນະບົດຄື:

ບັນຫາກົກ: ແມ່ນເຮັດໃຫ້ປະຊາຊົນມີຄວາມຮູ້ ແລະ ຄວາມຕື່ນຕົວທາງດ້ານການເມືອງ ໃຫ້ເຂົາເຈົ້າໄດ້ເສີມຂະຫຍາຍສິດເປັນເຈົ້າຂອງປະເທດຊາດ, ສາມັກຄີເອື້ອເຟື້ອຊ່ວຍເຫຼືອກັນ, ພ້ອມພຽງຮຽງໜ້າກັນສ້າງສາພັດທະນາບ້ານຊ່ອງ.

ບັນຫາໃຈກາງ: ຍູ້ແຮງການຜະລິດຢູ່ຊົນນະບົດເປັນຕົ້ນແມ່ນເຮັດໃຫ້ການຜະລິດກະສິກໍາ-ປ່າໄມ້ ກາຍເປັນການຜະລິດສິນຄ້າ ເພື່ອສະໜອງຜົນປະໂຫຍດດ້ານເສດຖະກິດ, ວັດທະນະທໍາ-ສັງຄົມ ເຮັດໃຫ້ປະຊາຊົນມີຄຸນນະພາບຊີວິດດີຂຶ້ນເປັນກ້າວໆ.

ບັນຫາພື້ນຖານ: ເຮັດໃຫ້ຊົນນະບົດມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ປຸກລະດົມຊາວບ້ານເຂົ້າຮ່ວມ ສ້າງທ່າສະໜາມສົງຄາມປະຊາຊົນ, ເປັນຕົ້ນແມ່ນການສ້າງບ້ານປ້ອມໝັ້ນ, ບ້ານສູ້ຮົບຕິດລຽນ, ປະກອບສ່ວນໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ທ້ອງຖິ່ນ.

ບັນຫາຕັດສິນ: ປັບປຸງ ແລະ ກໍ່ສ້າງພັກ, ອໍານາດການປົກຄອງໃຫ້ເຂັ້ມແຂງ, ສ້າງພະນັກງານກັບທີ່, ປັບປຸງ ແລະ ເສີມຂະຫຍາຍບົດບາດຂອງອົງການຈັດຕັ້ງມະຫາຊົນພາຍໃນບ້ານ ກໍ່ຄືຢູ່ຮາກຖານການຜະລິດຕ່າງໆ.

ສັງລວມແລ້ວ, ການຖືເອົາປະຊາຊົນເປັນກົກ ແລະ ເຄື່ອນໄຫວຕາມແນວທາງມະຫາຊົນ ມີຄວາມໝາຍວ່າ: ພະນັກງານ ແລະ ສະມາຊິກພັກທຸກສະຫາຍຕ້ອງລົງໃກ້ຊິດຕິດແທດກັບມະຫາຊົນ, ຊອກຮູ້ຄວາມມຸ່ງມາດປາຖະໜາ, ຄວາມຂັດຂ້ອງໝອງໃຈ ແລະ ຄວາມຮຽກຮ້ອງຕ້ອງການກ່ຽວກັວຜົນປະໂຫຍດດ້ານຕ່າງໆຂອງມະຫາຊົນ, ຫງ່ຽງຫູຟັງຫາງສຽງຂອງມະຫາຊົນເພື່ອນໍາເອົາສະພາບການດັ່ງກ່າວລາຍງານໃຫ້ພັກ ກໍ່ຄືຂັ້ນເທິງຮັບຮູ້ ແລະ ຊອກຫາວິທີແກ້ໄຂຄວາມຂັດຂ້ອງໝອງໃຈ ແລະ ຄວາມຮຽກຮ້ອງຕ້ອງການກ່ຽວກັບຜົນປະໂຫຍດດ້ານຕ່າງໆຂອງມະຫາຊົນ. ເຮັດໄດ້ຄືແນວນັ້ນ ເຮົາຈຶ່ງສາມາດກໍາໄດ້ມະຫາຊົນ, ໄດ້ຮັບຄວາມເຊື່ອຖືຮັກແພງຈາກມະຫາຊົນ, ມະຫາຊົນຈຶ່ງເຊື່ອໝັ້ນຕໍ່ການນໍາພາຂອງພັກ ແລະ ລັດ...ຯ

ເອກະສານອ້າງອີງ: (1) ນິພົນຄົບຊຸດຂອງເລນິນ ເຫຼັ້ມ 8 ໜ້າ 336
(2) ປະທານ ໄກສອນ ພົມວິຫານ ນິພົນເລືອກເຟັ້ນເຫຼັ້ມ 1 ໜ້າ 196.

ການກໍ່ສ້າງ-ບຳລຸງພະນັກງານ ຢູ່ແຂວງສາລະວັນ

ໂດຍ: ເພັດພາພອນ ພາສີ

ການກໍ່ສ້າງ-ບຳລຸງພະນັກງານ ເປັນວຽກໜຶ່ງທີ່ມີຄວາມສຳຄັນທີ່ສຸດ ເພາະພະນັກງານເປັນທຶນຮອນອັນປະເສີດຂອງພັກ, ເປັນຜູ້ນຳພາປະຊາຊົນ, ເປັນຂົວຕໍ່ລະຫວ່າງພັກກັບປະຊາຊົນ ແລະ ຮັບໃຊ້ປະຊາຊົນ. ທຸກວຽກງານຂອງພັກຈະດີ ຫຼື ຮ້າຍ, ຈະໄດ້ຮັບໄຊຊະນະ ຫຼື ປາລາໄຊ ກໍ່ລ້ວນແຕ່ແມ່ນພະນັກງານເປັນຜູ້ຕັດສິນ. ສະນັ້ນ ພັກເຮົາຍາມໃດກໍ່ຖືວຽກງານພະນັກງານເປັນວິທະຍາສາດໜຶ່ງທີ່ມີຊີວິດຊີວາ ແລະ ເອົາໃຈໃສ່ຕໍ່ການກໍ່ສ້າງ-ບຳລຸງພະນັກງານ, ຍົກລະດັບຄວາມຮູ້, ຄວາມສາມາດ, ເຮັດໃຫ້ພະນັກງານມີຄວາມໜັກແໜ້ນ, ທາງດ້ານການເມືອງ, ຄຸນສົມບັດສິນທຳປະຕິວັດ, ກຳແໜ້ນບັນດາຫຼັກມູນທາງດ້ານທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ແນວທາງນະໂຍບາຍຂອງພັກຢ່າງເປັນລະບົບ, ມີຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ ແລະ ຄວາມຮູ້ດ້ານ**ວິທະຍາສາດ-ເຕັກນິກ ເພື່ອຍົກສູງປະສິດທິພາບແລະ**ປະສິດທິຜົນຂອງວຽກງານ, ພ້ອມທັງຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ, ມີແຕ່ຜ່ານການກໍ່ສ້າງ-ບຳລຸງເທົ່ານັ້ນຈຶ່ງຈະເຮັດໃຫ້ພະນັກງານມີການຫັນປ່ຽນໃໝ່ທາງດ້ານຈິນຕະນາການ ໂດຍສະເພາະໃນສະພາບການປ່ຽນແປງໃໝ່ຄືປະຈຸບັນ ຍິ່ງມີຄວາມຈຳເປັນ.

ໃນການດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກເຮົາ ໄດ້ຖືເອົາການພັດທະນາຊັບພະຍາກອນມະນຸດ ເປັນບັນຫາສຳຄັນຕໍ່ການຈັດຕັ້ງປະຕິບັດແນວທາງ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພາະຖ້າຂາດພະນັກງານຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນທາດການເມືອງໜັກແໜ້ນ ແລະ ເປັນແບບຢ່າງທີ່ດີໃນຂະບວນການຕົວຈິງແລ້ວ ພວກເຮົາກໍ່ບໍ່ສາມາດເຮັດສຳເລັດພາລະໜ້າທີ່ສຳຄັນນັ້ນໄດ້. ຍິ່ງໄປກວ່ານັ້ນ, ອາດຈະນຳຜົນເສຍຫາຍອັນມະຫາສານມາສູ່ປະເທດຊາດກໍ່ເປັນໄດ້. ປະທານ ໄກສອນ ພົມວິຫານ ໄດ້ກ່າວ ໄວ້ວ່າ: "ແນວທາງແຜນນະໂຍບາຍ ແລະ ນະໂຍບາຍຂອງພັກ ຈະຖືກຕ້ອງປານໃດກໍ່ດີ ຖ້າພະນັກງານ-ສະມາຊິກພັກ ຫາກຂາດຄວາມຮູ້, ຄວາມສາມາດໃນດ້ານຕ່າງໆເພື່ອນຳພາ ແລະ ຈັດຕັ້ງປະຕິບັດແລ້ວ ແນວທາງນະໂຍບາຍດັ່ງກ່າວກໍ່ຈະດີພຽງແຕ່ຢູ່ໜ້າເຈ້ຍເທົ່ານັ້ນ"(1) .

ການພັດທະນາພະນັກງານ-ລັດຖະກອນ ຈຶ່ງໝາຍເຖິງຂະບວນການທີ່ຕ້ອງການທີ່ຈະປ່ຽນແປງວິທີການເຮັດວຽກ, ຄວາມຮູ້, ຄວາມສາມາດ, ທັກສະ ແລະ ແນວຄິດຂອງພະນັກງານໃຫ້ໄປໃນທິດທາງທີ່ດີຂຶ້ນ ໂດຍຜ່ານການເຝິກອົບຮົມ ແລະ ສຶກສາຮ່ຳຮຽນຢ່າງເປັນລະບົບຕໍ່ເນື່ອງ ເພື່ອເຮັດໃຫ້ພະນັກງານທີ່ໄດ້ຮັບການພັດທະນາແລ້ວນັ້ນ ກາຍເປັນຜູ້ຊຳນານງານ ແລະ ສາມາດປະຕິບັດໜ້າທີ່ວຽກງານໄດ້ຕາມຈຸດປະສົງຂອງໜ່ວຍງານ ຫຼື ອົງການຈັດຕັ້ງທີ່ສັງກັດຢ່າງມີປະສິດທິພາບ ປະທານ ໄກສອນ ພົມວິຫານກ່າວໄວ້ວ່າ: ພະນັກງານເປັນທຶນຮອນອັນປະເສີດທີ່ສຸດຂອງພັກ ເປັນຜູ້ນຳພາປະຊາຊົນ, ເປັນຜູ້ຮັບໃຊ້ປະຊາຊົນ, ເປັນຂົວຕໍ່ລະຫວ່າງພັກກັບປະຊາຊົນ, ຫຼັງຈາກພັກໄດ້ມີແນວທາງນະໂຍບາຍອັນຖືກຕ້ອງແລ້ວ, ທຸກວຽກງານປະຕິວັດຂອງພັກຈະດີ ຫຼື ຮ້າຍ, ຈະມີໄຊ ຫຼື ປາລາໄຊ ກໍ່ລ້ວນແຕ່ແມ່ນພະນັກງານຂອງພັກເປັນຜູ້ຕັດສິນ(2).

ໃນເງື່ອນໄຂປະຈຸບັນນີ້, ພັກເຮົາມີຄວາມຈຳເປັນຕ້ອງມີກຸ່ມແຖວພະນັກງານທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດ, ມີທາດແທ້ຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຢ່າງສຸດຊຶ້ງຕໍ່ປະເທດຊາດ ແລະ ພາລະກິດຂອງພັກ, ມີນ້ຳໃຈຮັບໃຊ້ຊາດ ຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດໃຈ, ມີແບບແຜນ

ການດຳລົງຊີວິດທີ່ສົດໃສ ແລະ ກ້າວໜ້າ, ມີມານະຈິດເຝິກຝົນຫຼໍ່ຫຼອມຕົນເອງ ແລະ ດຸໝັ່ນຄົ້ນຄວ້າຮໍ່າຮຽນຍົກລະດັບຄວາມຮູ້, ຄວາມສາມາດໃນທຸກດ້ານຢ່າງບໍ່ຢຸດຢັ້ງ, ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບວິໄນ, ເຄົາລົບ ແລະ ປະຕິບັດກົດໝາຍ, ກົດລະບຽບຂອງພັກຢ່າງເຂັ້ມງວດ.

ໃນມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ກໍ່ໄດ້ກຳນົດຢ່າງຈະແຈ້ງວ່າ "ພັດທະນາຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ທີ່ສາມາດຕອບສະໜອງຄວາມຕ້ອງການ ຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະການບໍລິການ"(3)

ແຂວງສາລະວັນ ເປັນແຂວງໜຶ່ງທີ່ຕັ້ງຢູ່ພາກໃຕ້ຂອງ ສປປລາວ ມີເນື້ອທີ່ທັງໝົດ 10.691 ກິໂລຕາແມັດ, ມີພົນລະເມືອງທັງໝົດ 465.414 ຄົນ, ຍິງ 235.839 ຄົນ, ມີ 08 ຕົວເມືອງ ປະກອບດ້ວຍ 10 ເຜົ່າຊົນ; ປະຈຸບັນມີພະນັກງານ-ລັດຖະກອນທົ່ວແຂວງ ທັງໝົດ 7.307 ຄົນ, ຍິງ 3.419 ຄົນ, ໃນນີ້ ມີລະດັບວິຊາສະເພາະ ປະລິນຍາເອກ 05 ຄົນ, ປະລິນຍາໂທ 275 ຄົນ, ປະລິນຍາຕີ 2.740 ຄົນ, ຊັ້ນສູງ 1.885 ຄົນ, ຊັ້ນກາງ 1.786 ຄົນ, ຊັ້ນຕົ້ນ 605 ຄົນ, ບໍ່ມີຊັ້ນ 5 ຄົນ(4). ໃນໄລຍະຜ່ານມາຄະນະພັກແຕ່ລະຂັ້ນ ໄດ້ເປັນເຈົ້າການຈັດຕັ້ງຜັນຂະຫຍາຍເຜີຍແຜ່, ຄົ້ນຄວ້າ, ເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ກົດລະບຽບພັກ ສະໄໝທີ XI, ມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XI, ມະຕິວ່າດ້ວຍການເພີ່ມທະວີການນຳພາຂອງພັກ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ວຽກງານພະນັກງານ, ຄຳສັ່ງວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ, ມະຕິກອງປະຊຸມວຽກງານຈັດຕັ້ງທົ່ວແຂວງ, ມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ນັບແຕ່ຄັ້ງທີ 4-10 ສະໄໝທີ IX, ມະຕິກອງປະຊຸມອົງການປົກຄອງເປີດກ້ວາງ ນັບແຕ່ຄັ້ງທີ 1-6 ແລະ ຈັດຕັ້ງປະຖະກະຖາເລົ່າມູນເຊື້ອວັນສຳຄັນຕ່າງໆ ຂອງພັກ-ຂອງຊາດ ໄດ້ທັງໝົດ 50 ຄັ້ງ ມີຈຳນວນຜູ້ເຂົ້າຮ່ວມ 536 ເທື່ອສະຫາຍ, ຍິງ 225 ເທື່ອສະຫາຍ ເຊິ່ງເຮັດໃຫ້ສະພາບຖັນແຖວພະນັກງານ-ສະມາຊິກພັກພາຍໃນແຂວງສາລະວັນມີຄວາມສະຫງົບໂດຍພື້ນຖານ ແລະ ມີຄວາມເຊື່ອໝັ້ນຕໍ່ແນວທາງແຜນນະໂຍບາຍຂອງພັກວາງອອກແຕ່ລະໄລຍະ ຕິດພັນກັບການສຶກສາອົບຮົມທາງດ້ານການເມືອງແນວຄິດຍັງໄດ້ເອົາໃຈໃສ່ຊີ້ນຳການປະຕິບັດບັນດາໜ້າວຽກຕ່າງໆດັ່ງນີ້:

- ວຽກງານບຳລຸງ-ກໍ່ສ້າງພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ທີ່ຢູ່ໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ດ້ວຍຫຼາຍວິທີການ ຕາມເງື່ອນໄຂຕົວຈິງ ຂອງແຕ່ລະຂະແໜງການ, ຖືສຳຄັນການສ້າງພະນັກງານໃຫ້ມີຄວາມໜັກແໜ້ນທາງດ້ານທິດສະດີການເມືອງ-ການປົກຄອງ, ມີຄວາມຊຳນານງານທາງດ້ານວຽກງານວິຊາສະເພາະ, ມອບໝາຍໜ້າທີ່, ແນະນຳວຽກງານໃຫ້ຮັບຜິດຊອບ ແລະ ຫັນພະນັກງານນຳພາຄຸ້ມຄອງລົງກໍ່ສ້າງຮາກຖານການເມືອງ ຈຳນວນ 101 ສະຫາຍ, ຍິງ 13 ສະຫາຍ. ຄັດເລືອກ, ນຳສົ່ງພະນັກງານໄປບຳລຸງ-ກໍ່ສ້າງທາງດ້ານທິດສະດີການເມືອງ-ການປົກຄອງ ແລະ ວຽກງານວິຊາສະເພາະ ຢູ່ສະຖາບັນການສຶກສາ ທັງພາຍໃນ ແລະ ຕ່າງປະເທດ, ທັງໝົດ 614 ສະຫາຍ, ຍິງ 147 ສະຫາຍ. ໃນນັ້ນ ຢູ່ຕ່າງປະເທດຈຳນວນ 87 ສະຫາຍ, ຍິງ 16 ສະຫາຍ, ພາຍໃນປະເທດ 527 ສະຫາຍ, ຍິງ 131 ສະຫາຍ. ທຽບລະດັບທິດສະດີການເມືອງໃຫ້ພະນັກງານຂັ້ນແຂວງຄຸ້ມຄອງ ຈຳນວນທັງໝົດ 730 ທ່ານ, ຍິງ 148 ທ່ານ, ໃນນັ້ນພະນັກງານການນຳຂັ້ນສູນກາງຄຸ້ມຄອງ 33 ທ່ານ, ຍິງ 3 ທ່ານ ແລະ ຂັ້ນແຂວງ ຄຸ້ມຄອງຈຳນວນ 697 ທ່ານ, ຍິງ 145 ທ່ານ.

ຄົ້ນຄວ້ານຳສະເໜີເລື່ອນຊັ້ນນາຍທະຫານ ຈຳນວນ 702 ສະຫາຍ, ຍິງ 82 ສະຫາຍ, ພັກບຳນານ ຈຳນວນ 11 ສະຫາຍ, ຍິງ 1 ສະຫາຍ ແລະ ເລື່ອນຊັ້ນນາຍຕຳຫຼວດ ຈຳນວນ 126 ສະຫາຍ, ຍິງ 20 ສະຫາຍ.

ຄະນະພັກແຕ່ລະຂັ້ນໄດ້ປະຕິບັດນະໂຍບາຍທາງດ້ານວັດຖຸ ແລະ ຈິດໃຈ ຕໍ່ຜູ້ມີຜົນງານ, ຄຸນງາມຄວາມດີຕໍ່ປະເທດຊາດ, ນະໂຍບາຍອອກພັກການ-

ຮັບອຸດໜູນບຳນານ, ກວດກາ, ປິ່ນປົວສຸຂະພາບ, ເສຍຊີວິດ ຕາມນະໂຍບາຍ, ລະບຽບການຂອງພັກ-ລັດ; ຍ້ອງຍໍຜູ້ມີຜົນງານ ໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ 5 ປີ, ຜົນງານ 1 ປີ ຢ່າງສົມເຫດສົມຜົນ.

- ວຽກງານຍົກຍ້າຍ, ສັບຊ້ອນ, ຈັດວາງພະນັກງານ: ແມ່ນອີງໃສ່ມາດຖານຂອງຕຳແໜ່ງງານທີ່ໄດ້ກຳນົດໄວ້; ການແຕ່ງຕັ້ງ, ສັບຊ້ອນໃຫ້ຖືກກັບວຽກ ແລະ ວິຊາສະເພາະ; ບຸກຄະລາກອນບັນຈຸຢູ່ພະແນກການ-ອົງການ ແລະ ເມືອງ ສ່ວນຫຼາຍແມ່ນໜຸ່ມແໜ້ນ, ມີຄວາມຮູ້, ຄວາມສາມາດ; ໄດ້ປະຕິບັດລະບອບສັບປ່ຽນໜ້າທີ່ ແລະ ບ່ອນປະຈຳການ ຂອງພະນັກງານນຳພາ-ຄຸ້ມຄອງ ນັບແຕ່ພະແນກການລົງຮອດເມືອງ; ຜ່ານມາ ໄດ້ຄົ້ນຄວ້າສະເໜີແຕ່ງຕັ້ງເຈົ້າແຂວງ 01 ທ່ານ, ແຕ່ງຕັ້ງເຈົ້າເມືອງ 04 ທ່ານ, ຮອງເຈົ້າເມືອງ 03 ທ່ານ, ແຕ່ງຕັ້ງຫົວໜ້າພະແນກ-ອົງການ 14 ທ່ານ, ຍິງ 01 ທ່ານ, ແຕ່ງຕັ້ງຮອງຫົວໜ້າພະແນກ-ອົງການ 20 ທ່ານ ຍິງ 02 ທ່ານ, ແຕ່ງຕັ້ງຫົວໜ້າລັດວິສະຫະກິດ 01 ທ່ານ, ແຕ່ງຕັ້ງຫົວໜ້າຂະແໜງ 16 ທ່ານ, ຍິງ 04 ທ່ານ, ແຕ່ງຕັ້ງຮອງຂະແໜງ 19 ທ່ານ ຍິງ 07 ທ່ານ. ຢັ້ງຢືນການແຕ່ງຕັ້ງຍົກຍ້າຍໃຫ້ພະແນກການສາຍຕັ້ງທີ່ຂຶ້ນກັບສິດຄຸ້ມຄອງ, ຕົກລົງຂອງກະຊວງ-ອົງການ ຈຳນວນ 74 ທ່ານ, ຍິງ 18 ທ່ານ (ອົງການໄອຍະການ, ສານປະຊາຊົນສູງສຸດ, ພາສີ, ອາກອນ ແລະ ຄັງເງິນແຫ່ງຊາດ) ແລະ ສະເໜີຍົກຍ້າຍເຈົ້າແຂວງ 01 ທ່ານ, ຫົວໜ້າພະແນກການ-ອົງການ 01 ທ່ານ, ຮອງຫົວໜ້າພະແນກການ-ອົງການ 13 ທ່ານ ຍິງ 02 ທ່ານ, ຫົວໜ້າຂະແໜງ 04 ທ່ານ, ຍິງ 02 ທ່ານ, ຮອງຫົວໜ້າຂະແໜງ 02 ທ່ານ ແລະ ຍົກຍ້າຍພະນັກງານເມືອງ-ເມືອງ, ແຂວງ-ແຂວງ, ແຂວງ-ເມືອງ ຈຳນວນ 16 ທ່ານ, ຍິງ 02 ທ່ານ.

- ວຽກງານນະໂຍບາຍຕໍ່ພະນັກງານ: ຜ່ານມາໄດ້ປະຕິບັດນະໂຍບາຍ ຕໍ່ພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງຄຸ້ມຄອງ ອອກພັກຜ່ອນຮັບເບັ້ຍບຳນານ ຈຳນວນ 02 ທ່ານ ຍິງ 0 ທ່ານ, ອະນຸມັດພະນັກງານ-ລັດຖະກອນ ຂັ້ນແຂວງຄຸ້ມຄອງ ອອກພັກຜ່ອນຮັບບຳນານ 10 ທ່ານ ຍິງ 04 ທ່ານ; ໄດ້ສະເໜີຫາຄະນະຈັດຕັ້ງສູນກາງພັກ ເພື່ອຂໍນະໂຍບາຍທຶນສົມທົບປຸກສ້າງເຮືອນຢູ່ອາໄສ ໃຫ້ພະນັກງານການນຳຂັ້ນສູງຂອງແຂວງຈຳນວນ 03 ທ່ານ ຕາມມະຕິຂອງກົມການເມືອງ 120/ກມສພ, ລົງວັນທີ 10 ສິງຫາ 2007, ໄດ້ສະເໜີຍ້ອງຍໍຜົນງານການເຄື່ອນໄຫວບັ້ນເລືອກຕັ້ງ ສສຊ ຊຸດທີ IX ແລະ ສສຂ ຊຸດທີ II ຈຳນວນ 04 ທ່ານ ຍິງ 01 ທ່ານ ແລະ ຍັງໄດ້ປະຕິບັດນະໂຍບາຍທາງດ້ານວັດຖຸ ແລະ ຈິດໃຈຕໍ່ຜູ້ມີຜົນງານ, ຄຸນງາມຄວາມດີຕໍ່ປະເທດຊາດ, ກວດກາ, ປິ່ນປົວສຸຂະພາບ, ເສຍຊີວິດຕາມນະໂຍບາຍ, ລະບຽບການຂອງພັກ-ລັດ; ຍ້ອງຍໍຜູ້ມີຜົນງານ ໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ 05 ປີ, ຜົນງານ 01 ປີ ຢ່າງສົມເຫດສົມຜົນ[5].

ເວົ້າລວມແລ້ວ, ການກໍ່ສ້າງ-ບຳລຸງພະນັກງານພາຍໃນແຂວງສາລະວັນ ແມ່ນໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ມີປະສິດທິຜົນດີພໍສົມຄວນ. ແຕ່ເຖິງຢ່າງໃດກໍ່ຕາມ ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນເຫັນວ່າຍັງມີບາງດ້ານທີ່ຈະຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າດັ່ງນີ້:

- ເຖິງແມ່ນວ່າຄະນະພັກແຕ່ລະຂັ້ນ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ບັນດາສະມາຊິກພັກ, ພະນັກງານ-ລັດຖະກອນຢ່າງເປັນປົກກະຕິກໍ່ຕາມ ແຕ່ຍັງມີຈຳນວນໜຶ່ງບໍ່ສາມາດປະຕິບັດໄດ້ຢ່າງຄົບຖ້ວນຍ້ອນຂາດການຝຶກຝົນຫຼໍ່ຫຼອມຕົນເອງ, ເປັນຕົ້ນການສຶກສາຄົ້ນຄວ້າບັນດານິຕິກຳຕ່າງໆດ້ວຍຕົນເອງ, ລໍຖ້າແຕ່ຄຳສັ່ງ ແລະ ຂາດການບຸກບືນດ້ວຍຕົນເອງ;

- ລະດັບຄວາມຮູ້, ຄວາມສາມາດ ແລະ ຄຸນນະພາບນຳພາຂອງຄະນະພັກບາງບ່ອນຍັງບໍ່ທັນສູງ, ການເອົາມະຕິ, ຄຳສັ່ງ, ຄຳແນະນຳຂອງພັກ-ລັດ ເປັນແຜນງານ, ໂຄງການ ໃນການຈັດຕັ້ງປະຕິບັດມີລັກສະນະລວມໆ, ຊັກຊ້າບໍ່ທັນກຳນົດໄດ້ມາດຕະຖານ, ວິທີການຈັດຕັ້ງປະຕິບັດອັນລະອຽດເທົ່າທີ່ຄວນ;

- ການບຳລຸງ-ກໍ່ສ້າງພະນັກງານ ທາງດ້ານທິດສະດີການເມືອງ ແລະ ດ້ານວິຊາສະເພາະ ແມ່ນຍັງບໍ່ເປັນລະບົບຄົບຊຸດ, ຖ້າທຽບກັບຄວາມຮຽກຮ້ອງຕ້ອງການ ໜ້າທີ່ການເມືອງໃນໄລຍະໃໝ່ຂອງຂະແໜງ

ການ ແລະ ທ້ອງຖິ່ນ.

ເພື່ອເຮັດໃຫ້ການກໍ່ສ້າງ-ບໍາລຸງພະນັກງານ ຢູ່ພາຍໃນແຂວງສາລະວັນ ມີຄຸນນະພາບ ພ້ອມທັງສາມາດຕອບສະໜອງທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ແລະ ຮັບປະກັນໃຫ້ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ຄວນເອົາໃຈໃສ່ປະຕິບັດບາງວຽກງານດັ່ງນີ້:

ໜຶ່ງ, ຄະນະພັກ-ຄະນະນໍາແຕ່ລະຂັ້ນ ຄວນເພີ່ມທະວີການກວດກາ, ຕີລາຄາຄຸນນະພາບຂອງພະນັກງານຕາມຄວາມເປັນຈິງໃນປະຈຸບັນ ເພື່ອເປັນບ່ອນອີງໃຫ້ແກ່ການສ້າງແຜນກໍານົດກໍ່ສ້າງ-ບໍາລຸງພະນັກງານໃຫ້ເໝາະສົມ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃນຕົວຈິງຂອງໜ້າວຽກ ໂດຍສະເພາະແມ່ນທາງດ້ານຄວາມຮູ້, ຄວາມສາມາດ, ຄຸນສົມບັດສົມທໍາປະຕິວັດ ແລະ ແບບແຜນວິທີເຮັດວຽກຕ່າງໆ ຂອງພະນັກງານໃນທຸກຂະແໜງການ.

ສອງ, ຄະນະພັກ-ຄະນະນໍາແຕ່ລະຂັ້ນຄວນເອົາໃຈໃສ່ໃນການສຶກສາອົບຮົມພະນັກງານໃຫ້ມີຄວາມອຸ່ນອ່ຽງທຸ່ນທ່ຽງໃນການປະຕິບັດໜ້າທີ່ວຽກງານ, ການກໍ່ສ້າງຕ້ອງໃຫ້ສອດຄ່ອງກັບແຜນຍຸດທະສາດການພັດທະນາຮັບປະກັນໃຫ້ໄດ້ 03 ຮຸ່ນຄື: ພະນັກງານອາວຸໂສ, ພະນັກງານຮຸ່ນກາງ, ພະນັກງານຮຸ່ນໜຸ່ມ ແລະ ທັງຮັບປະກັນ 3 ປະເພດຄື: ພະນັກງານນໍາພາ, ພະນັກງານຄຸ້ມຄອງ ແລະ ພະນັກງານວິຊາການອື່ນໆທີ່ເຫັນວ່າມີຄວາມຈໍາເປັນຂອງໜ້າທີ່ວຽກງານ.

ສາມ, ເອົາໃຈໃສ່ໃນການນໍາສົ່ງພະນັກງານຜູ້ທີ່ມີເງື່ອນໄຂ ແລະ ເຫັນວ່າມີຄວາມເໝາະສົມໃນການໄປຍົກລະດັບທາງດ້ານທິດສະດີການເມືອງໃຫ້ມີຄວາມເຂົ້າໃຈແຈ້ງກ່ຽວກັບລັດທິມາກ-ເລນິນ ທາງພາຍໃນ ແລະ ຕ່າງປະເທດໃຫ້ເປັນລະບົບ ຄຽງຄູ່ກັບການປະຕິບັດນະໂຍບາຍຢ່າງເໝາະສົມ ເພື່ອເປັນການກະຕຸກຊຸກຍູ້ກໍ່ຄືເປັນກໍາລັງໃຈໃນການສຶກສາຄົ້ນຄວ້າ ແລະ ເປັນແຮງບັນດານໃຈ ດຶງດູດເຂົາເຈົ້າໃນການປະຕິບັດໜ້າທີ່ວຽກງານພາຍຫຼັງທີ່ຮຽນຈົບມາ.

ສີ່, ຄະນະພັກ-ຄະນະນໍາແຕ່ລະຂັ້ນ ຕ້ອງຮັກສາຄວາມເປັນແບບຢ່າງທີ່ດີໃຫ້ແກ່ພະນັກງານຮຸ່ນໜຸ່ມທີ່ຈະສືບທອດ, ພ້ອມທັງປຸກລະດົມໃຫ້ຖັນແຖວພະນັກງານຊອກຮູ້ຮໍ່າຮຽນດ້ວຍຕົນເອງ, ນໍາໃຊ້ທຶນສ່ວນຕົວໄປສຶກສາ, ຄົ້ນຄວ້າເພື່ອຍົກລະດັບວິຊາສະເພາະໃນດ້ານຕ່າງໆຕາມຄວາມເໝາະສົມ ຂອງຜູ້ທີ່ມີເງື່ອນໄຂທີ່ຢາກຍົກລະດັບຄວາມຮູ້, ຄວາມສາມາດຂອງຕົນເອງ ເພື່ອສາມາດນໍາໃຊ້ໃຫ້ຖືກຕາມເປົ້າໝາຍຂອງໜ້າທີ່ວຽກງານທີ່ຕົນຮັບຜິດຊອບ.

ສັງລວມແລ້ວ, ການກໍ່ສ້າງ-ບໍາລຸງພະນັກງານຢູ່ແຂວງສາລະວັນ ເປັນວຽກທີ່ສໍາຄັນທີ່ສຸດເພາະມັນໄດ້ສົ່ງຜົນກະທົບ ໂດຍກົງຕໍ່ການປະຕິບັດໜ້າທີ່ວຽກງານ ເພາະວ່າພະນັກງານແມ່ນກົກເຫງົ້າຂອງທຸກໆວຽກງານ, ເປັນຜູ້ປະຕິບັດໜ້າທີ່ຮັບໃຊ້ພັກ-ລັດ ແລະ ປະຊາຊົນ. ການສຶກສາຄົ້ນຄວ້າ, ຍົກສູງຄຸນນະພາບວຽກງານກໍ່ສ້າງພະນັກງານ, ບໍາລຸງພະນັກງານ, ການຄຸ້ມຄອງ-ປ້ອງກັນພະນັກງານ ແນໃສ່ສ້າງໃຫ້ພະນັກງານກາຍເປັນຜູ້ຈົງຮັກພັກດີ, ບໍລິສຸດຕໍ່ຜົນປະໂຫຍດລວມຂອງຊາດ ແລະ ຂອງການປະຕິວັດ, ໃຫ້ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ, ມີຄວາມຮູ້ກ່ຽວກັບວຽກງານທີ່ຕົນເຮັດ ແລະ ຮູ້ນໍາໃຊ້ຄວາມຮູ້ນັ້ນເຂົ້າໃສ່ເງື່ອນໄຂຕົວຈິງຢ່າງມີປະສິດທິຜົນ. ສະນັ້ນ, ກະໂຕຂອງພະນັກງານກໍ່ຕ້ອງເພີ່ມທະວີການຊອກຮູ້ຮໍ່າຮຽນ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດຂອງຕົນໃຫ້ນັບມື້ນັບສູງຂຶ້ນ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ໄປເຖິງຈຸດໝາຍປາຍທາງທີ່ກໍານົດໄວ້...ຯ

ເອກະສານອ້າງອີງ: (1) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ III, ສໍານັກພິມຈໍາໜ່າຍ ໂຮງພິມແຫ່ງລັດປີ 1997, ໜ້າ 359;
(2) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ I, ປີ 1985, ໜ້າ 68-69;
(3) ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ປີ 2021, ໜ້າ 193;
(4) ບົດສະຫຼຸບສັງລວມ 40 ປີແຫ່ງການປະຕິບັດແນວທາງປ່ຽນແປງໃໝ່ຢູ່ແຂວງສາລະວັນ ເລກທີ 02/ຄຈພຂ.ສວ, ວັນທີ25.10.2024;
(5) ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານຂອງແຂວງສາລະວັນ ໄລຍະ 2021-2023 ແລະ ທິດທາງແຜນການປີ 2024-2025.

ຍົກສູງບົດບາດການນຳພາຂອງຄະນະພັກແຕ່ລະຂັ້ນ ຢູ່ເມືອງຫີນເຫີບ ແຂວງວຽງຈັນ ແມ່ນຄວາມຈຳເປັນພາວະວິໄສ

ໂດຍ: ສໍລະພົງ ລາດຊະວົງ

ເພື່ອສືບຕໍ່ປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ, ນຳພາປວງຊົນລາວທັງຊາດ ປະຕິບັດສອງໜ້າທີ່ຍຸດທະສາດ ແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແນໃສ່ກໍ່ສ້າງ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ ຕາມທິດກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນເຂັ້ມແຂງ, ພັກຕ້ອງເພີ່ມທະວີບົດບາດການນຳພາຂອງຕົນໃນທຸກຂົງເຂດວຽກງານ ເພື່ອຮັບປະກັນໃຫ້ແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ໄດ້ຮັບການຈັດຕັ້ງປະຕິບັດຖືກຕ້ອງ, ສອດຄ່ອງ ແລະ ມີປະສິດທິຜົນເທື່ອລະກ້າວ ດ້ວຍເຫດນັ້ນ, ພັກເຮົາຈຳເປັນຕ້ອງໄດ້ຍົກສູງຄຸນນະພາບຂອງຄະນະພັກ, ສະມາຊິກພັກໃນປະຈຸບັນໃຫ້ມີການພັດທະນາສູງຂຶ້ນໃນລະດັບທີ່ແນ່ນອນມີຄວາມເປັນແບບຢ່າງທາງດ້ານທິດສະດີ ແລະ ພຶດຕິກຳ, ມີແບບແຜນວິທີເຮັດວຽກ ແລະ ແບບແຜນວິທີນຳພາທັນກັບຄວາມຮຽກຮ້ອງຕ້ອງການຂອງສະພາບການໃໝ່.

ດ້ວຍເຫດຜົນດັ່ງກ່າວ ພັກເຮົາຈຶ່ງຖືເອົາການປັບປຸງກົງຈັກການຈັດຕັ້ງພັກ, ຄະນະພັກແຕ່ລະຂັ້ນໃນແຕ່ລະໄລຍະຢ່າງເປັນລະບົບຕໍ່ເນື່ອງ ເພື່ອເຮັດໃຫ້ຄະນະພັກກຳແໜ້ນແນວທາງແຜນນະໂຍບາຍຂອງພັກ, ຮູ້ໜູນໃຊ້ເຂົ້າໃນສະພາບການຕົວຈິງ ແລະ ມີຄວາມສາມາດເຕົ້າໂຮມຄວາມສາມັກຄີ, ຮູ້ໂຄສະນາຂົນຂວາຍມະຫາຊົນ ສ້າງຄວາມສາມັກຄີ ແລະ ປັບປຸງອົງການປົກຄອງ, ຮູ້ນຳພາການເພີ່ມພູນຜະລິດຜົນ, ສ້າງເສດຖະກິດປົວແປງຊີວິດການເປັນຢູ່, ຮູ້ຊຸກຍູ້ກໍ່ສ້າງຂະຫຍາຍພັກ ເພື່ອຕອບສະໜອງກຳລັງແຮງຂອງພັກຢູ່ຂັ້ນຮາກຖານ ແມ່ນການປັບປຸງຮາກຖານພັກ, ກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ ໜັກແໜ້ນ ຍຶດໝັ້ນລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ແລະ ມູນເຊື້ອອັນດີງາມຂອງພັກເປັນພື້ນຖານ ແນວຄິດທິດສະດີຂອງພັກ[1] ແລະ ເປັນເຂັມຊີ້ທິດທຸກການເຄື່ອນໄຫວຂອງພັກ. ພັກຈັດຕັ້ງປະຕິບັດຫຼັກການລວມສູນປະຊາທິປະໄຕ ແບ່ງໃຫ້ບຸກຄົນຮັບຜິດຊອບ, ບຸກຄົນຂຶ້ນກັບການຈັດຕັ້ງ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ຂັ້ນລຸ່ມຂຶ້ນກັບຂັ້ນເທິງ, ທົ່ວພັກຂຶ້ນກັບສູນກາງພັກ, ພັກມີລະບຽບວິໄນຢ່າງເຂັ້ມງວດ, ພັກເປັນກ້ອນກຳລັງສາມັກຄີເອກະພາບດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນການນຳພາ, ພົວພັນສະໜິດແໜ້ນກັບມະຫາຊົນ; ຖືເອົາການຕິຊົມຕົນເອງ ແລະ ການຕິຊົມກັນເປັນກົດເກນການຂະຫຍາຍຕົວຂອງພັກ. ຈາກຄວາມໝາຍຄວາມສຳຄັນດັ່ງກ່າວ ຈຶ່ງມີຄວາມຈຳເປັນພາວະວິໄສໃນການຍົກສູງພາລະບົດບາດການນຳພາຂອງຄະນະບໍລິຫານງານພັກເມືອງຫີນເຫີບ ແຂວງວຽງຈັນ.

ໃນເງື່ອນໄຂປະຈຸບັນ ມັນຍິ່ງມີຄວາມຈຳເປັນຈະຕ້ອງໄດ້ຍົກສູງການນຳພາ ຂອງຄະນະພັກແຕ່ລະຂັ້ນໃຫ້ສູງຂຶ້ນ. ໂດຍສະເພາະແມ່ນ ພະນັກງານແມ່ນປັດໄຈສຳຄັນໃນການຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງ ແຜນນະໂຍບາຍຂອງພັກ ແລະ ວຽກງານພະນັກງານ ແມ່ນຂໍກຸນແຈສຳຄັນໃນຂະບວນວິວັດຈັດຕັ້ງປະຕິວັດບົດບາດນຳພາ ຂອງພັກຕໍ່ພາ

ລະກິດປະຕິວັດ[2]. ດັ່ງນັ້ນ, ການຍົກສູງບົດບາດການນໍາພາຂອງຄະນະບໍລິຫານງານພັກເມືອງຫີນເຫີບ ເພື່ອເພີ່ມທະວີບົດບາດການນໍາພາຮອບດ້ານຂອງຄະນະພັກດັ່ງກ່າວ ຕິດພັນກັບການເສີມຂະຫຍາຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງອົງການປົກຄອງທ້ອງຖິ່ນ. ເຮັດໃຫ້ການບໍລິຫານ ແລະ ການຄຸ້ມຄອງລັດມີຄວາມຄ່ອງຕົວ, ຕິດແທ້ນກັບການເພີ່ມທະວີວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດຮອບດ້ານ ກໍຄືການສ້າງບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ, ຕາມຄໍາສັ່ງແນະນໍາ ເລກທີ 03 ຂອງກົມການເມືອງສູນກາງພັກ. ເສີມຂະຫຍາຍຫຼັກການລວມສູນປະຊາທິປະໄຕ ໃນການນໍາພາຂອງພັກ, ຫຼັກການລວມສູນເອກະພາບໃນການຄຸ້ມຄອງລັດໃຫ້ສອດຄ່ອງກັບເງື່ອນໄຂໃໝ່.

ຕະຫຼອດໄລຍະຜ່ານມາ ຄະນະບໍລິຫານງານພັກເມືອງຫີນເຫີບ ກໍ່ໄດ້ເອົາໃຈໃສ່ນໍາພາ-ຊີ້ນໍາເຄື່ອນໄຫວຈັດຕັ້ງປະຕິບັດຕາມມະຕິກອງປະຊຸມໃຫຍ່, ແຜນພັດທະນາເສດຖະກິດຂອງເມືອງ ເປັນຕົ້ນແມ່ນໄດ້ປັບປຸງແບບແຜນວິທີເຮັດວຽກ ຂອງຄະນະພັກເມືອງ, ມີການປະສານສົມທົບລະຫວ່າງຄະນະພັກ ກັບອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມອື່ນໆ. ເປັນເຈົ້າການໃນການປັບປຸງຕົນເອງ ແລະ ຍົກສູງບົດບາດການນໍາພາ-ຊີ້ນໍາ, ສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກໄດ້ຮັບຮູ້ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມູນເຊື້ອອັນດີງາມຂອງພັກ, ຂອງຊາດ, ເອົາໃຈໃສ່ປະຕິບັດລະບອບດໍາເນີນຊີວິດການເມືອງ, ປະຕິບັດລະບອບລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ນໍາພາເປັນໝູ່ຄະນະ, ແບ່ງວຽກໃຫ້ບຸກຄົນຮັບຜິດຊອບ, ຖືເອົາຫຼັກການຕໍານິຕິຊົມຕົນເອງ, ຕໍານິຕິຊົມເຊິ່ງກັນ ແລະ ກັນ ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງພັກ, ຕິດຕາມ, ກວດກາຕີລາຄາປະເມີນຄຸນນະພາບຂອງໜ່ວຍພັກ, ສະມາຊິກພັກໃນແຕ່ລະໄລຍະ, ສະກັດກັ້ນຕ້ານ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ.

ຜ່ານການຕິດຕາມ, ກວດກາ ເຮັດໃຫ້ຮາກຖານພັກມີການເຕີບໃຫຍ່ເຂັ້ມແຂງທາງດ້ານປະລິມານ ແລະ ຄຸນນະພາບ, ທຸກໆບ້ານແມ່ນມີໜ່ວຍພັກນໍາພາ. ທົ່ວເມືອງມີສະມາຊິກພັກທັງໝົດ 1.513 ສະຫາຍ, ຍິງ 359 ສະຫາຍ, ມີ 8 ຄະນະພັກຮາກຖານ. ໃນນີ້: ມີ 2 ຄະນະພັກຮາກຖານກອງບັນຊາການ, 5 ຄະນະພັກຮາກຖານກຸ້ມບ້ານ ແລະ 1 ຄະນະພັກຮາກຖານບ້ານໃຫຍ່, ມີໜ່ວຍພັກທັງໝົດ 115 ໜ່ວຍພັກ, ໜ່ວຍພັກສໍານັກງານ-ກົມກອງ 33 ໜ່ວຍພັກ, ໜ່ວຍພັກໂຮງຮຽນ-ໂຮງໝໍ 37 ໜ່ວຍພັກ, ໜ່ວຍພັກວິສາຫະກິດ 1 ໜ່ວຍພັກ, ໜ່ວຍພັກບ້ານ 44 ໜ່ວຍພັກ ແລະ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ 56 ໜ່ວຍພັກ[3].

ໄດ້ເອົາໃຈໃສ່ວຽກງານປ້ອງກັນພັກ, ວຽກງານນະໂຍບາຍ ແລະ ຄຸ້ມຄອງສະມາຊິກພັກ, ຄຸ້ມຄອງການເງິນຂອງພັກທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃຫ້ມີຄວາມໂປ່ງໃສຍຸຕິທໍາ, ນໍາພາ-ຊີ້ນໍາອົງການລັດ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ. ເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ເອົາໃຈໃສ່ກໍ່ສ້າງ-ບໍາລຸງພະນັກງານ 3 ຮຸ່ນ, ພະນັກງານເພດ, ເຜົ່າ, ຖືສໍາຄັນການສ້າງພະນັກງານກັບທີ່, ກໍ່ສ້າງໃນຂະບວນວຽກງານຕົວຈິງຢູ່ຮາກຖານບ້ານ, ການຝຶກອົບຮົມໄລຍະສັ້ນ, ສົ່ງໄປຍົກລະດັບຢູ່ພາຍໃນ ແລະ ຕ່າງປະເທດ, ສ້າງພະນັກງານສືບທອດປ່ຽນແທນໃຫ້ມີຄວາມຮູ້-ຄວາມສາມາດທາງດ້ານວິຊາການ ແລະ ສ້າງເປັນຊ່ຽວຊານສະເພາະດ້ານ. ປະຈຸບັນທົ່ວເມືອງມີພະນັກງານທັງໝົດ 677 ຄົນ, ຍິງ 261 ຄົນ.

ໄປພ້ອມກັນນັ້ນ, ຄະນະພັກແຕ່ລະຂັ້ນຍັງໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ປຸກລະດົມຂົນຂວາຍໃຫ້ປະຊົນບັນດາເຜົ່າເຂົ້າຮ່ວມໃນການ

ພັດທະນາຕົນເອງ, ພັດທະນາຄອບຄົວ ແລະ ພັດທະນາບ້ານຂອງຕົນຢ່າງຕັ້ງໜ້າ ໂດຍຫັນລົງກໍ່ສ້າງຮາກຖານການເມືອງ, ພັດທະນາຊຸມນະບົດຮອບດ້ານຕິດພັນກັບວຽກງານ 3 ສ້າງໃຫ້ເຂົ້າສູ່ລວງເລິກ, ຜ່ານການຈັດຕັ້ງເຄື່ອນໄຫວຕົວຈິງ ມາຮອດປະຈຸບັນໄດ້ເຮັດໃຫ້ອັດຕາສ່ວນຄອບຄົວທຸກຍາກຢູ່ພາຍໃນເມືອງຫຼຸດລົງເທື່ອລະກ້າວ, ຖືເອົາການຜະລິດກະສິກໍາປູກຝັງ-ລ້ຽງສັດເປັນສິນຄ້າ ເພື່ອແນ່ໃສ່ຄໍ້າປະກັນທາງດ້ານສະບຽງອາຫານ, ອັນທີ່ພົ້ນເດັ່ນກວ່າໝູ່ແມ່ນປູກຢາງພາລາ, ໝາກເງາະ ແລະ ການລ້ຽງສັດໃຫຍ່ (ງົວ) ເປັນຕົ້ນ.

ຈາກຄວາມເອົາໃຈໃສ່ຢ່າງຕັ້ງໜ້າໃນການຍົກສູງບົດບາດການນໍາພາຂອງພັກ ເຫັນໄດ້ວ່າ ຄະນະພັກແຕ່ລະຂັ້ນຍັງຮັກສາໄດ້ຄວາມສາມັກຄີ ເປັນເອກະພາບພາຍໃນອົງການພັກ ເປັນແບບຢ່າງນໍາໜ້າ, ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະພັກຂັ້ນເທິງ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ແລະ ແນວທາງນະໂຍບາຍ, ກົດລະບຽບພັກ, ກົດໝາຍຂອງລັດ, ມະຕິ, ຄໍາສັ່ງ, ຂໍ້ກໍານົດຂອງຂັ້ນເທິງເຮັດໃຫ້ເມືອງຫີນເຫີບຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ເປັນລະບຽບຮຽບຮ້ອຍ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ວັດທະນະທໍາ-ສັງຄົມ ໄດ້ຮັບການພັດທະນາດີຂຶ້ນເລື້ອຍໆ.

ຄຽງຄູ່ກັບຜົນສໍາເລັດທີ່ກ່າວມານັ້ນ, ການຈັດຕັ້ງປະຕິບັດວຽກງານຮອບດ້ານ ຂອງຄະນະພັກເມືອງ ຍັງມີບາງດ້ານທີ່ຈະຕ້ອງໄດ້ເອົາໃຈໃສ່ເຊັ່ນ:

ການເຊື່ອມຊຶມນິຕິກໍາຕ່າງໆ ກ່ຽວກັບວຽກງານພັກ-ພະນັກງານ ເຖິງວ່າໄດ້ເຮັດຢ່າງຕໍ່ເນື່ອງ, ດ້ວຍຫຼາຍຮູບຫຼາຍວິທີການກໍ່ຕາມ ແຕ່ຜ່ານການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າຍັງມີບາງຄະນະພັກ, ໜ່ວຍພັກນັບທັງສະມາຊິກພັກ-ພະນັກງານ ຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງເຖິງຖອງ ແລະ ບໍ່ທັນເປັນເອກະພາບກັນໃນການຈັດຕັ້ງປະຕິບັດ. ການຫັນເອົາແນວທາງນະໂຍບາຍຂອງພັກມາເປັນແຜນການ, ແຜນງານອັນລະອຽດ ແລະ ນໍາພາຈັດຕັ້ງປະຕິບັດຕົວຈິງຢູ່ບາງໜ່ວຍພັກຍັງບໍ່ທັນແທດຕົວຈິງ; ສະຕິຕື່ນຕົວ, ຄວາມກະຕືລືລົ້ນ, ຄວາມເປັນເຈົ້າການປະດິດສ້າງ, ທັດສະນະກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ແລະ ຄວາມເປັນແບບຢ່າງນໍາໜ້າຂອງພະນັກງານ, ສະມາຊິກພັກຈໍານວນໜຶ່ງຍັງບໍ່ທັນສູງ, ການບຸກທະລຸທາງດ້ານຈິນຕະນາການຍັງບໍ່ທັນບັນລຸໄດ້; ການປະຕິບັດລະບຽບວິໄນຂອງພັກຍັງບໍ່ທັນເຂັ້ມງວດ, ຂອດການປະສານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຍັງບໍ່ທັນກົມກຽວກັນ, ການແບ່ງຂັ້ນຄຸ້ມຄອງຍັງບໍ່ທັນຈະແຈ້ງ, ລະບົບການຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານຍັງບໍ່ຕໍ່ເນື່ອງ; ການເສີມຂະຫຍາຍປະຊາທິປະໄຕພາຍໃນພັກກບໍ່ທັນກວ້າງຂວາງ, ແບບແຜນວິທີນໍາພາ ແລະ ແບບແຜນວິທີເຮັດວຽກຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ການນໍາພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບບາງອັນຍັງບໍ່ທັນຈະແຈ້ງ ແລະ ສອດຄ່ອງ,

ເພື່ອຍົກສູງບົດບາດການນໍາພາຂອງຄະນະພັກແຕ່ລະຂັ້ນຂອງເມືອງຫີນເຫີບໃຫ້ສູງຂຶ້ນ ສາມາດເຮັດລ້ອນໜ້າທີ່ທີ່ປະເທດຊາດ ແລະ ປະຊາຊົນມອບໝາຍໃຫ້ຢ່າງມີຜົນສໍາເລັດຕາມຄາດໝາຍທີ່ກໍານົດໄວ້ ຄວນເອົາໃຈໃສ່ບາງບັນຫາດັ່ງນີ້:

ໜຶ່ງ; ຄະນະພັກແຕ່ລະຂັ້ນເປັນເຈົ້າການກໍາແໜ້ນແນວທາງ, ແຜນນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ຢ່າງເລິກເຊິ່ງຕິດພັນກັບພາລະບົດບາດ, ສິດ, ໜ້າທີ່ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ, ເອົາໃຈໃສ່ນໍາພາ-ຊີ້ນໍາວຽກງານຮອບດ້ານ, ຫັນເອົາແນວທາງ, ແຜນນະໂຍບາຍຂອງພັກ, ບັນດາມະຕິ, ຄໍາສັ່ງ ໃນແຕ່ລະໄລຍະມາເປັນແຜນການ, ແຜນງານ, ໂຄງການຢ່າງລະອຽດ ເພື່ອຮັບປະກັນປະສິດທິຜົນໃນການຈັດຕັ້ງປະຕິບັດຕົວຈິງໃຫ້ສອດຄ່ອງ.

ສອງ; ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານ ແລະ ປະຊາຊົນບັນດາເຜົ່າໃນທົ່ວເມືອງ ໃຫ້ມີຄຸນທາດການເມືອງ, ມີຄຸນ

ສົມບັດສິນທຳປະຕິວັດ, ມີຄວາມເປັນເອກະພາບສູງ ກັບແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ ວາງອອກ. ຍົກສູງສະຕິຕໍ່ການຈັດຕັ້ງ, ປະຕິບັດລະບຽບວິໄນຂອງພັກ, ສະຕິປ້ອງກັນພັກ ແລະ ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກບົນຈິດໃຈຍຶດໝັ້ນຫຼັກການນຳພາຂອງພັກ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ.

ສາມ; ຄະນະພັກແຕ່ລະຂັ້ນ ຄວນເອົາໃຈໃສ່ນຳພາ-ຊີ້ນຳ ວຽກງານຄຸ້ມຄອງປ້ອງກັນພັກ ແລະ ສ້າງໃຫ້ພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ, ແບບແຜນວິທີນຳພາ, ບົນພື້ນຖານປະຕິບັດລະບອບດຳເນີນຊີວິດພັກໃຫ້ເປັນປົກກະຕິ, ປະຕິບັດລະບອບຕິຊົມຕົນເອງ ແລະ ຕິຊົມກັນບົນຈິດໃຈ ເພື່ອນສະຫາຍຮ່ວມອຸດົມການດຽວກັນ ເພື່ອພ້ອມກັນກ້າວໜ້າ.

ສີ່; ເອົາໃຈໃສ່ນຳພາ-ຊີ້ນຳຢ່າງໃກ້ຊິດ ແລະ ພົວພັນປະສານສົມທົບແໜ້ນກັບເລຂາພັກບ້ານ-ນາຍບ້ານ ແລະ ອົງການຈັດຕັ້ງຕ່າງໆທັງເປັນເຈົ້າການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງບ້ານ ໃນແຕ່ລະໄລຍະ. ກຳນົດຄວາມຮັບຜິດຊອບຂອງຂະແໜງການຢ່າງລະອຽດ ແລະ ນຳພາປັບປຸງອົງການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ, ເຄົາລົບ ແລະ ປະຕິບັດລະບຽບກົດໝາຍ ໃຫ້ມີຄວາມສັກສິດ, ປັບປຸງການບໍລິການຮັບໃຊ້ປະຊາຊົນໃຫ້ດີ, ສັບຊ້ອນຈັດວາງພະນັກງານໃຫ້ແທດເໝາະກັບໜ້າທີ່ວຽກງານ ແລະ ວິຊາສະເພາະທີ່ຮຽນມາ ເພື່ອເຮັດໃຫ້ວຽກງານມີປະສິດທິຜົນສູງຂຶ້ນກວ່າເກົ່າ.

ຫ້າ; ຄະນະບໍລິຫານງານພັກເມືອງ ຕ້ອງຍົກສູງວຽກງານກວດກາ ແມ່ນການປະກອບສ່ວນໜຶ່ງທີ່ສຳຄັນ ໃນການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ "ບໍ່ມີການກວດກາກໍ່ໝາຍເຖິງບໍ່ມີການນຳພາຂອງພັກ" ຕ້ອງໄດ້ກວດກາ ແລະ ການສະຫຼຸບຖອດຖອນບົດຮຽນກ່ຽວກັບການເຄື່ອນໄຫວຂອງຄະນະພັກ, ສະມາຊິກພັກໃຫ້ເປັນປົກກະຕິ, ຖືກຕ້ອງ ແລະ ທັນການ; ຕ້ອງກວດກາຮອບດ້ານສອດຫ້ອຍເຂົ້າໃນທຸກຂົງເຂດຂອງຊີວິດສັງຄົມ ເວົ້າສະເພາະ ແມ່ນການກວດຄົນ, ກວດວຽກ, ກວດການຈັດຕັ້ງປະຕິບັດແນວທາງນະໂຍບາຍ ແລະ ມະຕິຕ່າງໆຂອງພັກທີ່ວາງອອກນັ້ນ, ໄດ້ຮັບການຈັດຕັ້ງປະຕິບັດແນວໃດ?, ຜົນໄດ້ຮັບ, ຄວາມຫຍຸ້ງຍາກ, ຂໍ້ຂາດຕົກບົກຜ່ອງ ມີແນວໃດ?, ມີຄວາມຈຳເປັນຕ້ອງໄດ້ແກ້ໄຂອັນໃດແດ່? ເພື່ອແນໃສ່ເສີມຂະຫຍາຍບົດບາດຂອງຄະນະພັກ ໃນການຊີ້ນຳໆພາການເຄື່ອນໄຫວວຽກງານ ໃຫ້ມີປະສິດທິຜົນສູງຂຶ້ນເລື້ອຍໆ.

ສັງລວມແລ້ວ, ການຍົກສູງບົດບາດການນຳພາຂອງຄະນະພັກ ແມ່ນມີຄວາມຈຳເປັນຮີບດ່ວນ, ແມ່ນບັນຫາກົກເຄົ້າ ທີ່ຕັດສິນຜົນສຳເລັດ ຫຼື ການປະລາໄຊຂອງທຸກວຽກງານ. ຕະຫຼອດໄລຍະຜ່ານມາ ບໍ່ວ່າໄລຍະປົກປັກຮັກສາກໍ່ຄືໄລຍະພັດທະນາສ້າງສາປະເທດຊາດ ພັກເຮົາໄດ້ຢັ້ງຢືນສະເໝີວ່າ: ການຍົກສູງບົດບາດຂອງຄະນະພັກ ແມ່ນວຽກຍຸດທະສາດຍາວນານ ຂອງການປະຕິວັດ, ມີຄວາມໝາຍຕັດສິນເຖິງຜົນໄດ້ຜົນເສຍ ຂອງການປະຕິບັດແນວທາງ, ແຜນນະໂຍບາຍຂອງພັກໃນໄລຍະໃໝ່, ເປັນຂໍກຸນແຈໄຂຊ່ອງທາງ ເຮັດໃຫ້ພາລະກິດປ່ຽນແປງໃໝ່ຂອງພັກບັນລຸຜົນສຳເລັດ ຕາມທິດທາງໜ້າທີ່ ທີ່ພັກເຮົາກຳນົດໄວ້. ບົນພື້ນຖານຜົນສຳເລັດອັນໃຫຍ່ຫຼວງນີ້ ສະນັ້ນ, ຄະນະພັກແຕ່ລະຂັ້ນ, ສະມາຊິກພັກແຕ່ລະສະຫາຍ ຕ້ອງໄດ້ອອກແຮງເສີມຂະຫຍາຍບົດບາດຂອງຕົນໃຫ້ສູງຂຶ້ນ ເພື່ອເຮັດສຳເລັດໜ້າທີ່ການເມືອງ ທີ່ພັກ ແລະ ລັດມອບໝາຍໃຫ້ໆ

ເອກະສານອ້າງອີງ: (1) ກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI, ປີ 2021, ໜ້າ 3.
(2) ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 90
(3) ບົດສະຫຼຸບຂອງຄະນະຈັດຕັ້ງເມືອງຫີນເຫີບ ເລກທີ 18/ຄຈມ.ຫຫ,ລົງວັນທີ 17ມັງກອນ 2024, ໜ້າ 2.

ການພັດທະນາ ອຸດສາຫະກຳປຸງແຕ່ງ ຢູ່ປະເທດເຮົາ

ໂດຍ: ພັນຕາວັນ ຫຼ້າຄຳສາຍ

ນັບຕັ້ງແຕ່ພັກປະຊາຊົນ ປະຕິວັດລາວໄດ້ສ້າງຕັ້ງຂຶ້ນ ພັກໄດ້ຍຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການ, ຈຸດປະສົງຕົ້ນຕໍຂອງແນວທາງປ່ຽນແປງໃໝ່ຂອງພັກເຮົາແມ່ນແນ່ໃສ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ. ສະນັ້ນ, ພັກ-ລັດຖະບານ ບໍ່ວ່າເວລາໃດ ກໍຖືເອົາການຜະລິດກະສິກຳ ໄປຄຽງຄູ່ກັບການຜະລິດອຸດສາຫະກຳ, ການຜະລິດສອງດ້ານນີ້ ຈະກາຍເປັນເສົາຄ້ຳອັນແໜ້ນແກ່ນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ. ການຜະລິດອຸດສາຫະກຳ ແລະ ການຜະລິດກະສິກຳ ແມ່ນສອງດ້ານຂອງການພັດທະນາ ເຮັດໃຫ້ປະເທດຊາດຍືນຍົງຄົງຕົວ ແລະ ຂະຫຍາຍຕົວໄປຢ່າງບໍ່ຢຸດຢັ້ງ, ປຽບເໝືອນຄົນຜູ້ໜຶ່ງປະກອບໄປດ້ວຍຂາຊ້າຍ ແລະ ຂາຂວາ ເວລາຂາຊ້າຍຍົກຂຶ້ນ ຂາຂວາກໍ່ຈະຢັນ, ເວລາຍົກຂາຂວາຂຶ້ນ ຂາຊ້າຍກໍ່ຈະຢັນ ເຮັດໃຫ້ຖ່ວງທ່າການກ້າວເດີນຂອງຄົນໄປເຖິງຈຸດທີ່ໝາຍໄດ້, ການຜະລິດກະສິກຳ ແລະ ການຜະລິດອຸດສາຫະກຳ ແມ່ນສອງດ້ານ ຂັບເຄື່ອນເສດຖະກິດ, ວັດທະນະທຳ, ສັງຄົມຂອງປະເທດຊາດໄປສູ່ຈຸດທີ່ໝາຍໄດ້ຢ່າງມີໄຊ. ການຜະລິດສອງດ້ານດັ່ງກ່າວ ມີການພົວພັນເຊິ່ງກັນ ແລະ ກັນແບບກາຍອິນຊີ, ບໍ່ສາມາດຈະຕັດແຍກອອກຈາກກັນໄດ້, ທັງສອງດ້ານນີ້ກະຕຸກຊຸກຍູ້ເຊິ່ງກັນ ແລະ ກັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ພ້ອມກັນກ້າວເດີນໄປທາງໜ້າ ດ້ວຍບາດກ້າວອັນໜັກແໜ້ນ. ຍ້ອນສອງດ້ານນີ້ມີບົດບາດເປັນເສົາຄ້ຳແຫ່ງເສດຖະກິດແຫ່ງຊາດ ມັນຈຶ່ງຮຽກຮ້ອງໃຫ້ລັດຖະບານຕ້ອງໄດ້ຄົ້ນຄວ້າວາງແຜນການຊຸກຍູ້ສົ່ງເສີມໃຫ້ຂະຫຍາຍຕົວໄປຄຽງຄູ່ກັນ ໂດຍບໍ່ຕ້ອງຖືເບົາດ້ານໃດດ້ານໜຶ່ງ.

ການຜະລິດອຸດສາຫະກຳ ແມ່ນການຜະລິດທີ່ນຳໃຊ້ເຄື່ອງມືທັນສະໄໝ, ນຳໃຊ້ວິທະຍາສາດເຕັກໂນໂລຊີສູງ, ສາມາດເອົາວັດຖຸດິບມາແປຮູບເປັນອາຫານ, ເປັນເຄື່ອງດື່ມ, ເປັນວັດຖຸໃຊ້ສອຍ, ເປັນເຄື່ອງອຸປະໂພກ-ບໍລິໂພກ ຕາມຄວາມຕ້ອງການຂອງຄົນຢູ່ໃນສັງຄົມ ເພື່ອໃຫ້ກະທັດຮັດ, ຮັດກຸມກວ່າ ສິ່ງທີ່ເວົ້າມາເທິງນັ້ນ ເພິ່ນຈຶ່ງເອີ້ນວ່າການຜະລິດອຸດສາຫະກຳປຸງແຕ່ງ; ການພັດທະນາອຸດສາຫະກຳປຸງແຕ່ງ ແມ່ນການຂະຫຍາຍການຜະລິດອຸດສາຫະກຳປຸງແຕ່ງ, ທັງແມ່ນການເພີ່ມສະມັດຕະພາບຂອງການຜະລິດອຸດສະຫະກຳປຸງແຕ່ງໃຫ້ເກີດມີຜະລິດຕະພັນທີ່ຫຼາກຫຼາຍ, ມີຫຼາຍສີສັນທີ່ຈັບງາມ, ມີຄຸນນະພາບດີ, ຕອບສະໜອງໄດ້ຄວາມຕ້ອງການຂອງຄົນຢູ່ໃນສັງຄົມ; ການພັດທະນາອຸດສາຫະກຳປຸງແຕ່ງມີບົດບາດເພີ່ມລາຍໄດ້ໃຫ້ແກ່ພົນລະເມືອງ, ແກ້ໄຂຊີວິດການເປັນຢູ່ໃຫ້ປະຊາຊົນດີຂຶ້ນ, ອີກບັນຫາໜຶ່ງທີ່ສຳຄັນ ການພັດທະນາອຸດສາຫະກຳປຸງແຕ່ງຍັງມີບົດບາດສ້າງພື້ນຖານໃຫ້ແກ່ອຸດສາຫະກຳໃຫຍ່, ທັນສະໄໝ, ໃນເມື່ອອຸດສາຫະກຳປຸງແຕ່ງຂະຫຍາຍຕົວເຖິງລະດັບຂອງມັນແລ້ວ, ອຸດສາຫະກຳໜັກ, ການຜະລິດພາຫະນະກົນຈັກທີ່ທັນສະໄໝກໍ່ຈະເກີດຂຶ້ນ ເຮັດໃຫ້ບັນດາຂະແໜງການເສດຖະກິດຂອງຊາດຈະກາຍເປັນລະບົບຄົບຊຸດ, ເປັນຕ່ອງໂສ້ທີ່ແກ່ດຶງເອົາປະເທດຊາດໃຫ້ພົ້ນຈາກຄວາມດ້ອຍພັດທະນາມາເປັນປະເທດອຸດສາຫະກຳທັນສະໄໝ; ການພັດທະນາອຸດສາຫະກຳປຸງແຕ່ງ ຍັງມີຄວາມສຳຄັນຕໍ່ບັນດາຂະແໜງການເສດຖະກິດ, ຊຸກຍູ້ໃຫ້ການ

ຜະລິດກະສິກຳມີການພັດທະນາກ້າວຂຶ້ນ, ທັງເປັນການຊຸກຍູ້ການບໍລິການແຈກຢາຍຈໍລະຈອນສິນຄ້າ, ການນຳເຂົ້າ ແລະ ສົ່ງອອກສິນຄ້າກໍ່ຈະດຳເນີນໄປຢ່າງມີປະຊາທິປະໄຕ, ຈະຊຸກຍູ້ສົ່ງເສີມຜູ້ປະກອບການເສດຖະກິດ, ບັນດາຫົວໜ່ວຍທຸລະກິດກໍ່ຈະນຳໃຊ້ສະຕິປັນຍາຂອງຕົນ ເພື່ອຄົ້ນຄວ້າຊອກຫາອັນໃໝ່, ອັນທັນສະໄໝໄປເລື້ອຍໆ, ປັບປຸງຂອດບໍລິການຕາມສັນຍາລະຫວ່າງຜູ້ຊື້ກັບຜູ້ຂາຍໃຫ້ສອດຄ່ອງ. ອີກບັນຫາໜຶ່ງທີ່ສຳຄັນການພັດທະນາອຸດສາຫະກຳປຸງແຕ່ງຍັງມີຄວາມສຳຄັນຕໍ່ການສ້າງພື້ນຖານຄັງແຮຂອງລັດໃຫ້ອຸດົມສົມບູນ, ສາມາດສະສົມທຶນຕອບສະໜອງໂຄງການພັດທະນາຕ່າງໆຂອງລັດ, ລັດຈະມີຄັງແຮໄວ້ເພື່ອຂະຫຍາຍການຜະລິດສຳເປີດກວ້າງ.

ດ້ວຍທີ່ຕັ້ງບົດບາດ ແລະ ຄວາມສຳຄັນ ຂອງການພັດທະນາອຸດສາຫະກຳປຸງແຕ່ງ ພັກເຮົາໄດ້ເອົາໃຈໃສ່ນຳພາ-ຊີ້ນຳການເຄື່ອນໄຫວວຽກງານອຸດສາຫະກຳປຸງແຕ່ງຢ່າງສະເໝີຕົ້ນສະເໝີປາຍ ເຊິ່ງສະແດງອອກ: ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ໃຫ້ທັດສະນະວ່າ: ດຳເນີນການຈັດສັນເຂດຜະລິດ-ປຸງແຕ່ງກະສິກຳ ສຳລັບການສົ່ງອອກໃຫ້ເປັນຮູບປະທຳ ໂດຍຄຳນຶງເຖິງຄວາມອາດສາມາດ ດ້ານພື້ນທີ່ຜະລິດຕົວຈິງ ແລະ ຄວາມສາມາດທີ່ເຂົ້າເຖິງຕະຫຼາດທີ່ໝັ້ນຄົງ[1] ກ່ອນອື່ນໝົດ ລັດໄດ້ສ້າງເງື່ອນໄຂທຸກຢ່າງ, ມີກົນໄກການເຄື່ອນໄຫວຢ່າງສອດຄ່ອງກັບເງື່ອນໄຂຄວາມເປັນຈິງຂອງປະເທດຊາດໃນແຕ່ລະໄລຍະເປັນຕົ້ນແມ່ນ: **ໜຶ່ງ,** ຊຸກຍູ້ຊາວຜູ້ອອກແຮງງານ ລວມທັງປະຊາຊົນທຸກທົ່ວໜ້າ ໃຫ້ເຄື່ອນໄຫວດຳເນີນການຜະລິດກະສິກຳ ເພື່ອມີຜະລິດຕະພັນຕອບສະໜອງໃຫ້ບັນດາໂຮງຈັກໂຮງງານ; **ສອງ,** ລັດໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມ ໃຫ້ຜູ້ປະກອບການເສດຖະກິດ ເຂົ້າເຖິງແຫຼ່ງທຶນຂະຫຍາຍທຸລະກິດ, ກູ້ຢືມທຶນເຂົ້າໃສ່ການດຳເນີນການຜະລິດທຸລະກິດ; **ສາມ,** ລັດໄດ້ສ້າງເງື່ອນໄຂໃຫ້ຫົວໜ່ວຍທຸລະກິດຜູ້ປະກອບການເສດຖະກິດ ມີຄວາມສາມາດນຳເອົາອຸປະກອນກົນຈັກ, ເຄື່ອງມືຮັບໃຊ້ການຜະລິດຕ່າງໆ ເຂົ້າມາຕິດຕັ້ງໂຮງງານການຜະລິດ, ພ້ອມດ້ວຍວັດຖຸດິບທີ່ຈຳເປັນມາຜະລິດ; **ສີ່,** ໄດ້ເປີດກວ້າງຕະຫຼາດຢູ່ພາຍໃນ ແລະ ຕ່າງປະເທດ; **ຫ້າ,** ໃນຊຸມປີຜ່ານມາລັດຖະບານແຫ່ງ ສປປ ລາວ ໄດ້ຖືສຳຄັນການປັບປຸງຄ່າຈ້າງແຮງງານຂັ້ນຕ່ຳໃຫ້ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ເພື່ອເປັນການຊຸກຍູ້ສົ່ງເສີມການພັດທະນາອຸດສາຫະກຳປຸງແຕ່ງ ລັດກໍ່ຍັງໄດ້ອອກນິຕິກຳຕ່າງໆເຊັ່ນ: ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບ ເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013; ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016; ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022; ກົດໝາຍວ່າດ້ວຍມາດຕະຖານ, ເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014 ແລະ ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ສະບັບ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016. ນອກນັ້ນ ລັດຖະບານຍັງໄດ້ວາງນະໂຍບາຍອຸດສາຫະກຳສີຂຽວ ເຊິ່ງນະໂຍບາຍດັ່ງກ່າວນີ້ ແມ່ນໃສ່ການພັດທະນາບັນດາອົງປະກອບທີ່ສຳຄັນຂອງການຜະລິດ ເຊິ່ງຈະສົ່ງເສີມໃຫ້ບັນດາຜູ້ປະກອບການໃຫ້ມີການຫັນປ່ຽນຕາມທິດສີຂຽວ ແລະ ຍືນຍົງ ເປັນຕົ້ນຕໍ່ອງໂສ້ການສະໜອງ,ແຫຼ່ງວັດຖຸດິບ, ແຫຼ່ງພະລັງງານ, ການຄຸ້ມຄອງສິ່ງເສດເຫຼືອເຫຼົ່ານີ້ເປັນຕົ້ນ.

ຕະຫຼອດໄລຍະຜ່ານມາ ພັກ-ລັດເຮົາໄດ້ສຸມໃສ່ການຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກຳປຸງແຕ່ງ ໄດ້ເຮັດໃຫ້ໂຄງປະກອບທາງດ້ານເສດຖະກິດ-ສັງຄົມ ຂອງ ສປປ ລາວ ມີຄວາມກ້າວໜ້າທັນສະໄໝ ຜະລິດຕະພັນໃໝ່ຂອງອຸດສາຫະກຳປຸງແຕ່ງໄດ້ເກີດຂຶ້ນຫຼາຍພໍສົມຄວນ ເຊັ່ນ: ອາຫານ ແລະ ເຄື່ອງດື່ມ ໄດ້ຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດມີຫຼາຍຊະນິດ, ອຸປະກອນເຄື່ອງໃຊ້ໃນຄົວເຮືອນກໍ່ສາມາດຜະລິດໄດ້ຢູ່ພາຍໃນນັບມື້ນັບເພີ່ມຂຶ້ນ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພົນລະເມືອງລາວ ເຊິ່ງປະຈຸບັນ "ໂຮງງານອຸດສາຫະກຳປຸງແຕ່ງ ໃນຂອບເຂດທົ່ວປະເທດ ມີທັງໝົດ 8.964 ແຫ່ງ ເທົ່າກັບ 30,81%

ແບ່ງອອກເປັນໂຮງງານອຸດສາຫະກຳປຸງແຕ່ງຂະໜາດໃຫຍ່ ຈຳນວນ 694 ແຫ່ງ ກວມ 2,69%, ຂະໜາດກາງ ຈຳນວນ 1.037 ແຫ່ງ ກວມ 4,02% ແລະ ຂະໜາດນ້ອຍ ຈຳນວນ 7.233 ແຫ່ງ ກວມ 28,1%. ນອກຈາກນັ້ນ, ຍັງມີຫົວໜ່ວຍອຸດສາຫະກຳປຸງແຕ່ງຂະໜາດນ້ອຍແບບຄອບຄົວ 16.744 ແຫ່ງ ກວມ 65,17%. ຜ່ານການຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກຳປຸງແຕ່ງ ເຊິ່ງເຫັນວ່າໂຮງງານອຸດສາຫະກຳປຸງແຕ່ງຂະຫຍາຍຕົວ ສະເລ່ຍ 4,70%, ໃນນີ້ໂຮງງານຂະໜາດໃຫຍ່ ຂະຫຍາຍຕົວສະເລ່ຍ 0,73%, ຂະໜາດກາງຂະຫຍາຍຕົວສະເລ່ຍ 0,58% ແລະ ຂະໜາດນ້ອຍຂະຫຍາຍຕົວສະເລ່ຍ 3,39%, ໂຮງງານອຸດສາຫະກຳປຸງແຕ່ງທີ່ເກີດຂຶ້ນໃໝ່ ແລະ ຂະຫຍາຍຕົວ ປະກອບມີ: ໂຮງງານອຸດສາຫະກຳເຄມີ (ໂຮງງານຜະລິດປຸ໋ຍກາລີ, ໂຮງງານຜະລິດໂບູມມິນ, ໂຮງງານຜະລິດໂສດາໄຟ...), ໂຮງງານກັ່ນ ນ້ຳມັນ, ໂຮງງານຜະລິດແປ້ງມັນຕົ້ນ, ໂຮງງານຜະລິດຫົວອາຫານສັດ, ໂຮງງານຜະລິດຊິລິຄອນ, ໂຮງງານຜະລິດທໍ່ຢາງ, ໂຮງງານຜະລິດຕາໜ່າງເຫຼັກ-ຢາງ ແລະ ອື່ນໆ[3]. ຈາກການຂະຫຍາຍຕົວຂອງອຸດສາຫະກຳປຸງແຕ່ງ ສາມາດຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ ໄດ້ຈຳນວນຫຼວງຫຼາຍ ເຊິ່ງສະແດງໃຫ້ເຫັນມູນຄ່າການຜະລິດອຸດສາຫະກຳປຸງແຕ່ງໄລຍະກາງສະໄໝ ສາມາດປະຕິບັດໄດ້ 32.067,23 ຕື້ກີບ ເທົ່າກັບ 38,60% ຂອງແຜນການ (83.079,83 ຕື້ກີບ), ເມື່ອທຽບໃສ່ໄລຍະດຽວກັນ ເພີ່ມຂຶ້ນສະເລ່ຍ 19,29%; ໃນນັ້ນ, ອັດຕາສ່ວນຂອງໂຄງປະກອບລວມຍອດມູນຄ່າການຜະລິດອຸດສາຫະກຳປຸງແຕ່ງທີ່ສຳຄັນ ປະກອບມີ: ການຜະລິດສະບຽງອາຫານກວມເອົາ 24,01% (ຊາ, ກາເຟ, ເຂົ້າໜົມ, ເຂົ້າຈີ່ສຳເລັດຮູບ, ເສັ້ນໝີ່ສຳເລັດຮູບ, ເຂົ້າປຸ້ນ, ເສັ້ນເຝີ, ອາຫານກະປ໋ອງ, ໝາກໄມ້ອົບແຫ້ງ, ນ້ຳຊອດ, ລູກຊີ້ນ ແລະອື່ນໆ); ການຜະລິດເຄື່ອງດື່ມ 16,75% (ນ້ຳຫວານອັດລົມ, ເບຍ, ເຫຼົ້າ ແລະ ອື່ນໆ); ການຜະລິດເຄື່ອງນຸ່ງຫົ່ມ 12,21%; ການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ 9,43% (ເຫຍື່ອເຈ້ຍ, ປະເພດເຈ້ຍແຂງ, ເຈ້ຍແກັດ ແລະ ອື່ນໆ); ການຜະລິດເຄື່ອງໃຊ້ໄຟຟ້າ ແລະ ເຄື່ອງເອເລັກໂຕຼນິກ (ຊິ້ນສ່ວນກ້ອງຖ່າຍຮູບ, ໝໍ້ຫຸງເຂົ້າ, ພັດລົມ, ສາຍໄຟຟ້າ ແລະ ອື່ນໆ) 6,24%; ການຜະລິດແຮ່ທາດອື່ນໆ ທີ່ບໍ່ແມ່ນໂລຫະ (ຊີມັງ, ດິນຈີ່, ດິນບັອກ ແລະ ອື່ນໆ) 5,76%; ການຜະລິດຢາງ ແລະ ຜະລິດຕະພັນຢາງປລາສຕິກ (ເຄື່ອງເຟີນີເຈີຢາງ, ຖົງຢາງ, ທໍ່ຢາງ ເປັນຕົ້ນ) 4,21%[2].

ໄປຄຽງຄູ່ກັບການຂະຫຍາຍຕົວຂອງອຸດສາຫະກຳປຸງແຕ່ງ ກໍ່ຍັງມີຂໍ້ຈຳກັດບໍ່ໜ້ອຍ ທີ່ມີຄວາມຈຳເປັນຈະຕ້ອງໄດ້ພ້ອມກັນແກ້ໄຂບາງດ້ານ ມີດັ່ງນີ້:

ໜຶ່ງ, ເຖິງວ່າໂຮງງານອຸດສາຫະກຳປຸງແຕ່ງ ໄດ້ເພີ່ມຂຶ້ນເປັນຈຳນວນຫຼວງຫຼາຍ ແຕ່ສະມັດຕະພາບການຜະລິດຍັງຕ່ຳ, ຜະລິດຕະພັນທີ່ຜະລິດອອກ ຍັງບໍ່ຮັບປະກັນທາງດ້ານຄຸນນະພາບ, ບໍ່ທັນໄດ້ຮັບຄວາມນິຍົມຈາກຜູ້ຊົມໃຊ້, ການປັບປຸງຍົກລະດັບຂອງການຜະລິດອຸດສາຫະກຳປຸງແຕ່ງຍັງຊັກຊ້າ ບໍ່ທັນພັດທະນາໂຕເອງໃຫ້ທັນກັບຄວາມຕ້ອງການຂອງຜູ້ຊົມໃຊ້.

ສອງ, ການຍົກລະດັບສີມືແຮງງານຂອງກຳມະກອນຍັງບໍ່ທັນກວ້າງຂວາງທົ່ວເຖິງ, ຂະບວນການແຂ່ງຂັນການຜະລິດ, ຊອກຫາສິ່ງໃໝ່ຍັງມີໜ້ອຍ, ການຝຶກອົບຮົມສີມືແຮງງານໃຫ້ກຳມະກອນ ຍັງບໍ່ທົ່ວເຖິງ ແລະ ເຮັດຢ່າງສະໝ່ຳສະເໝີ.

ສາມ, ການລົງທຶນເຂົ້າໃສ່ໂຮງຈັກໂຮງງານ ເພື່ອຂະຫຍາຍພື້ນຖານການຜະລິດຍັງຈຳກັດ, ການສ້າງເງື່ອນໄຂໃຫ້ຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການເຂົ້າເຖິງແຫຼ່ງທຶນ ເພື່ອຂະຫຍາຍການຜະລິດ ຍັງຈຳກັດ, ມີບາງໂຮງຈັກໂຮງງານ ກູ້ຢືມທຶນເຂົ້າໃສ່ການຂະຫຍາຍການຜະລິດຍັງຊຳລະຄືນບໍ່ໄດ້ຕາມກຳນົດເວລາ ແລະ ຕາມສັນຍາທີ່ໄດ້ເຊັນໄວ້.

ສີ່, ການເຜີຍແຜ່ກົດໝາຍ ແລະ ລະບຽບການໃຫ້ພາກລັດ ແລະ ຜູ້ປະກອບການທີ່ກ່ຽວຂ້ອງຍັງບໍ່ທົ່ວເຖິງ, ຄວາມເຂົ້າໃຈຂອງເຈົ້າໜ້າທີ່ຍັງບໍ່ເລິກເຊິ່ງ ຈຶ່ງເຮັດໃຫ້ການຕິດຕາມກວດກາວຽກງານອຸດສາຫະກຳປຸງແຕ່ງ ບໍ່ໄປຕາມກົດໝາຍ ແລະ ລະບຽບການກຳນົດໄວ້.

ຫ້າ, ອຸດສາຫະກຳປຸງແຕ່ງ ເປັນວຽກທີ່ສະຫຼັບສັບຊ້ອນທາງດ້ານເຕັກນິກ ເຊິ່ງມີຄວາມຕ້ອງການດ້ານ

ວິຊາສະເພາະ ແລະ ບຸກຄະລາກອນທີ່ມີຄວາມຮູ້, ຊໍານານງານສະເພາະດ້ານ ແຕ່ໃນຕົວຈິງແລ້ວ ຂະແໜງການນີ້ແມ່ນມີຈໍາກັດຫຼາຍຕໍ່ບັນຫາດັ່ງກ່າວ ແລະ ລວມທັງແຮງງານໃນໂຮງງານຍັງມີໜ້ອຍ, ບໍ່ພຽງພໍກັບໜ້າວຽກຕົວຈິງ;

ຫົກ, ການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ, ການຄຸ້ມຄອງ ຍັງເຮັດບໍ່ໄດ້ຢ່າງທົ່ວເຖິງ ແລະ ເຂັ້ມງວດ;

ເຈັດ, ການປຸງແຕ່ງຜະລິດຕະພັນ ຈາກຊັບພະຍາກອນທໍາມະຊາດ ລວມທັງໄມ້ ແລະ ແຮ່ທາດໃຫ້ເປັນຜະລິດຕະພັນສໍາເລັດຮູບ ຍັງຢູ່ໃນຂອບເຂດຈໍາກັດ;

ເພື່ອເຮັດໃຫ້ຂະແໜງອຸດສາຫະກໍາປຸງແຕ່ງໄດ້ຮັບການພັດທະນາ, ຂະຫຍາຍຕົວ ແລະ ປະກອບສ່ວນຕໍ່ການພັດທະນາເສດຖະກິດ ແລະ ສັງຄົມຕາມທັດສະນະຂອງຜູ້ຂຽນ ເຫັນວ່າມີຄວາມຈໍາເປັນຕ້ອງໄດ້ຄົ້ນຄວ້າຊອກຫາວິທີການແກ້ໄຂ ແລະ ເອົາໃຈໃສ່ດັ່ງນີ້:

ໜຶ່ງ, ຕ້ອງໄດ້ເພີ່ມທະວີການຄົ້ນຄວ້າແນວທາງ, ນະໂຍບາຍສົ່ງເສີມອຸດສາຫະກໍາປຸງແຕ່ງຂອງພັກ ແລະ ລັດຖະບານຢ່າງເລິກເຊິ່ງ, ຄົ້ນຄວ້າບັນດານິຕິກໍາ, ກົນໄກ, ມາດຕະການກ່ຽວກັບການຈັດຕັ້ງ, ຊຸກຍູ້ສົ່ງເສີມ, ການຜະລິດອຸດສາຫະກໍາປຸງແຕ່ງ ຢູ່ແຕ່ລະຂົງເຂດໃຫ້ເປັນຂະບວນການຕໍ່ເນື່ອງ.

ສອງ, ຄົ້ນຄວ້າເງື່ອນໄຂໃນແຕ່ລະພາກພື້ນ, ໃນແຕ່ລະຂົງເຂດໃຫ້ສ້າງແຜນພັດທະນາອຸດສາຫະກໍາປຸງແຕ່ງ ໃຫ້ສອດຄ່ອງກັບຄວາມເປັນຈິງ ພາວະວິໄສ ຕາມທ່າແຮງບົ່ມຊ້ອນຂອງຕົນ ເຂົ້າໃນການພັດທະນາອຸດສາຫະກໍາປຸງແຕ່ງ ຕິດພັນກັບນະໂຍບາຍສົ່ງເສີມສິນຄ້າໂອດ໋ອບໜຶ່ງເມືອງໜຶ່ງຜະລິດຕະພັນໃຫ້ເກີດຂຶ້ນຢ່າງແນ່ນອນ.

ສາມ, ເອື້ອອໍານວຍຄວາມສະດວກ ໂດຍການອອກນະໂຍບາຍນໍາເຂົ້າພາຫະນະເຄື່ອງມື, ກົນຈັກຈາກຕ່າງປະເທດ ເພື່ອຕອບສະໜອງຄວາມຕ້ອງການຂອງບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການ ໃຫ້ສອດຄ່ອງ ເພື່ອມາດໍາເນີນການຜະລິດສິນຄ້າ.

ສີ່, ຍົກລະດັບທາງດ້ານວິຊາສະເພາະ ໃຫ້ພະນັກງານ, ກໍາມະກອນຢູ່ບັນດາໂຮງຈັກໂຮງງານ, ພ້ອມກັນນັ້ນກໍ່ຕ້ອງຈັດຕັ້ງຝຶກອົບຮົມ, ຈັດຕັ້ງການໄປທັດສະນະສຶກສາ ເພື່ອແລກປ່ຽນບົດຮຽນເຕັກນິກການຜະລິດ, ການຄຸ້ມຄອງ, ການຊອກຫາຕະຫຼາດ ແລະ ການແຈກຢາຍຜະລິດຕະພັນໃຫ້ທັນກັບຄວາມຮຽກຮ້ອງຕ້ອງການຂອງສະພາບເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ຫ້າ, ຄົ້ນຄວ້າແຫຼ່ງທຶນ ກຽມພ້ອມຕອບສະໜອງໃຫ້ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການຢ່າງມີແຜນການລະອຽດ ຫຼີກເວັ້ນຄໍາເວົ້າທີ່ວ່າ: ຢາກຂະຫຍາຍການຜະລິດ ແຕ່ບໍ່ມີທຶນ, ການຜະລິດກວ້າງຂວາງ ໃຫຍ່ໂຕຂຶ້ນເທົ່າໃດ ກໍ່ຕ້ອງການທຶນຮອນຢ່າງຫຼວງຫຼາຍຂຶ້ນເທົ່ານັ້ນ.

ສັງລວມແລ້ວ, ໃນຊຸມປີຜ່ານມາ ລັດຖະບານໄດ້ພະຍາຍາມ ແລະ ເອົາໃຈໃສ່ໃນການສົ່ງເສີມໃຫ້ຂະແໜງອຸດສາຫະກໍາປຸງແຕ່ງໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ການພັດທະນາອຸດສາຫະກໍາປຸງແຕ່ງ ແມ່ນການຍົກລະດັບການຜະລິດ ນໍາໃຊ້ວິທະຍາສາດ ເຕັກນິກເຂົ້າໃນການຜະລິດ, ຄຸ້ມຄອງ ແລະ ແຈກຢາຍຜະລິດຕະພັນ. ບັນດາວຽກງານເຫຼົ່ານີ້ລ້ວນແຕ່ແມ່ນວຽກງານໃໝ່ຂອງປະເທດເຮົາ, ການຍົກສູງຄວາມຮູ້ທາງດ້ານວິຊາສະເພາະ, ຂະແໜງການໃຫ້ແກ່ພົນລະເມືອງລາວ ແມ່ນວຽກງານກົກຂອງການພັດທະນາອຸດສາຫະກໍາປຸງແຕ່ງ, ຖ້າກໍາລັງແຮງງານລາວມີຄວາມຮູ້ວິທະຍາສາດສູງ, ມີເຄື່ອງມືທັນສະໄໝ ຈຶ່ງຈະຊອກຫາໄດ້ແຫຼ່ງວັດຖຸດິບມາປ້ອນໂຮງງານອຸດສາຫະກໍາປຸງແຕ່ງໄດ້ດໍາເນີນການຜະລິດ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ...ໆ

ເອກະສານອ້າງອີງ: (1) ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ, ປີ 2021, ໜ້າ 50.
(2) ບົດສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະຫັດຖະກໍາ (2021-2023) ແລະທິດທາງແຜນການ 2023-2025, ໜ້າ 02.
(3) ບົດສະຫຼຸບກາງສະໄໝແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະການຄ້າ 5 ປີ (2021-2025), ໜ້າ 03.

ການຈັດຕັ້ງປະຕິບັດວຽກງານ ຕ້ອງເຂົ້າເຖິງປະຊາຊົນຫຼາຍຂຶ້ນ ຕ້ອງທຳລາຍ "ຮົ້ວອ້ອມ", "ປະຕູແກ້ວ" ແລະ "ຝາກັ້ນນາມມະທຳ"

ແປ ແລະ ຮຽບຮຽງໂດຍ: ສຸກສະຫວາດ ເທບພະວົງ

ຄຳເວົ້າທີ່ວ່າ: ຮົ້ວອ້ອມ, ປະຕູແກ້ວ ແລະ ຝາກັ້ນນາມມະທຳ ເປັນຄຳເວົ້າທີ່ຄົນຈີນຄຸ້ນເຄີຍ ແລະ ໄດ້ຍິນກັນມາຫຼາຍທີ່ສຸດ ດັ່ງປະທານ ສີຈິ້ນຜິງ ເລຂາທິການໃຫຍ່ສູນກາງພັກກອມມູນິດຈີນ ໄດ້ນຳໃຊ້ຄຳເວົ້າດັ່ງກ່າວມາປຽບທຽບເຖິງສະມາຊິກພັກ-ພະນັກງານ ເປັນຕົ້ນແມ່ນພະນັກງານການນຳ ທີ່ມີລັກສະນະຫ່າງເຫີນຈາກຂັ້ນຮາກຖານ ແລະ ຫ່າງເຫີນຈາກປະຊາຊົນ, ເນັ້ນຢ້ຳໃຫ້ທຳລາຍສິ່ງບັງກັ້ນເຫຼົ່ານີ້ອອກ ເພື່ອໃຫ້ເຂົ້າເຖິງປະຊາຊົນໄດ້ຢ່າງແທ້ຈິງ.

ການປະພຶດຕົວຂອງສະມາຊິກພັກ-ພະນັກງານ ໂດຍສະເພາະພະນັກງານການນຳ ຈະມີຜົນສະທ້ອນດ້ານດີ, ດ້ານອ່ອນເຖິງໜ່ວຍພັກ ແລະ ອົງການຈັດຕັ້ງຂອງພັກ-ລັດ. ປະທານ ສີຈິ້ນຜິງ ມັກນຳໃຊ້ການປຽບທຽບທີ່ມີພາບຈິນຕະນາການຢ່າງຊັດເຈນມາເນັ້ນຢ້ຳເຖິງຄວາມສຳຄັນຂອງບັນຫານີ້ ເຊັ່ນ: ຮັບເອົາກິນອາຍທ້ອງຖິ່ນ ເພື່ອເຕີມພະລັງ ຊີ້ໃຫ້ເຫັນການເຂົ້າເຖິງຂັ້ນຮາກຖານຢ່າງເລິກເຊິ່ງ ແລະ ຄວາມສຳຄັນໃນການຖອດຖອນບົດຮຽນກັບປະຊາຊົນ. ພ້ອມທັງນຳໃຊ້ຄຳສັບທີ່ປະຊາຊົນມັກເຍາະເຍີ້ຍເຊັ່ນ: ເຮັດເອົາໜ້າ ມາປຽບທຽບໃສ່ພະນັກງານການນຳບາງຄົນທີ່ມີການປະພຶດຕົວບໍ່ສອດຄ່ອງກັບຄວາມເປັນຈິງ. ແຕ່ຄວາມສຳຄັນຂອງຄຳວ່າ: ທຳລາຍ ຮົ້ວອ້ອມ, ປະຕູແກ້ວ ແລະ ຝາກັ້ນນາມມະທຳ ແມ່ນເນັ້ນເຖິງບັນຫາ ແລະ ວິທີແກ້ໄຂການປະຕິບັດໜ້າທີ່ໃຫ້ເຂົ້າເຖິງປະຊາຊົນຫຼາຍທີ່ສຸດ ເຊິ່ງບັນຫານີ້ມີຜົນກະທົບໂດຍກົງຕໍ່ບັນດາສະມາຊິກພັກ-ພະນັກງານ.

ໃນໄລຍະການປະຕິວັດ ລະຫວ່າງ ພັກກັບປະຊາຊົນ ແມ່ນບໍ່ເຄີຍມີຄຳເວົ້າທີ່ວ່າ ຮົ້ວອ້ອມ, ປະຕູແກ້ວ ແລະ ຝາກັ້ນນາມມະທຳ, ພັກກັບປະຊາຊົນປຽບດັ່ງປາກັບນ້ຳ ທີ່ເພິ່ງພາອາໄສຢູ່ນຳກັນ ຕັດຂາດກັນບໍ່ໄດ້. ພາຍຫຼັງຍາດເອົາອຳນາດທາງການເມືອງມາໄດ້ ພັກກໍ່ຍັງໃຫ້ຄວາມສຳຄັນໃນການຮັກສາສາຍພົວພັນກັບປະຊາຊົນໄດ້ດີທີ່ສຸດ. ແຕ່ໃນການກຳອຳນາດທາງການເມືອງໃນປະຈຸບັນ ພັດແຕກຕ່າງຈາກໄລຍະປະຕິວັດ, ມີສະມາຊິກພັກ-ພະນັກງານ ບາງຄົນຄິດວ່າ, ການສ້າງສາຍສຳພັນກັບປະຊາຊົນຢ່າງສະໜິດແໜ້ນ ບໍ່ແມ່ນສິ່ງຈຳເປັນຕໍ່ໄປ. ດ້ວຍເຫດນັ້ນ, ຈຶ່ງມີສະມາຊິກພັກ-ພະນັກງານຈຳນວນບໍ່ໜ້ອຍ ທີ່ຄ່ອຍໆຫ່າງເຫີນອອກຈາກປະຊາຊົນ ແລະ ກໍ່ໃຫ້ເກີດມີກຳແພງກີດກັ້ນຂຶ້ນມາ.

ມີພະນັກງານຈຳນວນໜຶ່ງ ຄິດແບ່ງພັກແຍກພວກ, ເຫັນປະຊາຊົນແຕກຕ່າງຈາກຕົນ, ຫຼີກອອກຈາກປະຊາຊົນເໝືອນກັບໜີເສືອໂຄ່ງຮ້າຍ. ດ້ວຍເຫດນັ້ນ, ໃນບາງທ້ອງຖິ່ນ ແລະ ບາງກະຊວງ-ອົງການ ຍັງມີປະກົດການ ເຂົ້າເຖິງໄດ້ຍາກ ພະນັກງານມີສີໜ້າບູດບຶ້ງ, ໃຫ້ການບໍລິການທີ່ບໍ່ດີ ແລະ ອື່ນໆ.

ຄຳບູຮານໄດ້ກ່າວໄວ້ວ່າ: ຜູ້ນຳພາທ່ຽງທຳ, ເຮັດແທ້ທຳຈິງ ຜູ້ຕາມຄົນໃດທີ່ຈະບໍ່ທ່ຽງທຳ ແລະ ປະຕິບັດຕາມ. ການປັບປຸງແກ້ໄຂແບບແຜນວິທີເຮັດວຽກ ແລະ ແກ້ໄຂບັນຫາການເຂົ້າເຖິງປະຊາຊົນ ກ່ອນອື່ນໝົດຕ້ອງໃຫ້ການນຳຂັ້ນສູງ ຫຼື ການນຳຂອງແຕ່ລະຂັ້ນ ເປັນແບບຢ່າງນຳໜ້າທາງດ້ານທັດສະນະການວາງຕົວ, ປຽບເໝືອນການວາງຕົວຂອງສະຫາຍເລຂາທິການໃຫຍ່ສູນກາງພັກ ປະທານ ສີຈິ້ນຜິງ ເຊິ່ງສະແດງອອກ ໃນເວລາທີ່ເພິ່ນລົງຮາກຖານ, ຢ້ຽມຢາມແຂວງເຫີເປີຍ

ເພິ່ນກໍ່ນັ່ງກິນເຂົ້າປາອາຫານບ້ານໆສາມສີ່ເບື່ອງກັບປະຊາຊົນໄດ້ຢ່າງສະໜິດສະໜົມ, ເວລາໄປລົງຮາກຖານຢ້ຽມຢາມເມືອງຫວູຮັ້ນ ພໍຮອດຈຸດທີ່ລົດໄປບໍ່ໄດ້ເພິ່ນກໍຈ້ອນຂາໂສ້ງຍ່າງລຸຍນໍ້າລຸຍຕົມ ພ້ອມທັງນໍາໜ້າພາທາງເຮັດເປັນແບບຢ່າງໃນການຜ່ານຜ່າອຸປະສັກໄປໜ້າ ໂດຍບໍ່ຫວັ່ນໄຫວຄອນແຄນ.

ສະນັ້ນ, ຖ້າຢາກທໍາລາຍ ຮົ້ວ, ປະຕູ ແລະ ຝາທີ່ກ່າວມານັ້ນ ກ່ອນອື່ນຕ້ອງເພີ່ມທະວີການສຶກສາອົບຮົມທາງດ້ານທັດສະນະຫຼັກໝັ້ນການເມືອງຂອງສະມາຊິກພັກ-ພະນັກງານ ໂດຍສະເພາະໃນຍຸກສະໄໝທີ່ເງື່ອນໄຂດ້ານຕ່າງໆມີການການປ່ຽນແປງໄປໃນທາງທີ່ດີຂຶ້ນ, ສະມາຊິກພັກ-ພະນັກງານ ຍິ່ງຕ້ອງໄດ້ເອົາໃຈໃສ່ໃນການຄົ້ນຄວ້າ, ສຶກສາຮໍ່າຮຽນ, ຕ້ານແນວຄິດຫ່າງເຫີນປະຊາຊົນ ແລະ ຮຽນຮູ້ຢ່າງເລິກເຊິ່ງຕໍ່ພາລະກໍາຂອງພັກທີ່ວ່າ: ພັກຕ້ອງບໍລິການປະຊາຊົນຢ່າງໝົດຈິດໝົດໃຈ. ຕັ້ງໜ້າຈັດຕັ້ງຜັນຂະຫຍາຍ 08 ແຜນແມ່ບົດຂອງສູນກາງພັກ ກ່ຽວກັບການປັບປຸງແບບແຜນວິທີເຮັດວຽກ ແລະ ການເຂົ້າເຖິງປະຊາຊົນຢ່າງໃກ້ຊິດ. ຄິດໃນບັນຫາທີ່ປະຊາຊົນຄິດ, ກັງວົນໃນບັນຫາທີ່ປະຊາຊົນກັງວົນ, ເອົາຊະຕາກໍາຂອງປະຊົນຜູກຕິດກັບອຸດົມການ, ຮັກແພງປະຊາຊົນດ້ວຍຄວາມຈິງອົກຈິງໃຈ ແລະ ໃຫ້ຄວາມເປັນຫວ່ງເປັນໃຍປະຊາຊົນເໝືອນດັ່ງຄົນໃນຄອບຄົວດຽວກັນ. ມີແຕ່ການຫັນປ່ຽນທີ່ຕັ້ງໜ້າ ຢ່າງເປັນຂະບວນເທົ່ານັ້ນພວກເຮົາຈຶ່ງສາມາດທໍາລາຍກໍາແພງກີດຂວາງທີ່ໜາຕຶບລະຫວ່າງສະມາຊິກພັກ-ພະນັກງານ ກັບປະຊາຊົນອອກໄດ້.

ນອກນັ້ນ, ພັກ-ລັດ ຕ້ອງເຂົ້າເຖິງປະຊາຊົນ ແລະ ໃຫ້ປະຊາຊົນເຂົ້າເຖິງພັກ-ລັດເຊັ່ນ: ສະມາຊິກພັກ-ພະນັກງານ ຕ້ອງໄປຫາ ຫຼື ເຂົ້າເຖິງປະຊາຊົນ, ບໍ່ຕ້ອງນັ່ງຢູ່ແຕ່ຫ້ອງການ ເພື່ອລໍຖ້າຮັບຟັງການລາຍງານ ຫຼື ເບິ່ງແຕ່ຂໍ້ມູນຕ່າງໆພຽງຢ່າງດຽວ ແຕ່ຕ້ອງໄດ້ລຸກຍ່າງອອກຈາກຫ້ອງການໄປເບິ່ງຢູ່ຂັ້ນຮາກຖານ, ໝັ່ນລົງໄປກວດກາ, ຢ້ຽມຢາມຖາມຂ່າວ, ໄປຖາມສະພາບຕ່າງໆກັບປະຊາຊົນ, ຮັບຟັງຫາງສຽງຂອງປະຊາຊົນ, ແກ້ໄຂບັນຫາໃຫ້ປະຊາຊົນ ແລະ ກໍາແໜ້ນບັນດາສະພາບການຂອງຂັ້ນຮາກຖານ ແລະ ຂອງປະຊາຊົນໃຫ້ທັນເວລາ; ສະມາຊິກພັກ-ພະນັກງານ ຕ້ອງໄດ້ ເຊື້ອເຊີນປະຊາຊົນມາຂັ້ນເທິງເລື້ອຍໆ ໝາຍຄວາມວ່າ: ເຊີນປະຊາຊົນເຂົ້າມາໃນຫ້ອງການ; ເພີ່ມທະວີການແນະນໍາຂັ້ນຕອນການເຮັດວຽກຂອງພັກ-ລັດໃຫ້ປະຊາຊົນຮັບຮູ້ເຂົ້າໃຈ ບັນດາຂໍ້ຫຍຸ້ງຍາກຕ່າງໆໃນການດໍາເນີນງານຂອງພັກ-ລັດໃຫ້ຫຼາຍຂຶ້ນ, ກ່ອນຈະສ້າງບັນດາແນວທາງຂອງພັກ, ແຜນນະໂຍບາຍຂອງລັດ ກໍ່ຕ້ອງໄດ້ລະດົມແນວຄວາມຄິດ ແລະ ຄໍາຄິດຄໍາເຫັນຈາກປະຊາຊົນໃຫ້ຫຼາຍຂຶ້ນ. ເມື່ອສະມາຊິກພັກ-ພະນັກງານ ແລະ ປະຊາຊົນຂັ້ນຮາກຖານ ມີການພົວພັນແລກປ່ຽນກັນຫຼາຍຂຶ້ນ, ຄວາມເຂົ້າໃຈ ແລະ ຄວາມເຫັນອົກເຫັນໃຈເຊິ່ງກັນ ແລະ ກັນ ກໍ່ຈະແໜ້ນແຟ້ນຂຶ້ນກວ່າເກົ່າ. ເຮັດໃຫ້ຄວາມເຂົ້າໃຈຜິດຂອງປະຊາຊົນທີ່ມີຕໍ່ສະມາຊິກພັກ-ພະນັກງານ, ການແກ້ໄຂ ຫຼື ທໍາລາຍບັນດາກໍາແພງກັ້ນຕ່າງໆເຫຼົ່ານັ້ນກໍ່ຈະຄ່ອຍໆຖືກແກ້ໄຂໃຫ້ໝົດໄປເທື່ອລະກ້າວ.

ທິດສະດີເທິງໜ້າເຈ້ຍມັນຍັງເຂີນຕື້ນ, ຢາກຮູ້ທ່ອງແທ້ໃຫ້ລົງເລິກປະຕິບັດດ້ວຍຕົນເອງ. ການຫັນປ່ຽນແນວທາງການເຮັດວຽກ, ບໍ່ພຽງແຕ່ຕ້ອງມີສະຕິຮູ້ສຶກເຖິງຄວາມສໍາຄັນຕໍ່ສາຍພົວພັນຂອງປະຊາຊົນທາງເທົ່ານັ້ນ, ແຕ່ສິ່ງສໍາຄັນກວ່ານັ້ນ ບັນດາສະມາຊິກພັກ-ພະນັກງານທຸກຄົນຕ້ອງເຮັດ ແລະ ປະຕິບັດຕົວຈິງດ້ວຍຕົນເອງ. ສະມາຊິກພັກ-ພະນັກງານ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດ ແລະ ວາງເສັ້ນທາງເດີນທີ່ຖືກຕ້ອງ ຮົ້ວອ້ອມ, ປະຕູແກ້ວ ແລະ ຝາກັ້ນນາມມະທໍາ ລະຫວ່າງສະມາຊິກພັກ-ພະນັກງານ ກັບປະຊາຊົນ ຈຶ່ງຈະສາມາດທໍາລາຍໃຫ້ພັງທະລາຍລົງໄດ້ຢ່າງສິ້ນເຊີງ...ຯ

ແຫຼ່ງຂໍ້ມູນ ຄັດຈາກປຶ້ມ: ພະລັງວາທະສິນ ຂອງປະທານ ສີຈິ້ນຜິງ ສະບັບປີ 2022, ໜ້າ 88-90.

ວາລະສານກໍ່ສ້າງພັກ, ສະບັບ 268 ປະຈຳປີ 2025/1

ຜູ້ຊີ້ນຳ

ທ່ານ ປອ ວິສຸກ ພິມພິທັກ
ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

ຄະນະບັນນາທິການ

ທ່ານ ພອນສະຫວັນ ໄຊຊະນະ ຫົວໜ້າ
ທ່ານ ນ. ແກ້ວຕາ ພັນດານຸວົງ ຮອງ
ທ່ານ ນ. ແກ້ວໃຈ ແສງມີໄຊ ຮອງ
ທ່ານ ຄອນຄຳ ໂສລັດຕະນະວົງ ຮອງ

ບັນນາທິການ, ອອກແບບ ແລະ ຈັດໜ້າ

ທ່ານ ນ. ແສງວອນ ແກ້ວນິນັນລັດ
ທ່ານ ບານ ມູນປະເສີດ
ທ່ານ ນ. ພິດສະໄໝ ວິໄລຮັກ
ທ່ານ ນ. ແສງຄຳ ຈິດຕະວົງ

- ຂໍ້ຕົກລົງ 02/ ຄຈສພ, ທະບຽນພິມ 255/ສມຊ.
- ບກ ໂທ: 020 59899399, 93927284.
- E-Mail: Korsangphakmagazine@gmail.com
- ແຈ້ງບົດສົ່ງທາງ E-Mail: 020 59846399

ຮັບຜິດຊອບບໍລິຫານ-ຈຳໜ່າຍ

ທ່ານ ນ. ແສງແກ້ວ ພິມມະວົງ
ທ່ານ ພອນສະຫວັນ ລາຊະບັນເທົາ (ຈຳໜ່າຍ)
ທ່ານ ນ. ຈັນອາລີຈິດ ສໍພາບມີໄຊ
ທ່ານ ນ. ອານຸລັກ ຈິດຕິລາດ

ສາລະບານ

✍ ນາມປາກກາ ✍	✍ ຫົວຂໍ້ບົດ	✍ ໜ້າ
	ບົດນຳ	
ພິດສະໄໝ ວິໄລຮັກ	-ບາງບົດຮຽນກ່ຽວກັບວຽກງານຈັດຕັ້ງ,ກໍ່ສ້າງພັກ-ພະນັກງານຂອງພັກປະຊາຊົນ	1
	ທິດສະດີ ແລະ ພຶດຕິກຳ	
ກະຕ່າຍທອງ ຈູມທຸມມາລາ	- ແນວຄິດ ປະທານ ໄກສອນ ພົມວິຫານ ກ່ຽວກັບການປັບປຸງອົງການບໍລິຫານລັດ	7
ແກ້ວໃຈ ແສງມີໄຊ	-ບາງຕອນບົດສຳພາດຂອງ ສະຫາຍ ອາລຸນໄຊ ສູນນະລາດ	13
ແສງວອນ ແກ້ວນິນັນລັດ	- ກອງປະຊຸມສະຫຼຸບວຽກງານຈັດຕັ້ງ ກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກ	16
ພອນສະຫວັນ ໄຊຊະນະ	- ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກເມືອງນ້ຳບາກ ຄັ້ງທີ X ໄດ້ຮັບຜົນສຳເລັດ	21
ສູນທອນ ທອງຊະນະ	- ໜຶ່ງສະໄໝແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາ ພາຍໃຕ້ການ	24
ແສງຄຳ	- ອົງຄະນະພັກເມືອງຜາໄຊ ເອົາໃຈໃສ່ນຳພາ-ຊີ້ນຳຢ່າງຮອບດ້ານ ເຮັດໃຫ້ເມືອງ	29
	ຄົ້ນຄວ້າ-ແລກປ່ຽນ	
ພອນສະຫວັນ ໄຊຊະນະ	-ບາງບົດຮຽນທີ່ຖອດຖອນໄດ້ໃນການດຳເນີນກອງປະຊຸມໃຫຍ່ເມືອງທຳອິດ	33
ປອ ຈັນສຸລິນ ອິນຄຳແສງ	-ຖືເອົາປະຊາຊົນເປັນກົກແລະເຄື່ອນໄຫວຕາມແນວທາງມະຫາຊົນ	37
ເພັດພາພອນ ພາສີ	-ການກໍ່ສ້າງ-ບຳລຸງພະນັກງານຢູ່ແຂວງສາລະວັນ	40
ສໍລະພົງ ລາດຊະວົງ	-ຍົກສູງບົດບາດການນຳພາຂອງຄະນະພັກແຕ່ລະຂັ້ນຢູ່ເມືອງຫີນເຫີບ	44
	ຄວາມຮູ້ຮອບຕົວ	
ພັນຕາວັນ ຫຼ້າຄຳສາຍ	-ການພັດທະນາອຸດສາຫະກຳປຸງແຕ່ງຢູ່ປະເທດເຮົາ	46
	ບົດຮຽນຕ່າງປະເທດ	
ສຸກສະຫວາດ ເທບພະວົງ	-ການຈັດຕັ້ງປະຕິບັດວຽກງານຕ້ອງເຂົ້າເຖິງປະຊາຊົນຫຼາຍຂຶ້ນ ຕ້ອງທຳລາຍ	52
✍✍✍✍✍	-ສາລະບານ	54